ມີຜົນສັກສິດນຳໃຊ້ໃນເດືອນ ມີນາ 2026

ທະນາຄານ ກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ແລະບັນດາບໍລິສັດໃນກຸ່ມທຸລະກິດທາງການເງິນຂອງທະນາ ຄານ ກຸງສີ ຈຳກັດ (ມະຫາຊົນ) ອີງຕາມລາຍຊື່ທີ່ລະບຸຢູ່ໃນເອກະສານຊ້ອນທ້າຍ ທີ່ຄັດຕິດມາກັບປະກາດການຄຸ້ມຄອງຂໍ້ມູນສ່ວນບຸກຄົນສະບັບນີ້ (ເອີ້ນລວມກັນວ່າ **"ກຸ່ມກຸງສີ"**) ຮັບຮູ້ເຖິງຄວາມສຳຄັນຂອງຂໍ້ມູນຂອງທ່ານ. ດັ່ງນັ້ນ ຈຶ່ງໄດ້ອອກປະກາດການຄຸ້ມຄອງຂໍ້ມູນສ່ວນບຸກຄົນສະບັບນີ້ (**"ປະກາດ"**) ເພື່ອຊີ້ແຈ້ງໃຫ້ທ່ານຊາບເຖິງລາຍລະອຽດກ່ຽວກັບການເກັບກຳ, ນຳໃຊ້, ເປີດເຜີຍ ຫຼື ໂອນຂໍ້ມູນສ່ວນບຸກຄົນ ແລະຂໍ້ມູນອື່ນໆທີ່ກ່ຽວກັບທ່ານ (ເອີ້ນລວມກັນວ່າ **"ຂໍ້ມູນ"**)

ກ. ປະກາດນີ້ໃຊ້ກັບໃຜແດ່

ປະກາດສະບັບນີ້ບັງຄັບໃຊ້ກັບບຸກຄົນພາຍນອກທີ່ກຸ່ມກຸງສີມີສາຍພົວພັນນຳ ຊຶ່ງລວມທັງການດຳເນີນທຸລະກຳທັງໃນປະຈຸບັນ ແລະໃນອະນາຄົດ ແລະບຸກຄົນພາຍນອກທີ່ເປັນເຈົ້າຂອງຂໍ້ມູນສ່ວນບຸກຄົນທີ່ກຸ່ມກຸງສີມີການເກັບກຳ, ນຳໃຊ້, ເປີດເຜີຍ ຫຼື ໂອນ ຕາມລັກສະນະການດຳເນີນທຸລະກິດປົກກະຕິຂອງກຸ່ມກຸງສີ ຫຼື ໃນການສະເໜີຜະລິດຕະພັນ ແລະບໍລິການ (ເຊັ່ນ: ບໍລິການເປີດບັນຊີເງິນຝາກ, ບໍລິການບັດເຄຣດິດ, ບໍລິການສິນເຊື່ອ, ບໍລິການສິນເຊື່ອສ່ວນບຸກຄົນ, ບໍລິການນາຍໜ້າປະກັນໄພ, ບໍລິການເຊົ່າຊື້, ບໍລິການເຊົ່າສິນເຊື່ອ, ບໍລິການກອງທຶນ, ບໍລິການຫຼັກຊັບ) (**"ຜະລິດຕະພັນ ແລະບໍລິການ"**) ທີ່ຂຶ້ນກັບປະເພດຂອງຜະລິດຕະພັນ ແລະບໍລິການທີ່ບຸກຄົນພາຍນອກສະໝັກ ຫຼື ຂໍໃຊ້ບໍລິການຈາກກຸ່ມກຸງສີ ຊຶ່ງລວມເຖິງ

(1) ລູກຄ້າບຸກຄົນທົ່ວໄປ ລວມທັງຜູ້ປະກອບການຮ້ານຄ້າທີ່ເປັນບຸກຄົນທົ່ວໄປ;
(2) ຄູ່ຄ້າ ແລະຜູ້ໃຫ້ບໍລິການທີ່ເປັນບຸກຄົນທົ່ວໄປ;
(3) ກຳມະການ, ຜູ້ຕາງໜ້າ, ຜູ້ຖືຮຸ້ນ, ຕົວແທນ, ພະນັກງານ ແລະບຸກຄົນອື່ນໆທີ່ມີສະຖານະດຽວກັນ (ເອີ້ນລວມກັນວ່າ **"ບຸກຄົນທີ່ພົວພັນກັນ"**) ຂອງ
    (ກ) ນິຕິບຸກຄົນ ແລະບໍລິສັດໃນເຄືອທີ່ເປັນລູກຄ້າຂອງກຸ່ມກຸງສີ ລວມທັງຜູ້ປະກອບການ ທີ່ເປັນນິຕິບຸກຄົນ;
    (ຂ) ພັນທະມິດຂອງກຸ່ມກຸງສີ (ເຊັ່ນ: ຜູ້ອອກຕາສານໜີ້, ບໍລິສັດປະກັນໄພ, ຕົວແທນຂອງສະຖາບັນການເງິນ);
    (ຄ) ຄູ່ຄ້າ ຫຼື ຜູ້ໃຫ້ບໍລິການທີ່ເປັນນິຕິບຸກຄົນ ລວມທັງນິຕິບຸກຄົນອື່ນໆທີ່ສະເໜີຜະລິດຕະພັນ ແລະບໍລິການໃຫ້ແກ່ກຸ່ມກຸງສີ;
    (ງ) ບໍລິສັດໃນເຄືອຂອງກຸ່ມກຸງສີ ແລະນິຕິບຸກຄົນອື່ນໆທີ່ເຂົ້າຮ່ວມ ຫຼື ຫວັງຈະເຂົ້າຮ່ວມ ຫຼື ມີສ່ວນກ່ຽວຂ້ອງໂຄງການກັບບໍລິສັດໃນເຄືອຂອງກຸ່ມກຸງສີ ທີ່ກ່ຽວຂ້ອງກັບເລື່ອງຂອງການລົງທຶນ ແລະການດຳເນີນທຸລະກິດ ລວມທັງພັນທະມິດທາງທຸລະກິດທີ່ມີຄວາມສົນໃຈຮ່ວມລົງທຶນ.
    ໃນປະກາດສະບັບນີ້ ໃຫ້ເອີ້ນບຸກຄົນຕາມ (ຂ) (ຄ) ແລະ (ງ) ເອີ້ນລວມກັນວ່າ **"ພັນທະມິດທາງທຸລະກິດ"**
(4) ຜູ້ໃຊ້ ແລະຜູ້ຮັບຜະລິດຕະພັນ ແລະບໍລິການ;
(5) ຜູ້ເຂົ້າຊົມເວັບໄຊທ໌ ແລະຜູ້ໃຊ້ເວັບໄຊທ໌ຂອງກຸ່ມກຸງສີ ລວມທັງແອັບພລິເຄຊັນໃນໂທລະສັບມືຖື ອຸປະກອນຄອມພິວເຕີ ແລະຊ່ອງທາງການສື່ສານອື່ນໆ;
(6) ບຸກຄົນອື່ນທີ່ກຸ່ມກຸງສີເກັບກຳຂໍ້ມູນສ່ວນບຸກຄົນ (ເຊັ່ນ: ກຳມະການ, ຜູ້ຕາງໜ້າ, ຜູ້ຖືຮຸ້ນ, ຕົວແທນ ພະນັກງານ ແລະ/ຫຼື ບຸກຄົນອື່ນທີ່ມີສະຖານະດຽວກັນຂອງບໍລິສັດ ທີ່ກຸ່ມກຸງສີເຂົ້າໄປຮ່ວມລົງທຶນ ຫຼື ມີທຸລະກຳນຳ, ຜູ້ຖືຮຸ້ນຂອງບໍລິສັດໃນກຸ່ມກຸງສີ, ຜູ້ຮັບມອບສິດຂອງຜູ້ຖືຮຸ້ນຂອງບໍລິສັດໃນກຸ່ມກຸງສີ, ຜູ້ຄ້ຳປະກັນທີ່ເປັນບຸກຄົນທົ່ວໄປ, ຜູ້ເຂົ້າຮ່ວມປະມູນຂາຍອອກສູ່ຕະຫຼາດ, ຜູ້ຕອບແບບສອບຖາມ)

ຂໍ້ (1) ເຖິງ (6) ເອີ້ນລວມກັນວ່າ **"ທ່ານ"**

ຂ. ການປ່ຽນແປງປະກາດ

ກຸ່ມກຸງສີອາດຈະແກ້ໄຂເພີ່ມເຕີມ ຫຼື ປັບປຸງປະກາດສະບັບນີ້ ລວມທັງລາຍຊື່ບໍລິສັດໃນກຸ່ມກຸງສີຕາມເອກະສານຊ້ອນທ້າຍຄັດຕິດມາກັບປະກາດສະບັບນີ້ ໃຫ້ເປັນປະຈຸບັນເປັນຄັ້ງຄາວ ໃນກໍລະນີທີ່ມີການປ່ຽນແປງແນວທາງປະຕິບັດ ຫຼື ນະໂຍບາຍຂອງກຸ່ມກຸງສີທີ່ກ່ຽວກັບການເກັບກຳ, ນຳໃຊ້, ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນສ່ວນບຸກຄົນ ຫຼື ໃນກໍລະນີທີ່ມີການປ່ຽນແປງຂອງກົດໝາຍທີ່ບັງຄັບໃຊ້ ກຸ່ມກຸງສີຈະແຈ້ງການປ່ຽນແປງດັ່ງກ່າວໃຫ້ທ່ານຊາບ ເພື່ອໃຫ້ທ່ານໄດ້ຮັບຂໍ້ມູນພຽງພໍ. ທັງນີ້ ກຸ່ມກຸງສີຂໍຄວາມຮ່ວມມືໃຫ້ທ່ານອ່ານປະກາດສະບັບນີ້ຢ່າງລະອຽດ ແລະໝັ່ນກວດສອບວ່າ ກຸ່ມກຸງສີໄດ້ດຳເນີນການປ່ຽນແປງຂໍ້ມູນໃດແດ່ໃນປະກາດສະບັບນີ້.

ຄ. ການເກັບກຳ, ນຳໃຊ້, ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນ ແລະການຄຸ້ມຄອງຂໍ້ມູນຂອງທ່ານ

ກຸ່ມກຸງສີໄດ້ອອກປະກາດສະບັບນີ້ ໂດຍມີການອະທິບາຍເຖິງລາຍລະອຽດຂອງການເກັບກຳ, ນຳໃຊ້ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນຂອງທ່ານ ເພື່ອໃຫ້ທ່ານຮັບຮູ້ເຖິງສິດ ແລະທາງເລືອກຕ່າງໆກ່ຽວກັບຂໍ້ມູນຂອງທ່ານໃນຖານະທີ່ເປັນເຈົ້າຂອງຂໍ້ມູນ ຕະຫຼອດຈົນວິທີການຕິດຕໍ່ກຸ່ມກຸງສີ ໃນກໍລະນີທີ່ທ່ານມີຂໍ້ສົງໄສ.

1. ຂໍ້ມູນສ່ວນບຸກຄົນທີ່ກຸ່ມກຸງສີເກັບກຳ

1.1. ປະເພດຂໍ້ມູນສ່ວນບຸກຄົນ

"ຂໍ້ມູນສ່ວນບຸກຄົນ" ຫມາຍເຖິງຂໍ້ມູນທີ່ກ່ຽວຂ້ອງກັບບຸກຄົນ ຊຶ່ງສາມາດລະບຸຕົວບຸກຄົນ ຫຼື ເຮັດໃຫ້ສາມາດລະບຸຕົວບຸກຄົນໄດ້. ທັງນີ້ ຫາກມີຂໍ້ມູນອື່ນໆທີ່ສາມາດລວມເຂົ້າກັບຂໍ້ມູນຂອງທ່ານໄດ້ ຫຼື ມີການໃຊ້ຂໍ້ມູນອື່ນໆເພື່ອສ້າງຂໍ້ມູນປະຫວັດສ່ວນຕົວ ກຸ່ມກຸງສີຈະຖືວ່າຂໍ້ມູນດັ່ງກ່າວເປັນຂໍ້ມູນສ່ວນບຸກຄົນ ກຸ່ມກຸງສີອາດຈະເກັບກຳ ຫຼື ໄດ້ຮັບຂໍ້ມູນປະເພດຕ່າງໆດັ່ງຕໍ່ໄປນີ້ ຊຶ່ງອາດຈະລວມເຖິງຂໍ້ມູນຂອງທ່ານ ທັງນີ້ ຂຶ້ນຢູ່ກັບລັກສະນະຂອງສາຍພົວພັນລະຫວ່າງທ່ານກັບກຸ່ມກຸງສີ ແລະປະເພດເຈົ້າຂອງຂໍ້ມູນຂອງທ່ານ.

(1) ໃນກໍລະນີທີ່ເປັນບຸກຄົນທົ່ວໄປ

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
ຂໍ້ມູນຊື່ ແລະຊື່ທີ່ເປັນອັກສອນຫຍໍ້	**ຂໍ້ມູນທີ່ລະບຸຊື່ເອີ້ນ, ຊື່ທີ່ໃຊ້ເພື່ອເອີ້ນ ຫຼື ກ່າວເຖິງທ່ານ** ເຊັ່ນ: ຄຳນຳໜ້າຊື່, ຕົວຫຍໍ້ຈາກຊື່, ຊື່ກາງ, ນາມສະກຸນ, ນາມສະ ກຸນກ່ອນແຕ່ງງານ, ນາມແຝງ ຫຼື ຊື່ທີ່ເຄີຍໃຊ້ ລວມທັງລາຍເຊັນ.
ຂໍ້ມູນກ່ຽວກັບລັກສະນະຂອງບຸກຄົນ	**ລາຍລະອຽດກ່ຽວກັບລັກສະນະຂອງທ່ານ** ເຊັ່ນ: ອາຍຸ, ວັນເດືອນປີເກີດ, ເພດ, ຄວາມສູງ, ນ້ຳໜັກ, ສະຖານະພາບການແຕ່ງງານ, ຈຳນວນລູກ, ສັນຊາດ, ປະເທດທີ່ເກີດ, ຄວາມເປັນພົນລະເມືອງ ແລະສະຖານະພາບ, ລາຍລະອຽດກ່ຽວກັບການເກນທະຫານ, ຂໍ້ມູນກ່ຽວກັບກິດຈະກຳຍາມຫວ່າງ ແລະ ຄວາມສົນໃຈ, ຮູບຖ່າຍ, ທັກສະການໃຊ້ພາສາ, ລາຍລະອຽດການເດີນທາງ, ການບັນທຶກສຽງ, ຜົນການເກັບກຳ ຂໍ້ມູນກ່ຽວກັບພຶດຕິກຳ ແລະຄວາມມັກ.
ຂໍ້ມູນການສຶກສາ	**ຂໍ້ມູນການສຶກສາ ແລະການເຮັດວຽກຂອງທ່ານ** ເຊັ່ນ: ວຸດທິການສຶກສາ ແລະ ການເຂົ້າສຶກສາ, ຜົນການສຶກສາ, ໃບອະນຸຍາດ, ສະມາຊິກຂອງອົງການຈັດຕັ້ງວິຊາຊີບ (ເຊັ່ນ: ສະມາຊິກສະພາທະນາຍຄວາມ, ສະມາຊິກວິສະວະກຳແຫ່ງປະເທດໄທ ສະມາຊິກສະພາການແພດ).
ຂໍ້ມູນກ່ຽວກັບການຈ້າງງານ	**ລາຍລະອຽດກ່ຽວກັບການຈ້າງງານ, ສະຖານະພາບການຈ້າງງານ ແລະ ປະຫວັດການຈ້າງງານຂອງທ່ານ** ເຊັ່ນ: ອາຊີບ, ຊັ້ນ, ຕຳແໜ່ງ, ໜ້າທີ່ການງານ, ໝາຍເລກທະບຽນນາຍຈ້າງ, ເລກບັດເຄຣດິດ ຫຼື ບັດເດບິດຂອງອົງກອນ, ສະຖານະໃບອະນຸ ຍາດເຮັດວຽກ, ລາຍລະອຽດການອະນຸຍາດເຮັດວຽກ, ຂໍ້ມູນອ້າງອີງ ແລະປະຫວັດຄວາມເປັນມາ (ບໍ່ນັບລວມປະຫວັດອາດຊະຍາກຳ), ເລກປະຈຳຕົວຜູ້ເສຍອາກອນ, ເລກປະຈຳຕົວພະນັກງານ, ຂໍ້ຮຽກຮ້ອງປະກັນໄພ, ເງິນຊົດເຊີຍແຮງງານ ປະຫວັດການຈ້າງງານ (ລວມທັງລາຍລະອຽດກ່ຽວກັບເງິນເດືອນ, ການເຂົ້າວຽກ ແລະຜົນປະໂຫຍດຕ່າງໆ) ວັນທີ່ຈ້າງງານ, ການບອກຍຸດເຊົາການຈ້າງງານ, ຊັບສິນທີ່ຢູ່ໃນຄວາມຄອບຄອງຂອງພະນັກງານ, ບອນເຮັດວຽກເດີມ, ບໍລິສັດທີ່ທ່ານເຮັດວຽກ ຫຼື ໄດ້ຮັບການຈ້າງງານ ຫຼື ບໍລິສັດ ທີ່ທ່ານຖືຮຸ້ນ ການປະເມີນຕ່າງໆ (ການປະເມີນຜົນການເຮັດວຽກ ແລະຄວາມເປັນໄປໄດ້) ລວມທັງການປະເມີນຜົນທາງດ້ານເຕັກໂນໂລຊີ, ການນຳໃຊ້ເຕັກໂນໂລຊີ (ເຊັ່ນ: ອິນເຕີເນັດ ອີເມວ).
ຂໍ້ມູນໃນການລະບຸຕົວຕົນທີ່ໜ່ວຍງານຈັດຕັ້ງພາກລັດອອກໃຫ້	**ຕົວເລກ ຫຼື ລາຍລະອຽດທີ່ໜ່ວຍງານຈັດຕັ້ງລັດອອກໃຫ້ເພື່ອລະບຸຕົວຕົນຂອງທ່ານ** ເຊັ່ນ: ເລກບັດປະຈຳຕົວ, ເລກໃບຂັບຂີ່ຍານພາຫະນະ, ເລກໃບອະນຸຍາດດຳເນີນທຸລະກິດ, ເລກທະບຽນຍານພາຫະນະ, ເລກໃບອະນຸຍາດປະກອບວິຊາຊີບ, ເລກໜັງສືຜ່ານແດນ ເລກທະບຽນຄົນຕ່າງດ້າວ ລາຍລະອຽດທະບຽນເຮືອນ ເລກປະຈຳຕົວຜູ້ຄ້ຳປະກັນຕົນ/ປະກັນສັງຄົມ, ເລກປະຈຳຕົວອື່ນໆ ທີ່ໜ່ວຍງານຈັດຕັ້ງພາກລັດອອກໃຫ້.

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
ຂໍ້ມູນດ້ານການເງິນ ແລະການເຮັດທຸລະກຳ	**ຂໍ້ມູນດ້ານການເງິນ, ສະຖານະພາບ ແລະປະຫວັດທາງການເງິນຂອງທ່ານ** ເຊັ່ນ: • ຂໍ້ມູນກ່ຽວກັບການກວດສອບປະຫວັດ, ໝາຍເລກບັນຊີທີ່ໃຊ້ກັບສະຖາບັນການເງິນ, ຊື່ສະຖາບັນການ ເງິນ (ລວມທັງບໍລິສັດບັດເຄຣດິດ), ປະຫວັດການເຮັດທຸລະກຳທາງການເງິນ, ປະຫວັດສິນເຊື່ອ, ລາຍລະອຽດກ່ຽວກັບທະນາຄານທີ່ໃຊ້, ການລົງທຶນ, ເງິນຝາກ, ປະຫວັດການຮຽກຮ້ອງຄ່າຊົດເຊີຍ, ລາຍຮັບ/ເງິນເດືອນ/ຄ່າທຳນຽມການໃຫ້ບໍລິການ/ຄ່າຊົດເຊີຍ ອື່ນໆ, ການຫັກເງິນເດືອນພະນັກງານຕາມຂໍ້ກຳນົດຂອງກົດໝາຍ, ການຫັກເງິນເດືອນພະນັກງານຕາມຄວາມສະໝັກໃຈ, ການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນ (ເຊັ່ນ: ຜົນປະໂຫຍດ, ການຊ່ວຍເຫຼືອລ້າ, ການໃຫ້ເງິນອຸດໜຸນ) ຂໍ້ມູນກ່ຽວກັບລາຍຮັບຂອງຄົວເຮືອນ. • ແຫຼ່ງທີ່ມາຂອງລາຍຮັບ, ຂະໜາດ/ອົງປະກອບຄົວເຮືອນ, ຂໍ້ມູນກ່ຽວກັບຍານພາຫະນະ ຫຼື ຊັບສິນ, ໂບນັດ, ລາຍລະອຽດທີ່ລະບຸຢູ່ໃນແບບບລາຍການສະແດງລາຍຮັບພາຍໃນປະເທດ, ບັນທຶກຂໍ້ມູນຊັບສິນ, ຮູບຖ່າຍຊັບສິນໃນລະຫວ່າງການລົງພື້ນທີ່ເພື່ອກວດຢ້ຽມ, ວົງເງິນຄ້ຳປະກັນສູງສຸດ ແລະຈຳນວນງວດຊຳລະ, ປະເທດທີ່ເປັນ ແຫຼ່ງທີ່ມາຂອງລາຍຮັບ, ກະແສເງິນສົດໃນບັນຊີທະນາຄານ, ໜັງສືຮັບຮອງຈາກທະນາຄານ, ວົງເງິນສິນເຊື່ອ, ໜັງສືຄ້ຳປະກັນຂອງທະນາຄານ, ລາຍລະອຽດກ່ຽວກັບໜີ້ສິນ, ຈຸດປະສົງຂອງການເປີດບັນຊີທະນາຄານ, ແຫຼ່ງທີ່ມາຂອງເງິນຝາກ, ລາຍງານຖານະການເງິນ, ຈຸດປະສົງຂອງການມີສາຍພົວພັນທາງທຸລະກິດ ຫຼື ການເຂົ້າເຮັດທຸລະກຳ, ການລົງທຶນ, ເງິນຝາກ. • ຂໍ້ມູນກ່ຽວກັບທັກສະທາງການເງິນ ແລະຄວາມເໝາະສົມດ້ານການລົງທຶນ, ປະສົບການ ແລະຄວາມຮູ້ກ່ຽວກັບການລົງທຶນ ແລະການເຮັດທຸລະກຳ. • ລາຍລະອຽດກ່ຽວກັບຊັບສິນລວມ, ໄລຍະເວລາໃນການພັກອາໄສຢູ່ໃນບ່ອນຢູ່ປະຈຸບັນ, ໜີ້ສິນທາງການເງິນທີ່ກ່ຽວຂ້ອງກັບສະຖານທີ່ພັກອາໄສ/ຍານພາຫະນະຕາມ ທີ່ລະບຸຢູ່ໃນຄູ່ມືການຈັດທະບຽນພາຫະນະ. • ຫຼັກຊັບຄ້ຳປະກັນ, ລາຍລະອຽດກ່ຽວກັບໜີ້ສິນ ທີ່ທ່ານມີກັບບຸກຄົນອື່ນ ທັງເປັນຜູ້ໃຫ້ກູ້ ແລະຜູ້ກູ້ ລວມທັງລາຍລະອຽດຂອງຫຼັກຊັບຄ້ຳປະກັນທີ່ໄດ້ມາ ແລະຈຳໜ່າຍໄປ ໄດ້ແກ່ສັງຫາລິມະຊັບ ແລະອະສັງຫາລິມະຊັບ ຕະຫຼອດຮອດກຳມະສິດ ແລະການປະເມີນຄ່າຂອງຫຼັກຊັບຄ້ຳປະ ກັນດັ່ງກ່າວ. • ຈຸດປະສົງໃນການສະໝັກຂໍສິນເຊື່ອ ການຊຳລະເງິນດາວ ໄລຍະການຊຳລະເງິນດາວ ວົງເງິນກູ້ ອັດຕາດອກເບ້ຍ. • ຂໍ້ມູນ ແລະປະຫວັດການເຮັດທຸລະກຳ ເຊັ່ນ: ປະຫວັດການຊື້ຂອງທ່ານ (ການຊື້/ເຊົ່າ/ສົ່ງຄືນສິນຄ້າ, ຜະລິດຕະພັນ ຫຼື ບໍລິການ, ເງິນຄ່າເຊົ່າ, ຜົນປະໂຫຍດຕອບແທນ) ທີ່ຢູ່ໃນການຈັດສົ່ງໃບແຈ້ງຍອດຊຳລະ, ໃບແຈ້ງໜີ້, ຂໍ້ມູນທີ່ປະກົດຢູ່ໃນໃບບິນເກັບເງິນ, ບັນທຶກຄຳສັ່ງ, ລາຍລະ ອຽດການເຮັດທຸລະກຳ ແລະລາຍລະອຽດຂອງຄູ່ສັນຍາ. • ຂໍ້ມູນກ່ຽວກັບການປະກັນໄພ ເຊັ່ນ: ເບ້ຍປະກັນໃນປະຈຸບັນ, ວົງເງິນຄຸ້ມຄອງຕາມສັນຍາ, ປະຫວັດການຮຽກຮ້ອງຄ່າຊົດເຊີຍ, ໝາຍເລກກຳມະທັນປະກັນໄພພາຫະນະແບບບັງຄັບ (Compulsory Third Party Insurance). • ຂໍ້ມູນກ່ຽວກັບສະຖານທີ່ຕັ້ງ ເຊັ່ນ: ແຜນທີ່ສະແດງທີ່ຕັ້ງຂອງເຮືອນ/ບ່ອນເຮັດວຽກ/ຊັບສິນທີ່ເປັນຫຼັກຊັບຄ້ຳປະກັນ, ຮູບຖ່າຍສະແດງສະຖານທີ່ດຳເນີນທຸລະກິດ, ລາຍລະອຽດກ່ຽວກັບເຮືອນ (ເຊັ່ນ: ທະບຽນເຮືອນ). • ຂໍ້ມູນບັນຊີ, ຂໍ້ມູນວົງເງິນ, ສະຖານະຄວາມເປັນລູກຄ້າ, ປະເພດບັນຊີທີ່ໃຊ້ບໍລິການ, ວັນທີເປີດບັນຊີ, ບັນທຶກທົບທວນບັນຊີ, ວົງເງິນແຕ່ລະບັນຊີ, ວົງເງິນລວມກັນທຸກປະເພດບັນຊີ, ມູນໜີ້ (Loan Outstanding), ຫຼັກປະກັນ (ເຊັ່ນ: ເງິນສົດ, ຫຼັກຊັບ, ໜ່ວຍລົງທຶນ, ຕົວຄ້ຳເງິນ, ພັນທະບັດ, ຕາສານໜີ້ ເປັນຕົ້ນ) ຂໍ້ມູນປະຫວັດການຊຳລະເງິນ ເປັນຕົ້ນ.

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
ຂໍ້ມູນກ່ຽວກັບບັດເຄຣດິດ/ເດບິດ	**ລາຍລະອຽດບັດເຄຣດິດຂອງທ່ານ** ເຊັ່ນ: ຈຳນວນບັດເຄຣ ດິດທີ່ຖື, ໝາຍເລກບັດ/ບັດເດບິດ, ຊື່ຜູ້ຖືບັດ, ວັນໝົດອາຍຸ ໝາຍເລກ CVV, ໝາຍເລກ CVC2, ໝາຍເລກ CID, ລະຫັດປະຈຳຕົວ, ລະຫັດ Short Code, ວັນທີອອກບັດ, ທະນາຄານທີ່ອອກບັດ, ປະເພດບັດ.
ຂໍ້ມູນກ່ຽວກັບກົມມະທັນປະກັນໄພ	**ຂໍ້ມູນຂອງທ່ານກ່ຽວກັບກົມມະທັນປະກັນໄພທັງສະບັບເດີມ ແລະປະຈຸບັນ** ລວມທັງຂໍ້ຕົກລົງ ແລະເງື່ອນໄຂທີ່ກ່ຽວຂ້ອງເຊັ່ນ: ຜູ້ຮັບປະກັນໄພ, ໝາຍເລກກົມມະທັນ, ປະເພດກົມມະທັນ (ເຊັ່ນ: ປະກັນໄພຊີວິດ, ປະກັນໄພສຸຂະພາບ, ປະກັນໄພລົດ, ປະກັນໄພຊັບສິນ, ປະກັນໄພການເດີນທາງ ແລະປະກັນໄພສຳລັບການດຳເນີນທຸລະກິດ) ວົງເງິນຄຸ້ມຄອງ ແລະວົງເງິນສູງສຸດ, ໂອກາດສ່ຽງ ຫຼື ຂໍ້ມູນທີ່ກ່ຽວຂ້ອງກັບການຢຽກຮ້ອງຄ່າຊົດເຊີຍ, ຂໍ້ມູນກ່ຽວກັບຊັບສິນທີ່ເອົາຄ້ຳປະກັນ (ເຊັ່ນ: ເຮືອນ, ຍານພາຫະນະ) ຂໍ້ມູນການຂັບຂີ່, ລາຄາ ແລະຈຳນວນ ເລກກົມມະທັນປະກັນໄພ, ເລກນາຍໜ້າ, ເງື່ອນໄຂ (ຖ້າມີ) ປະຫວັດການຊຳລະເງິນ ແລະການເຮັດລາຍການທີ່ກ່ຽວກັບກົມມະທັນປະກັນໄພຂອງລູກຄ້າ, ລາຍງານຖານະການເງິນ, ພາສີ, ລາຍໄດ້ ແລະ ບັນທຶກການຜິດນັດ.
ຂໍ້ມູນກ່ຽວກັບສາຍພົວພັນທາງສັງຄົມ	**ຂໍ້ມູນກ່ຽວກັບສາຍພົວພັນທາງສັງຄົມຂອງທ່ານ** ເຊັ່ນ: ສະຖານະພາບທາງການເມືອງ, ສາຍພົວພັນກັບກຳມະການ, ຝ່າຍຈັດການ ແລະບຸກຄົນທີ່ມີອຳນາດຄວບຄຸມຂອງກຸ່ມກຸ່ງສີສາຍພົວພັນກັບນິຕິບຸກຄົນອື່ນ (ເຊັ່ນ: ເປັນກຳມະການ, ຝ່າຍບໍລິຫານຈັດການ, ຜູ້ຖືຮຸ້ນ) ແລະສາຍພົວພັນອື່ນໆ.
ຂໍ້ມູນຄຸນສົມບັດທີ່ໃຊ້ໃນການແບ່ງກຸ່ມ	**ຂໍ້ມູນຄຸນສົມບັດທີ່ໃຊ້ໃນການແບ່ງກຸ່ມ** ເຊັ່ນ: ເຄື່ອງຊີ້ວັດດ້ານອາຍຸຄົວເຮືອນ, ຂໍ້ມູນລະຫັດພື້ນທີ່ທາງການຕະຫຼາດທີ່ກຳນົດ ຄາດຄະເນລາຍຮັບທີ່ລະບຸໄວ້, ຈຳນວນສະມາຊິກໃນຄອບຄົວຈຳນວນລົດທີ່ເປັນເຈົ້າຂອງ, ລາຍລະອຽດການເຂົ້າຮຽນໃນລະດັບຊັ້ນອຸດົມສຶກສາ, ປະເພດທີ່ຢູ່ອາໄສ ແລະຈຳນວນຜູ້ຢູ່ອາໄສ.
ຂໍ້ມູນກ່ຽວກັບຜະລິດຕະພັນ ແລະບໍລິການ	**ລາຍລະອຽດກ່ຽວກັບຜະລິດຕະພັນ ແລະບໍລິການທີ່ກຸ່ມກຸ່ງສີໃຫ້ບໍລິການແກ່ທ່ານ** ເຊັ່ນ: • ການເປີດໃຊ້ບັນຊີ, ການຕິດຕໍ່ ແລະສື່ສານກັບທ່ານກ່ຽວກັບຜະລິດຕະພັນ ແລະບໍລິການ (ລວມທັງແຈ້ງເຕືອນໃຫ້ທ່ານຊາບເມື່ອມີການປ່ຽນແປງ, ການປັບປຸງຂໍ້ມູນໃຫ້ເປັນປະຈຸບັນ, ການປັບປ່ຽນ ຫຼື ແກ້ໄຂຜະລິດຕະພັນ ແລະບໍລິການອື່ນໆ, ການຕິດຕາມຜົນກ່ຽວກັບການເຮັດລາຍ ການແຈ້ງເຕືອນກ່ຽວກັບການຕໍ່ອາຍຸຜະລິດຕະພັນປະກັນໄພ) ການອອກ ແລະສົ່ງມອບບັນຊີ, ບັດ, ແຊັກ, ໃບຢັ້ງຢືນ ຫຼື ເອກະສານອື່ນໆທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະ ບໍລິການໃຫ້ແກ່ທ່ານ ບໍ່ວ່າຈະຢູ່ໃນຮູບແບບໃດ, ການໃຫ້ບໍລິການແກ່ທ່ານຢ່າງຕໍ່ເນື່ອງ (ເຊັ່ນ: ການຕໍ່ອາຍຸບັດ, ບໍລິການຮັກສາບັນຊີເງິນກູ້, ບໍລິການຮັກສາກົມມະທັນປະກັນໄພ, ການບໍລິການກ່ຽວກັບການຊື້ຂາຍກອງທຶນລວມ, ການປ່ຽນແປງຫຼັກຊັບ, ການບໍລິຫານຈັດການຫຼັກຊັບທີ່ໄດ້ມາຈາກການສືບທອດມໍລະດົກ), ການໃຫ້ບໍລິການກ່ຽວກັບການໄຖ່ຖອນ (ເຊັ່ນ: ຫຼັກຊັບຄ້ຳ ປະກັນ, ຫຼັກຊັບ), ການປິດບັນຊີຂອງທ່ານ ແລະດຳເນີນການໃດໜຶ່ງ ເພື່ອບອກຍົກເລີກການໃຫ້ບໍລິການແກ່ທ່ານ, ລາຍລະອຽດສັນຍາ (ເຊັ່ນ: ວັນທີຂອງສັນຍາ).

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
ຂໍ້ມູນກ່ຽວກັບຜະລິດຕະພັນ ແລະບໍລິການ	• ລາຍລະອຽດຂອງແບບຟອມເອກະສານ ແລະຄຳຮ້ອງຂໍເປີດບັນຊີ (ເຊັ່ນ: ລາຍລະອຽດກ່ຽວກັບຄຳຮ້ອງຂໍເປີດບັນຊີກອງທຶນລວມ ຊຶ່ງລວມເຖິງລາຍ ລະອຽດການເຮັດລາຍການກອງທຶນລວມ, ການຫັກພາສີສຳລັບເງິນປັນຜົນ ຈຸດປະສົງໃນການເປີດບັນຊີກອງທຶນລວມ ແລະລາຍລະ ອຽດທີ່ລະບຸຢູ່ໃນໃບ ຈອງຊື້ກອງທຶນ ຊຶ່ງລວມມີຕົວເລກຜູ້ຖືໜ່ວຍລົງທຶນ, ວັນທີຈອງຊື້, ຊື່ກອງທຶນ. ຈຳນວນຈອງຊື້, ເລກແຊັກ), ເລກທີສະມາຊິກ (ເຊັ່ນ: ສະມາຊິກກອງທຶນ ສຳຮອງລ້ຽງຊີບ) ປະເພດການບໍລິການ (ເຊັ່ນ: ບໍລິການກອງທຶນລວມ) ຈຳນວນໜ່ວຍລົງທຶນ, ລາຍລະອຽດການໂອນ (ເຊັ່ນ: ກອງທຶນທີ່ຕ້ອງໂອນ, ຈຳນວນເງິນທຶນທີ່ຈະໂອນ) ຂໍ້ມູນກ່ຽວກັບການປະເມີນຄວາມສ່ຽງກ່ຽວກັບ ການລົງທຶນ (ເຊັ່ນ: ຄວາມຮູ້ກ່ຽວກັບການລົງທຶນ, ຄວາມທົນທານຕໍ່ຄວາມສ່ຽງ, ປະສົບການການລົງ ທຶນໃນຫຼັກຊັບ, ແຜນການ ແລະທັດສະນະທີ່ມີຕໍ່ ການລົງທຶນ). • ບັນທຶກຄຳສັ່ງການເຮັດລາຍການ (ເຊັ່ນ: ຄຳສັ່ງຊື້ຂາຍ), ເລກຄຳຮ້ອງຂໍ ການຮັບປະກັນຕາມທີ່ໄດ້ຂະຫຍາຍໄລຍະເວລາ ເວລາທີ່ທ່ານຕ້ອງການໃຫ້ ກຸ່ມກຸງສີຕິດຕໍ່ ຊ່ອງທາງການສື່ສານ, ລະຫັດສາຂາ, ລະຫັດແຄມເປນ, ລາຍລະອຽດບໍລິສັດປະກັນໄພ, ຂໍ້ມູນທີ່ກ່ຽວກັບການປະກັນໄພ, ພາສີຫັກຢູ່ ບ່ອນຈ່າຍລາຄາຊື້ດ້ວຍເງິນສົດ, ການຊຳລະເງິນດາວ, ການລົງທຶນ, ຈຸດປະສົງ ຂອງການກູ້ຢືມເງິນ/ ໄຟແນນ, ວົງເງິນສິນເຊື່ອ, ອັດຕາດອກເບ້ຍ, ງວດການ ຜ່ອນຊຳລະ, ວັນທີຊຳລະເງິນງວດທຳອິດ, ຄ່າທຳນຽມການຈັດສົ່ງ, ພາສີ, ອັດຕາພາສີທີ່ນຳໃຊ້. • ການຂໍໃຊ້ບໍລິການຜູ້ຖືຮຸ້ນ ເຊັ່ນ: ຂໍປ່ຽນໃບຮຸ້ນ ແລະ ການຂໍໃຊ້ສິດໃນຖານະ ຜູ້ຖືຮຸ້ນ ເຊັ່ນ: ສິດໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ, ສິດໃນການຮັບ ເງິນປັນຜົນ. • ຂໍ້ມູນອື່ນໆທີ່ທ່ານໄດ້ໃຫ້ໄວ້ເປັນສ່ວນໜຶ່ງໃນການບໍລິການ ຫຼື ການບໍລິຫານ ສາຍພົວພັນ.
ຂໍ້ມູນກ່ຽວກັບຍານພາຫະນະ ຫຼື ຫຼັກຊັບຄ້ຳປະກັນ	**ລາຍລະອຽດກ່ຽວກັບຍານພາຫະນະ ຫຼື ຫຼັກຊັບຄ້ຳປະກັນຂອງທ່ານ** ເຊັ່ນ: ລາຄາທີ່ປະເມີນ/ຕົ້ນທຶນທີ່ມີການປະເມີນຄ່າຍີ່ຫໍ້ຍານພາຫະນະ, ປີການຜະລິດ, ປີຈົດທະບຽນ, ເລກທະ ບຽນຍານພາຫະນະ, ແຂວງຈົດທະບຽນ, ເລກຈັກ, ເລກຖັງ, ບັນທຶກເລກໄລຍະທາງ ແລະພາລະໜີ້ສິນທີ່ຕິດມາກັບຍານ ພາຫະນະ ແລະ/ຫຼື ລາຍລະອຽດອື່ນໆຕາມເອກະສານທະ ບຽນ (ເຊັ່ນ: ແຮງມ້າ/ຊີຊີ) ສຳເນົາເອກະສານສະແດງກຳມະສິດ ສິດ ຫຼື ສິດຄອບຄອງທີ່ດິນ ເຊັ່ນ: ໃບ ຕາດິນ, ສັນຍາຊື້ຂາຍ ນ.ສ 3. ນ.ສ.3ກ ແລະອື່ນໆ.
ຂໍ້ມູນກ່ຽວກັບການນຳໃຊ້ຂໍ້ມູນອອນໄລນ໌ ຂໍ້ມູນດ້ານ ເຕັກນິກ ຂໍ້ມູນເກັບກຳຜ່ານອຸປະກອນ	**ຂໍ້ມູນກ່ຽວກັບການນຳໃຊ້ຂໍ້ມູນອອນໄລນ໌ ຂໍ້ມູນດ້ານເຕັກນິກ ຂໍ້ມູນທີ່ເກັບກຳ ຜ່ານອຸປະກອນຂອງທ່ານ** ເຊັ່ນ: • ການລະບຸທີ່ຕັ້ງ, ຂໍ້ມູນການເຂົ້າເຖິງສື່ສຽງ/ວິດີໂອ/ຮູບພາບ/ກ້ອງ, ຂໍ້ມູນ ປະຕິທິນ, ຂໍ້ມູນບັນທຶກການໂທ, ບັນຊີລາຍຊື່ຜູ້ຕິດຕໍ່/ທີ່ຢູ່, ຂໍ້ຄວາມ ຫຼື ອີເມວ (ເນື້ອໃນອີເມວ) ເລກປະຈຳຕົວເຄື່ອງ (Unique Device Identifier: UDID), ທີ່ຢູ່ໄອພີ (IP Address). • ຂໍ້ມູນກ່ຽວກັບພຶດຕິກຳການນຳໃຊ້ງານເວັບໄຊທ໌/ການຕິດ ຕາມກິດຈະກຳ ການໃຊ້ງານເວັບໄຊທ໌ (Clickstream/ online website tracking) ປະຫວັດການຄົ້ນຫາ ປະເພດຂອງການເຂົ້າຊົມເວັບໄຊທ໌, ຂໍ້ມູນກ່ຽວກັບກິດ ຈະກຳຂອງຜູ້ໃຊ້ (ເຊັ່ນ: ໜ້າເວັບໄຊທ໌ ແລະເນື້ອໃນທີ່ທ່ານເຂົ້າເບິ່ງ,

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
ຂໍ້ມູນກ່ຽວກັບການນຳໃຊ້ຂໍ້ມູນອອນໄລນ໌ ຂໍ້ມູນດ້ານເຕັກນິກ ຂໍ້ມູນເກັບກຳຜ່ານອຸປະກອນ	ເວລາທີ່ໃຊ້ຢູ່ໃນເວັບໄຊທ໌ຂອງກຸ່ມກຸງສີ, ລັກສະນະ (Features) ທີ່ໃຊ້, ຈຳນວນຄັ້ງໃນການເຂົ້າຊົມເວັບໄຊທ໌ ເຖິງແມ່ນວ່າກຸ່ມກຸງສີບໍ່ຮູ້ຈັກຕົວຕົນຂອງຜູ້ໃຊ້ຄຸກກີ້ ຫຼື ເທັກໂນໂລຊີອື່ນໆທີ່ມີລັກສະນະຄ້າຍຄືກັນ ພາສາທີ່ໃຊ້ໃນການເຂົ້າຊົມເວັບໄຊທ໌. • ຂໍ້ມູນປະຈຳຕົວໃນການລັອກອິນລະຫັດທີ່ໃຊ້ເພື່ອຄວາມປອດໄພ ລະຫັດການເຂົ້າເຖິງ ຫຼື ລະຫັດຜ່ານ ຊື່ບັນຊີຜູ້ໃຊ້ງານ ລະຫັດຜ່ານເຂົ້າໃຊ້ບັນຊີ ໝາຍເລກ PIN ລາຍລະອຽດການເຂົ້າເຖິງ ເວລາທີ່ໃຊ້ໃນການເຂົ້າເຖິງ ລາຍລະອຽດການເຂົ້າສູ່ລະບົບຄັ້ງດຽວ Single Sign-on (SSO) ລະຫັດຜ່ານສຳລັບໃຊ້ຄັ້ງດຽວ (OTP) Token ແລະຂໍ້ຄວາມ SMS. • ຂໍ້ມູນ Telemetry ເປັນຂໍ້ມູນທີ່ໃຊ້ກຳກັບ ແລະອະທິ ບາຍຂໍ້ມູນຫຼັກ (Metadata) ໝາຍເລກເຄື່ອງ ແລະ ປະເພດເຄື່ອງ, ເຄືອຂ່າຍ, ລາຍລະອຽດການເຊື່ອມຕໍ່, ປະເພດ plug-in ຂອງບຼາວເຊີລວມທັງເວີຊັນ ລະບົບປະຕິບັດການ ແລະແພັດຟອມ, ການຕັ້ງຄ່າເຂດເວລາ ແລະທີ່ຕັ້ງ. • ຂໍ້ມູນກ່ຽວກັບວິທີທີ່ທ່ານໃຊ້ ແລະມີປະຕິສຳພັນກັບ ບໍລິການອອນໄລນ໌ ຫຼື ການໂຄສະນາຂອງກຸ່ມກຸງສີ ໜ້າເວັບໄຊທ໌ທີ່ທ່ານກົດລິ້ງເພື່ອໃຊ້ບໍລິການອອນໄລນ໌ຂອງກຸ່ມກຸງສີ (ເຊັ່ນ Referrer URL), ເວລາ ແລະຄວາມຖີ່ທີ່ໃຊ້ ບໍລິການອອນໄລນ໌ຂອງກຸ່ມກຸງສີ Crash Report ແລະເທັກໂນໂລຊີອື່ນໆໃນອຸປະກອນການສື່ ສານທີ່ທ່ານນຳໃຊ້ເພື່ອເຂົ້າເຖິງແພັດຟອມ. • ຂໍ້ມູນທີ່ບໍ່ມີໂຄງສ້າງ, ການລະບຸເອກະລັກ ດ້ວຍຄື້ນວິທະຍຸ (RFID) ລຸ້ນຂອງອຸປະກອນການສື່ສານ ຂໍ້ມູນ ໃນອຸປະກອນ MID (ເຊັ່ນ: ເລກປະຈຳຕົວທີ່ແອັບພລິ ເຄຊັນ LINE ສ້າງຂຶ້ນທີ່ບໍ່ແມ່ນລະຫັດປະຈຳຕົວ LINE) ລະຫັດສຳລັບການສົ່ງຄຳຕອບແບບສອບຖາມຜ່ານທາງແອັບພລິເຄຊັນ LINE ບັນຊີຜູ້ໃຊ້ແອັບພລິ ເຄຊັນ LINE Rabbit ID ບັນຊີຜູ້ໃຊ້ສື່ສັງຄົມອອນໄລນ໌ ເຊັ່ນ Google Facebook.
ຂໍ້ມູນກ່ຽວກັບພຶດຕິກຳ ຄວາມມັກ ທັດສະນະ ຄຳຖາມ ແລະ ຄວາມຄິດເຫັນ	**ຂໍ້ມູນກ່ຽວກັບພຶດຕິກຳ ຄວາມມັກ ທັດສະນະ ຄຳຖາມ ແລະ ຄວາມຄິດເຫັນຂອງທ່ານ** ເຊັ່ນ: ພຶດຕິກຳການບໍລິໂພກຜະລິດ ຕະພັນ ແລະບໍລິການທີ່ທ່ານສົນໃຈ, ຂໍ້ມູນອື່ນໆທີ່ທ່ານເລືອກສົ່ງໃຫ້ກຸ່ມກຸງສີ (ລວມທັງການສົ່ງຂໍ້ມູນຜ່ານສື່ສັງຄົມອອນໄລນ໌ ຫຼື ການສຳຫຼວດຄວາມຄິດເຫັນອອນໄລນ໌) ຄວາມຄິດເຫັນ, ຄຳຕິຊົມ, ຄຳຮຽກຮ້ອງ, ຄຳແນະນຳ, ຄຳຕອບແບບສຳຫຼວດຄວາມຄິດເຫັນ, ຄຳຖາມ ແລະຂໍ້ມູນທີ່ທ່ານສະໝັກໃຈໃຫ້ໃນລະຫວ່າງທີ່ມີຕິດຕໍ່ສື່ສານດ້ານການຕະຫຼາດ ຫຼື ການສື່ສານກ່ຽວກັບການບໍລິການລູກຄ້າ ລວມທັງຂໍ້ມູນຂອງທ່ານທີ່ເປີດເຜີຍຊື່ຜູ້ໃຊ້ສື່ສັງຄົມອອນໄລນ໌ຂອງທ່ານ.
ຂໍ້ມູນສຳລັບການປະຕິບັດຕາມກົດໝາຍປ້ອງກັນ ແລະປາບປາມການຟອກເງິນ, ກົດໝາຍປ້ອງກັນ ການຫຼົບລ້ຽງພາສີຂອງປະເທດສະຫະລັດອາເມລິກາ (Foreign Account Tax Compliance Act: FATCA) ແລະ ກຳນົດການແລກ ປ່ຽນຂໍ້ມູນ ເພື່ອ ປະຕິບັດຕາມຂໍ້ຕົກ ລົງລະຫວ່າງປະເທດກ່ຽວກັບ ພາສີອາກອນ (Common Reporting Standard: CRS)	**ຂໍ້ມູນກ່ຽວກັບ FATCA ແລະ CRS ຂອງທ່ານ** ເຊັ່ນ: ທ່ານມີສັນຊາດ ຫຼືສະຖານທີ່ເກີດກ່ຽວກັບສະຫະລັດອາເມລິກາ ຫຼື ບໍ່, ທ່ານໄດ້ຍົກເລີກສະຖານະພົນລະເມືອງສະຫະລັດອາເມລິກາຕາມກົດໝາຍ ຫຼື ບໍ່, ທ່ານມີໃບອະນຸຍາດໃຫ້ຢູ່ອາໄສ ແລະເຮັດວຽກຖາວອນຢູ່ໃນສະຫະລັດອາເມລິກາ ຫຼື ບໍ່, ທ່ານມີໜ້າທີ່ຕ້ອງຈ່າຍພາສີໃຫ້ກົມສວຍສາອາກອນໃນຂອງສະຫະລັດອາເມລິກາ ຫຼື ບໍ່, ທ່ານມີທີ່ຢູ່ປະຈຸບັນໃນສະຫະລັດ ຫຼື ບໍ ທ່ານມີທີ່ຢູ່ທາງໄປສະນີ ຫຼື ເບີໂທລະສັບໃນສະຫະລັດອາເມລິກາເພື່ອໃຊ້ຕິດຕໍ່ຫາທ່ານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບບັນຊີທີ່ເປີດ ຫຼື ຮັກສາໄວ້ກັບກຸ່ມກຸງສີ ຫຼື ບໍ່.

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະ ຕົວຢ່າງ
	ຂໍ້ມູນກ່ຽວກັບເຈົ້າຂອງບັນຊີ ເຊັ່ນ: ຊື່, ທີ່ຢູ່, ເລກປະຈຳຕົວຜູ້ເສຍພາສີ, ວັນເດືອນປີເກີດ ແລະສະຖານທີ່ເກີດ ແລະຂໍ້ມູນກ່ຽວກັບບັນຊີການເງິນ ເຊັ່ນ: ເລກບັນຊີ ແລະຍອດເງິນໃນບັນຊີ.
ຂໍ້ມູນບັນທຶກການຕິດຕໍ່ລະຫວ່າງທ່ານກັບກຸ່ມກຸງສີເພື່ອໃຊ້ປະກອບໃນການໃຫ້ບໍລິການ	**ຂໍ້ມູນບັນທຶກການຕິດຕໍ່ລະຫວ່າງທ່ານກັບກຸ່ມກຸງສີເພື່ອໃຊ້ປະກອບໃນການໃຫ້ບໍລິການ** ເຊັ່ນ: ບັນທຶກການສົນທະນາທາງໂທລະສັບລະຫວ່າງທ່ານກັບກຸ່ມກຸງສີ, ບັນທຶກຂໍ້ມູນສ່ຽງ ບັນທຶກການໃຊ້ໂທລະສັບ (Open Text Fields) ຂໍ້ມູນການໃຫ້ຄວາມຊ່ວຍເຫຼືອກ່ຽວກັບການຮ່ວມຈ່າຍ (Co-Pay)/ຄວາມຊ່ວຍເຫຼືອທາງດ້ານການເງິນ, ໝາຍເລກປະຈຳເທີມິນອລ (Terminal ID), ຂໍ້ມູນທີ່ຢູ່ໃນຟ້ຽຊັນ Litigation Holds ຫຼື ຂະບວນການ eDiscovery ຂໍ້ມູນທີ່ຕ້ອງໄດ້ເກັບຮັກສາໄວ້ເພື່ອຜົນປະໂຫຍດຂອງການຮ້ອງຟ້ອງດຳເນີນຄະດີ.
ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ	**ຂໍ້ມູນສ່ວນຕົວທີ່ມີຄວາມລະອຽດອ່ອນຂອງທ່ານ** ເຊັ່ນ: ຂໍ້ມູນປະຫວັດອາດຊະຍາກຳ, ຂໍ້ມູນກ່ຽວກັບສາສະໜາ, ຂໍ້ມູນຄວາມພິການ, ຂໍ້ມູນຊີວະພາບ (ເຊັ່ນ: ຂໍ້ມູນຮູບພາບຈຳລອງໃບໜ້າ, ຂໍ້ມູນຈຳລອງລາຍນິ້ວມື) ກຸ່ມກຸງສີອາດຈະເກັບກຳ**ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນຂອງທ່ານ** ຕາມທີ່ລະບຸໄວ້ຂ້າງເທິງ ໂດຍອີງຕາມຈຸດປະສົງທີ່ກຳນົດໄວ້ໃນຂໍ້ 2.3 ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ.

(2) ໃນກໍລະນີທີ່ທ່ານເປັນບຸກຄົນທີ່ພົວພັນກັນ

ປະເພດຂໍ້ມູນສ່ວນບຸກຄົນ	ລາຍລະອຽດ ແລະຕົວຢ່າງ
ຂໍ້ມູນທີ່ໃຊ້ລະບຸຕົວຕົນ	**ຂໍ້ມູນທີ່ໃຊ້ລະບຸຕົວຕົນ** ເຊັ່ນ: ຊື່, ຊື່ກາງ, ນາມສະກຸນ, ອາຍຸ, ຂໍ້ມູນກ່ຽວກັບການຈ້າງງານ, ເລກປະຈຳຕົວທີ່ທາງໜ່ວຍງານພາກລັດອອກໃຫ້ (ເຊັ່ນ: ເລກບັດປະຈຳຕົວ, ເລກທີໃບຂັບຂີ່ ເລກທີໃບອະນຸຍາດເຮັດວຽກ, ເລກທີໜັງສືຜ່ານແດນ, ເລກທະບຽນຄົນຕ່າງດ້າວ, ເລກປະຈຳຕົວຜູ້ເສຍພາສີ, ເລກປະຈຳຕົວຂອງຜູ້ຄ້ຳປະກັນຕົນ), ຂໍ້ມູນທີ່ກ່ຽວຂ້ອງກັບວຽກ (ເຊັ່ນ: ຕຳແໜ່ງ, ໜ້າວຽກ, ອາຊີບ, ຊື່ຕຳແໜ່ງ, ບໍລິສັດທີ່ທ່ານເຮັດວຽກ ຫຼື ໄດ້ຮັບການຈ້າງງານ ຫຼື ບໍລິສັດທີ່ທ່ານຖືຮຸ້ນ) ສັນຊາດ, ລາຍເຊັນ.
ຂໍ້ມູນຕິດຕໍ່ຂອງທ່ານໂດຍຜ່ານຊ່ອງທາງຕ່າງໆ	**ຂໍ້ມູນຕິດຕໍ່ຂອງທ່ານໂດຍຜ່ານຊ່ອງທາງຕ່າງໆ** ເຊັ່ນ: ເບີໂທລະສັບ, ທີ່ຢູ່ອີເມວ, ເລກປະຈຳຕົວບັນຊີຜູ້ໃຊ້ສື່ສັງຄົມອອນໄລນ໌, ເລກປະຈຳຕົວການສົນທະນາ (Chat ID), ທີ່ຢູ່ອາໄສ.

ຖ້າທ່ານບໍ່ສະໜອງຂໍ້ມູນຂອງທ່ານໃຫ້ກັບກຸ່ມກຸງສີ, ກຸ່ມກຸງສີອາດຈະບໍ່ສາມາດດຳເນີນການກ່ຽວກັບຜະລິດຕະພັນ ແລະບໍລິການໃຫ້ທ່ານຕາມຄຳຮ້ອງ ຫຼື ອາດຈະບໍ່ສາມາດປະຕິບັດໜ້າທີ່ບາງປະການທີ່ກຸ່ມກຸງສີມີຕໍ່ທ່ານ ຫຼື ອາດຈະບໍ່ສາມາດປະຕິບັດໜ້າທີ່ຕາມກົດໝາຍຂອງກຸ່ມກຸງສີໄດ້.

ຂໍ້ມູນສ່ວນບຸກຄົນຂອງບຸກຄົນພາຍນອກ

ຖ້າທ່ານມີການສະໜອງຂໍ້ມູນສ່ວນບຸກຄົນຂອງບຸກຄົນອື່ນໃຫ້ກັບກຸ່ມກຸງສີ, ທ່ານມີໜ້າທີ່ຮັບຜິດຊອບໃນການແຈ້ງລາຍລະອຽດຕາມປະກາດສະບັບນີ້ໃຫ້ບຸກຄົນດັ່ງກ່າວຊາບ ຕະຫຼອດຮອດການຂໍຄວາມຍິນຍອມຈາກບຸກຄົນນັ້ນ (ຖ້າເປັນກໍລະນີທີ່ຕ້ອງໄດ້ຮັບຄວາມຍິນຍອມ). ນອກຈາກນີ້, ທ່ານຍັງມີໜ້າທີ່ທີ່ຈະດຳເນີນການໃດໜຶ່ງ ເພື່ອໃຫ້ກຸ່ມກຸງສີສາມາດເກັບກຳ, ນຳໃຊ້, ເປີດເຜີຍ ຫຼື ໂອນຂໍ້ມູນສ່ວນບຸກຄົນຂອງບຸກຄົນນັ້ນໄດ້ຕາມກົດໝາຍທີ່ລະບຸໄວ້ໃນປະກາດສະບັບນີ້. ລາຍລະອຽດໃຫ້ເປັນໄປຕາມບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ ແລະສະໜອງຂໍ້ມູນເປັນຄົນກຳນົດ. ຕົວຢ່າງຂໍ້ມູນສ່ວນບຸກຄົນຂອງບຸກຄົນອື່ນມີດັ່ງຕໍ່ໄປນີ້:

- ຊື່, ນາມສະກຸນ, ອາຍຸ, ເພດ, ທີ່ຢູ່ໄປສະນີ/ອີເມລ, ເບີໂທລະສັບ, ເລກບັດປະຈຳຕົວ, ເລກໜັງສືຜ່ານແດນ;
- ເອກະສານທາງດ້ານການເງິນ, ເງິນເດືອນ, ຂໍ້ມູນທີ່ກ່ຽວຂ້ອງກັບວຽກ (ເຊັ່ນ: ຕຳແໜ່ງ, ໜ້າທີ່ວຽກງານ, ອາຊີບ, ບໍລິສັດທີ່ທ່ານເຮັດວຽກ ຫຼື ອ່າບຸກຄົນນັ້ນເຮັດວຽກ ຫຼື ບຸກຄົນນັ້ນຖືຮຸ້ນ);
- ສາຍພົວພັນກັບກຳມະການ, ຜູ້ບໍລິຫານ ແລະບຸກຄົນທີ່ມີອຳນາດຄວບຄຸມຂອງກຸ່ມກຸງສີ, ສາຍພົວພັນກັບນິຕິບຸກຄົນອື່ນໆ (ເຊັ່ນ: ກຳມະການ, ຜູ້ບໍລິຫານ, ຜູ້ຖືຮຸ້ນ) ຂໍ້ມູນຂອງບຸກຄົນທີ່ມີອຳນາດຄວບຄຸມການເຮັດທຸລະກຳຕ່າງໆຂອງບັນຊີກອງທຶນ ຕະຫຼອດຮອດຜູ້ຮັບໂອນ, ຜູ້ໄດ້ຮັບຜົນປະໂຫຍດ, ຂໍ້ມູນກ່ຽວກັບຜູ້ໄດ້ຮັບຜົນປະໂຫຍດທອດສຸດທ້າຍ (Ultimate Beneficial Owner) ຄະນະກຳມະການບໍລິສັດ/ກຳມະການ/ຜູ້ຖືຮຸ້ນ/ຜູ້ຕາງໜ້ານິຕິບຸກຄົນ, ຜູ້ຈັດການໃຫຍ່ບຸກຄົນອື່ນທີ່ສາມາດກຳນົດນະໂຍບາຍ ຫຼື ມີອຳນາດໃນການບໍລິຫານອ້ອມ;
- ສະຖານະພາບທາງດ້ານການເມືອງ ແລະສາຍພົວພັນກັບທ່ານ ເຊັ່ນ: ຍາດພີ່ນ້ອງທີ່ມີສະຖານະພາບທາງດ້ານການເມືອງ;
- ສະມາຊິກຄອບຄົວຂອງທ່ານ, ຜູ້ຖືບັນຊີຮ່ວມ, ຄູ່ສົມລົດ/ອະດີດຄູ່ສົມລົດ, ຂໍ້ມູນກ່ຽວກັບລູກຂອງທ່ານ (ເຊັ່ນ: ຊື່, ນາມສະກຸນ, ອາຍຸ, ເພດ, ເລກບັດປະຈຳຕົວທີ່ລັດອອກໃຫ້, ທີ່ຢູ່, ອີເມວ ແລະກິດຈະກຳທີ່ກ່ຽວຂ້ອງກັບລູກ), ພີ່ນ້ອງໃກ້ຊິດ, ຂໍ້ມູນເຈົ້າຂອງເຮືອນ;
- ຂໍ້ມູນກ່ຽວກັບຜູ້ຈັດການມໍລະດົກທີ່ສານແຕ່ງຕັ້ງ/ຜູ້ຈັດການມໍລະດົກຕາມພິໄນກຳ, ຜູ້ຖືບັນຊີຮ່ວມ, ຂໍ້ມູນກ່ຽວກັບພະຍານ, ຂໍ້ມູນກ່ຽວກັບຜູ້ຮັບໂອນສິດຕາມໃບມອບສິດ;
- ບຸກຄົນທີ່ໄດ້ຮັບສິດ, ບຸກຄົນທີ່ໄດ້ຮັບສິດໃຫ້ຢັ້ງຢືນ/ ອະນຸມັດ, ບຸກຄົນຜູ້ຕິດຕໍ່, ຜູ້ຊຳລະເງິນເບ້ຍປະກັນໄພ, ຜູ້ມີສິດລົງນາມ/ ຜູ້ມີສິດຖອນເງິນຝາກໃນບັນຊີ, ຜູ້ຄ້ຳປະກັນ, ບຸກຄົນອ້າງອີງ, ລູກຄ້າຂອງບຸກຄົນພາຍນອກ;
- ຜູ້ຈຳນຳ/ ຜູ້ຮັບຈຳນຳ, ຜູ້ຈຳນອງ/ ຜູ້ຮັບຈຳນອງ, ຜູ້ໃຫ້ເຊົ່າ/ ຜູ້ເຊົ່າ, ເຈົ້າໜ້າທີ່ທະບຽນຊັບສິນທີ່ທ່ານໃຊ້ເປັນຫຼັກຊັບຄ້ຳປະກັນ, ລູກໜີ້ຂອງທ່ານ, ຜູ້ຮັບໂອນ/ ຜູ້ຮັບເງິນ, ລູກໜີ້, ນາຍຈ້າງ;
- ຜູ້ຕິດຕໍ່ສຳລັບການຕິດຕາມໜີ້ ຫຼື ໃນກໍລະນີທີ່ທ່ານອາດຈະຮ້ອງຂໍໃຫ້ກຸ່ມກຸງສີເປີດເຜີຍຂໍ້ມູນສ່ວນບຸກຄົນຂອງບຸກຄົນອື່ນທີ່ບໍ່ແມ່ນຂໍ້ມູນຂອງທ່ານແກ່ບຸກຄົນພາຍນອກ;
- ໃນບາງກໍລະນີກຸ່ມກຸງສີອາດໄດ້ຮັບ ຫຼື ສາມາດເຂົ້າເຖິງຂໍ້ມູນສ່ວນບຸກຄົນຂອງບຸກຄົນອື່ນທີ່ບໍ່ອາດຫຼີກລ້ຽງໄດ້ ໂດຍຜ່ານແຫຼ່ງຂໍ້ມູນອື່ນ ເຊັ່ນ: ບໍລິສັດຫຼັກຊັບບໍລິຫານກອງທຶນກຸງສີ ຈຳກັດ (KSAM) ອາດເຂົ້າເຖິງ Single Form ຢູ່ໃນແພັດຟອມ Fund Contect ໂດຍບໍລິສັດບໍ່ຕ້ອງໃຊ້ຂໍ້ມູນສ່ວນບຸກຄົນຂອງບຸກຄົນດັ່ງກ່າວ ເພື່ອສະເໜີຜະລິດຕະພັນ ແລະບໍລິການ ເປັນ ຕົ້ນ.

ຂໍ້ມູນສ່ວນບຸກຄົນຂອງເດັກ ຄົນທີ່ບໍ່ມີຄວາມສາມາດ ແລະຄົນທີ່ເໝືອນບໍ່ມີຄວາມສາມາດ

ໃນກໍລະນີທີ່ກຸ່ມກຸງສີໄດ້ຮັບຮູ້ກ່ອນໜ້າແລ້ວວ່າເຈົ້າຂອງຂໍ້ມູນສ່ວນບຸກຄົນທີ່ກຸ່ມກຸງສີຈະຕ້ອງໄດ້ຮັບຄວາມຍິນຍອມນັ້ນແມ່ນເດັກ ຫຼື ເປັນບຸກຄົນທີ່ບໍ່ສາມາດໃຫ້ຄວາມຍິນຍອມໄດ້ດ້ວຍຕົນເອງຕາມກົດໝາຍ ກຸ່ມກຸງສີຈະບໍ່ເກັບກຳຂໍ້ມູນຈາກເດັກຈົນກວ່າຈະໄດ້ຮັບຄວາມຍິນຍອມຈາກຜູ້ທີ່ມີສິດໃນການເຮັດແທນເດັກ ແລະຈະບໍ່ເກັບກຳຂໍ້ມູນຈາກຄົນທີ່ເໝືອນບໍ່ມີຄວາມສາມາດ ແລະຄົນບໍ່ມີຄວາມສາມາດໄດ້ ຈົນກວ່າຈະໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງ ຫຼື ຜູ້ດູແລ (ແລ້ວແຕ່ກໍລະນີ).

ທັງນີ້ ຖ້າກຸ່ມກຸງສີບໍ່ຊາບມາກ່ອນວ່າເຈົ້າຂອງຂໍ້ມູນສ່ວນບຸກຄົນເປັນເດັກຜູ້ເຍົາ, ຄົນທີ່ເໝືອນບໍ່ມີຄວາມສາມາດ ຫຼື ຄົນທີ່ບໍ່ມີຄວາມສາມາດ ແຕ່ມາຊາບພາຍຫຼັງວ່າ ກຸ່ມກຸງສີໄດ້ມີການເກັບກຳຂໍ້ມູນສ່ວນບຸກຄົນຂອງເດັກ ໂດຍບໍ່ໄດ້ຮັບຄວາມຍິນຍອມເຫັນດີຈາກຜູ້ທີ່ມີສິດໃນການເຮັດແທນຜູ້ທີ່ເປັນເດັກ (ໃນກໍລະນີທີ່ຕ້ອງໄດ້ຮັບຄວາມຍິນຍອມ ແລະເດັກບໍ່ສາມາດໃຫ້ຄວາມຍິນຍອມໄດ້ດ້ວຍຕົນເອງຕາມກົດໝາຍ) ຫຼື ໄດ້ມີການເກັບກຳຂໍ້ມູນສ່ວນບຸກຄົນຂອງບຸກຄົນທີ່ເໝືອນບໍ່ມີຄວາມສາມາດ ຫຼື ຄົນທີ່ບໍ່ມີຄວາມສາມາດໂດຍບໍ່ໄດ້ຮັບຄວາມຍິນຍອມຈາກຜູ້ປົກຄອງ ຫຼື ຜູ້ດູແລ (ແລ້ວແຕ່ກໍລະນີ) ກຸ່ມກຸງສີຈະດຳເນີນການລຶບຂໍ້ມູນດັ່ງກ່າວໂດຍໄວ ຫຼື ອາດຈະເກັບກຳ, ນຳໃຊ້, ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນດັ່ງກ່າວ ສະເພາະໃນກໍລະນີທີ່ກຸ່ມກຸງສີສາມາດອີງໃສ່ເຫດຜົນທີ່ຖືກຕ້ອງຕາມກົດໝາຍປະການອື່ນນອກເໜືອຈາກຄວາມຍິນຍອມໄດ້.

ຄຸກກີ້

ກຸ່ມກຸງສີອາດຈະໃຊ້ ແລະເກັບຄຸກກີ້ ແລະລະບົບອື່ນໆ ຢູ່ໃນອຸປະກອນຂອງທ່ານ ຊຶ່ງເປັນສ່ວນໜຶ່ງຂອງຂັ້ນຕອນດ້ານຄວາມປອດໄພໃນການໃຫ້ບໍລິການຂອງກຸ່ມກຸງສີ ແລະເພື່ອໃຫ້ຜູ້ໃຊ້ໄດ້ຮັບປະສົບການທີ່ດີໃນການນຳໃຊ້ຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ. ທັງນີ້ ຂຶ້ນກັບບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ (ເຊັ່ນ: ຊື່ ຫຼື ທີ່ຢູ່ອີເມວຂອງທ່ານ). ຢ່າງໃດກໍຕາມ ຖ້າກຸ່ມກຸງສີມີຄວາມຈຳເປັນທີ່ຈະຕ້ອງນຳຂໍ້ມູນສ່ວນບຸກຄົນຂອງທ່ານເຊື່ອມໂຍງກັບຄຸກກີ້ ຫຼື ຂໍ້ມູນອື່ນໆທີ່ກ່ຽວກັບການນຳໃຊ້ຜະລິດຕະພັນ ແລະບໍລິການຂອງທ່ານ ກຸ່ມກຸງສີຈະຖືວ່າຄຸກກີ້ດັ່ງກ່າວ ແລະຂໍ້ມູນທີ່ລວມເຂົ້າກັນເປັນຂໍ້ມູນສ່ວນບຸກຄົນ.

1.2. ການເກັບກຳຂໍ້ມູນຂອງທ່ານ

ກຸ່ມກຸງສີຈະເກັບກຳຂໍ້ມູນຂອງທ່ານຜ່ານຊ່ອງທາງຕ່າງໆ ຊຶ່ງຊ່ອງທາງການເກັບກຳອາດຈະມີຄວາມແຕກຕ່າງກັນຕາມແຕ່ລະກໍລະນີ ໂດຍຂຶ້ນຢູ່ກັບບໍລິສັດໃນກຸ່ມກຸງສີທີ່ທ່ານຕິດຕໍ່ນຳ.

(1) ຊ່ອງທາງການໃຫ້ບໍລິການ ກຸ່ມກຸງສີອາດຈະເກັບກຳຂໍ້ມູນຈາກທ່ານໂດຍກົງ ບໍ່ວ່າຈະຜ່ານຊ່ອງທາງອອນໄລນ໌ ຫຼື ອອນໄລນ໌ (ເຊັ່ນ: ຜ່ານສາຂາ ຫຼື ຫ້ອງການຂອງກຸ່ມກຸງສີ, ການສຳພາດ, ໄປສະນີ, ເຄື່ອງ ATM, ພະນັກງານສິ່ງເອກະສານ) ຫຼື ໃຫ້ບໍລິການຜ່ານທາງໂທລະຄົມ (ເຊັ່ນ: ທາງໂທລະສັບ ອີເມວ ເວັບໄຊທ) ແອັບພລິເຄຊັນ Krungsri Internet Banking Laos (KIBL) ແພັດຟອມເຄືອຂ່າຍສັງຄົມອອນໄລນ (ເຊັ່ນ: ແອັບພລິເຄຊັນ LINE ແລະ Facebook) ຫຼື ຊ່ອງທາງການສົ່ງເສີມການຂາຍ ແລະການຕະຫຼາດ ອື່ນໆ.

(2) ຊ່ອງທາງອື່ນນອກຈາກການໃຫ້ບໍລິການ ກຸ່ມກຸງສີອາດຈະເກັບກຳຂໍ້ມູນຂອງທ່ານ ຜ່ານຊ່ອງທາງອື່ນນອກເໜືອຈາກການບໍລິການ ເຊັ່ນ: ເມື່ອທ່ານຕິດຕໍ່ກັບກຸ່ມກຸງສີກ່ອນທີ່ຈະເຮັດທຸລະກຳ, ສະໝັກໃຊ້ຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ, ຂໍເອກະສານສະເໜີ ງານ pitches ຫຼື ຂໍ້ສະເໜີຕ່າງໆ ຈາກກຸ່ມກຸງສີ, ເຂົ້າຮ່ວມໃນການເຮັດທຸລະກຳ ຫຼື ສັນຍາ (ບໍ່ວ່າທ່ານຈະຕິດຕໍ່ ແລະສະໜອງຂໍ້ມູນສ່ວນບຸກຄົນຜ່ານຊ່ອງທາງໃດກໍ່ຕາມ ເຊັ່ນ: ຜ່ານສາຂາຂອງກຸ່ມກຸງສີ, ແພັດຟອມເອເລັກໂທຣນິກ, ສື່ສັງຄົມອອນໄລນ໌ຂອງກຸ່ມກຸງສີ, ບັນຊີ LINE ທາງການຂອງກຸ່ມກຸງສີ) ຫຼື ຂໍ້ມູນທີ່ໄດ້ຮັບຈາກຫ້ອງເກັບເອກະສານ (Data Room) ທີ່ກ່ຽວຂ້ອງກັບການເຮັດທຸລະກຳ.

(3) ຈາກແຫຼ່ງອື່ນ ກຸ່ມກຸງສີອາດໄດ້ຮັບຂໍ້ມູນຂອງທ່ານຈາກແຫຼ່ງອື່ນໆ ເຊັ່ນ: ຂໍ້ມູນສາທາລະນະ ແລະ/ຫຼື ບໍລິສັດແມ່ ແລະ ບໍລິສັດໃນເຄືອຂອງກຸ່ມກຸງສີ (ເຊັ່ນ: ການໄດ້ຮັບຂໍ້ມູນຈາກຜູ້ໃຫ້ບໍລິການທີ່ກຸ່ມກຸງສີຈ້າງໃຫ້ເກັບກຳຂໍ້ມູນສ່ວນບຸກຄົນໃນນາມຂອງຕົນ), ພັນທະມິດຂອງກຸ່ມກຸງສີ (ເຊັ່ນ: ບໍລິສັດທີ່ສ້າງ co-branding ຮ່ວມກັນ, ບໍລິສັດທີ່ເຂົ້າຮ່ວມ ຫຼື ຕັ້ງໃຈຈະເຂົ້າຮ່ວມໂຄງການກັບບໍລິສັດໃນເຄືອຂອງກຸ່ມກຸງສີ ກ່ຽວກັບການລົງທຶນ ແລະການດຳເນີນທຸລະກິດ, ບໍລິສັດປະກັນໄພທີ່ກ່ຽວຂ້ອງກັບການປະກັນໄພ ຫຼື ແພັດຟອມ FundConnext), ຫຼືແພລດຟອມອື່ນທີ່ກ່ຽວກັບການລົງທຶນໃນກອງທຶນລວມ), ບໍລິສັດທີ່ກຸ່ມກຸງສີເຂົ້າໄປຮ່ວມລົງທຶນ ຫຼື ມີທຸລະກຳ, ອົງກອນທີ່ກຸ່ມກຸງສີໃຫ້ບໍລິການ (ລວມທັງເວັບໄຊທ ຕະຫຼາດຮອງຊື້ຜູ້ໃຊ້ເຄືອຂ່າຍສັງຄົມອອນໄລນ໌ຂອງອົງກອນດັ່ງກ່າວ), ແຫຼ່ງຂໍ້ມູນທາງການ, ໜ່ວຍງານຈັດຕັ້ງລັດທີ່ມີຖານຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບບຸກຄົນ ໜ່ວຍງານຈັດຕັ້ງພາກລັດ (ເຊັ່ນ: ທະນາຄານແຫ່ງປະເທດໄທ, ກົມສັບພະສອນ, ສຳນັກງານປ້ອງກັນ ແລະປາບປາມການຟອກເງິນ, ສຳນັກງານຄະນະກຳມະການຄຸ້ມຄອງ ແລະສົ່ງເສີມການດຳເນີນທຸລະກິດປະກັນໄພ, ກົມບັງຄັບຄະດີ, ກະຊວງການຄາ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ກົມທີ່ດິນ), ສ່ວນ ຕະຫຼອດຈົນໜ່ວຍງານຫຼືອົງການອື່ນທີ່ມີໜ້າທີ່ຕາມກົດໝາຍໃນການເປີດເຜີຍຂໍ້ມູນຂອງທ່ານມາຍັງກຸ່ມກຸງສີ ເຊັ່ນ: ຜູ້ປະກອບການຫຼັກຊັບປະເພດນາຍໜ້າຊື້ຂາຍຫຼັກຊັບ ແລະ ປະເພດການໃຫ້ສິນເຊື່ອເພື່ອທຸລະກິດຫຼັກຊັບ ແລະ ຈາກບຸກຄົນອື່ນພາຍນອກ (ເຊັ່ນ: ຜູ້ທີ່ແນະນຳລູກຄ້າ, ຕົວແທນຂອງທ່ານ, ຜູ້ຄ້ຳ ຫຼື ບຸກຄົນໃດໜຶ່ງທີ່ໄດ້ຮັບສິດຈາກທ່ານ).

2. ຖານທາງກົດໝາຍ ແລະສາເຫດໃນການເກັບກຳ, ນຳໃຊ້, ເປີດເຜີຍ ຫຼື ໂອນຂໍ້ມູນຂອງທ່ານ

2.1 ຖານທາງກົດໝາຍ

ກຸ່ມກຸງສີຈະພິຈາລະນາກຳນົດຖານທາງດ້ານກົດໝາຍ ສຳລັບການເກັບກຳ, ນຳໃຊ້, ເປີດເຜີຍ ຫຼື ໂອນ ຂໍ້ມູນຂອງທ່ານຕາມ ຄວາມເໝາະສົມ ໂດຍຂຶ້ນກັບບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ນຳ ຊຶ່ງຖານທາງກົດໝາຍຂອງກຸ່ມກຸງສີນຳໃຊ້ຕົ້ນຕໍ ໄດ້ແກ:

ຖານທາງກົດໝາຍ	ລາຍລະອຽດ
ເພື່ອປະຕິບັດຕາມສັນຍາ	ເພື່ອໃຫ້ກຸ່ມກຸງສີສາມາດປະຕິບັດໜ້າທີ່ ແລະ/ຫຼື ດຳເນີນການທີ່ຈຳເປັນເພື່ອເຮັດສັນຍາກັບທ່ານ ແລະ/ຫຼື ເພື່ອນຳ ສະເໜີຜະລິດຕະພັນ ແລະບໍລິການໃຫ້ທ່ານຕາມຄວາມຕ້ອງການ ພາຍໃຕ້ສັນຍາລະຫວ່າງທ່ານກັບກຸ່ມກຸງສີ (ເຊັ່ນ: ເພື່ອຊຳລະ ແລະຮັບຊຳລະເງິນ ລວມທັ້ງການຊຳລະເງິນ ແລະຮັບເງິນໂດຍໃຊ້ບັດເຄຣດິດທີ່ກຸ່ມກຸງສີອອກໃຫ ເພື່ອໃຫ້ທ່ານກູ້ຢືມເງິນຕາມສັນຍາການກູ້ຢືມເງິນທີ່ທ່ານໄດ້ເຂົ້າຮ່ວມກັບກຸ່ມກຸງສີ ເພື່ອການພິຈາລະນາປັບຫຼືທົບທວນວົງເງິນທີ່ທ່ານໄດ້ຮັບ ສຳລັບການເຮັດທຸລະກຳກັບກຸ່ມກຸງສີ ຕະຫຼອດຮອດການຊ່ວຍເຫຼືອທ່ານຊຳລະເງິນກ່ຽວກັບກົມມະທັນປະກັນໄພ ເປັນຕົ້ນ) ແລະປະຕິບັດໜ້າທີ່ຕາມສັນຍາ.
ເພື່ອປະຕິບັດໜ້າທີ່ຕາມກົດໝາຍ	ເພື່ອໃຫ້ກຸ່ມກຸງສີສາມາດປະຕິບັດໜ້າທີ່ຕາມກົດໝາຍຂອງກຸ່ມກຸງສີ (ເຊັ່ນ: ການຂໍ້ມູນການຖານເພື່ອພິສູດຕົວຕົນຂອງທ່ານອັນເປັນການປະຕິບັດໜ້າທີ່ຕາມກົດໝາຍປ້ອງກັນ ແລະ ປາບປາມການຟອກເງິນຂອງກຸ່ມກຸງສີ ແລະການເປີດເຜີຍ ຂໍ້ມູນຕໍ່ ບໍລິສັດ ຂໍ້ມູນສິນເຊື່ອແຫ່ງຊາດ ຈຳກັດ (NCB) ເພື່ອປະໂຫຍດໃນການປະຕິບັດຕາມກົດໝາຍ ວ່າດ້ວຍຂໍ້ມູນສິນເຊື່ອ) ແລະຕາມກົດໝາຍວ່າດ້ວຍການປ້ອງກັນການຫຼີກລ່ຽງພາສີຂອງ ສະຫະລັດອາເມລິກາ (Foreign Account Tax Compliance Act: FATCA). ພະລາດຊະກຳນົດແລກປ່ຽນຂໍ້ມູນເພື່ອປະຕິບັດຕາມຂໍ້ຕົກລົງລະຫວ່າງປະເທດ ກ່ຽວກັບພາສີອາກອນ.ການໃຊ້ຫຼືເປີດເຜີຍຂໍ້ມູນຂອງທ່ານເພື່ອປະກອບການພິຈາລະນາກຳນົດ ແລະ ທົບທວນວົງເງິນອັນເປັນການປະຕິບັດໜ້າທີ່ຕາມປະກາດຄະນະກຳມະການກຳກັບຕະຫຼາດທຶນ ວ່າດ້ວຍມາດຕະຖານການປະກອບທຸລະກິດ ແລະການປະກາດວ່ວສະມາຄົມບໍລິສັດຫຼັກຊັບໄທວ່າດ້ວຍການກວດສອບຂໍ້ມູນ ຂອງລູກຄ້າຈາກຜູ້ປະກອບທຸລະກິດລາຍອື່ນ ເປັນຕົ້ນ ລວມເຖິງໜ້າທີ່ອື່ນໃດ ຕາມກົດໝາຍລວມເຖິງຫຼັກເກນຂອງໜ່ວຍງານກຳກັບດູແລອື່ນທີ່ກ່ຽວຂ້ອງ.

ຖານທາງກົດໝາຍ	ລາຍລະອຽດ
ເປັນການຈຳເປັນເພື່ອຜົນປະໂຫຍດໂດຍສອດຄ່ອງຕາມກົດໝາຍ	ເພື່ອຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງກຸ່ມ ກຸງສີ ແລະຂອງບຸກຄົນອື່ນ (ເຊັ່ນ: ເພື່ອທຳຄວາມເຂົ້າໃຈວິທີການທີ່ລູກຄ້າໃຊ້ບໍລິການຂອງກຸ່ມກຸງສີ ແລະ ນຳໄປພັດທະນາເປັນການບໍລິການໃໝ່, ປັບປຸງການໃຫ້ບໍລິການໃນປະຈຸບັນ ຂອງກຸ່ມກຸງສີ, ເພື່ອການສົ່ງເສີມການຂາຍ ຫຼື ການປະຊາສຳພັນຜະລິດຕະພັນ ແລະບໍລິການ ລວມເຖິງສິດທິພິເສດທີ່ເປັນປະໂຫຍດ ທີ່ຢູ່ໃນຄວາມຄາດໝາຍ ຂອງທ່ານ ຊຶ່ງແຕ່ລະບໍລິ ສັດໃນກຸ່ມທຸລະກິດທາງການເງິນດຳເນີນການເອງ ພາຍໃນ ການກວດຈັບ ແລະປ້ອງກັນການສໍ້ໂກງ), ບໍລິຫານຈັດການລະບົບ ແລະການບໍລິການທີ່ໃຊ້ເພື່ອການຕິດຕາມໜີ້ ແລະຈັດການກ່ຽວກັບການລ້າໜີ້ສູນ.
ເປັນການຈຳເປັນຕໍ່ຊີວິດ	ເພື່ອປ້ອງກັນ ຫຼື ລະງັບອັນຕະລາຍຕໍ່ຊີວິດ, ຮ່າງກາຍ ຫຼື ສຸຂະພາບຂອງທ່ານ.
ຄວາມຍິນຍອມຂອງທ່ານ	ເພື່ອເປັນການເກັບກຳ ນຳໃຊ້ ເປີດເຜີຍ ຫຼື ໂອນຂໍ້ມູນສ່ວນບຸກຄົນໃນກໍລະນີ ທີ່ກຸ່ມກຸງສີຕ້ອງໄດ້ຮັບຄວາມຍິນຍອມ ເຊັ່ນ: ເພື່ອສົ່ງເສີມການຂາຍ ຫຼື ການປະຊາສຳພັນຜະລິດຕະພັນ ແລະບໍລິການ ລວມທັງສິດພິເສດທີ່ເປັນ ປະໂຫຍດ ຊຶ່ງບ່ອາດອາໃສຖານທາງກົດໝາຍອື່ນໄດ້ .

ໃນກໍລະນີທີ່ກຸ່ມກຸງສີມີຄວາມຈຳເປັນຕ້ອງເກັບກຳຂໍ້ມູນຂອງທ່ານ ເພື່ອການປະຕິບັດຕາມສັນຍາ ຫຼື ການປະຕິບັດໜ້າທີ່ຕາມກົດໝາຍ ແລະຖ້າທ່ານບໍ່ໃຫ້ຂໍ້ມູນດັ່ງກ່າວ ກຸ່ມກຸງສີອາດຈະບໍ່ສາມາດໃຫ້ບໍລິການ ຫຼື ດຳເນີນການຕາມທີ່ທ່ານຮ້ອງຂໍໄດ.
ທັ້ງນີ້ ກຸ່ມກຸງສີອາດນຳເທັກໂນໂລຊີມາໃຊ້ໃນການລວບລວມໃຊ້ເປີດເຜີຍ ຫລືໂອນຂໍ້ມູນສ່ວນບຸກຄົນຂອງທ່ານ ຕາມວັດຖຸປະສົງທີ່ລະບຸໄວ້ໃນປະກາດການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງກຸ່ມກຸງສີ ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງແຕ່ເທັກໂນໂລຊີດັ່ງຕໍ່ໄປນີ້:
1. ບລອກເຊນ (Blockchain) ເຊັ່ນ: Public blockchain, private blockchain consortium blockchain ເປັນຕົ້ນ
2. ລະບົບ ປັນຍາປະດິດ (Artificial Intelligence: AI) ຫຼື “ລະບົບ AI” ໝາຍເຖິງລະບົບທີ່ລຽນແບບປັນຍາຂອງມະນຸດ ໂດຍສາມາດເຮັດວຽກຕ່າງໆ ເຊັ່ນ: ຮຽນຮູ້, ຈິດຈຳ, ຕັດສິນໃຈ, ປະຕິບັດງານ ຫຼື ສ້າງສັນເນື້ອຫາໃໝ່ຜ່ານການໄກ່ຮຽນຮູ້ຈາກຂໍ້ມູນ ແລະການສ້າງເງື່ອນໄຂອັດຕະໂນມັດ ທັ້ງນີ້ບໍ່ລວມເຖິງລະບົບອັດຕະໂນມັດທີ່ມະນຸດເປັນຜູ້ກຳນົດຂັ້ນຕອນການເຮັດວຽກຂອງ ລະບົບເຊັ່ນ: Microsoft Copilot, ເທັກໂນໂລຊີ AI Chatbot ເປັນຕົ້ນ.
3. ລະບົບຄລາວ (Cloud Computing)

2.2. ຈຸດປະສົງໃນການເກັບກຳຂໍ້ມູນຂອງທ່ານ

ກຸ່ມກຸງສີໄດເກັບກຳຂໍ້ມູນຂອງທ່ານເພື່ອຈຸດປະສົງຫຼາຍດ້ານ. ທັ້ງນີ້ ຂຶ້ນກັບບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ ຫຼື ເຮັດທຸລະກຳການ, ຜະລິດຕະພັນ ແລະບໍລິການທີ່ທ່ານໄດ້ຮັບ ຕະຫຼອດຮອດລັກສະນະສ່ວນພົວພັນລະຫວ່າງທ່ານ ແລະພັນທະມິດຂອງກຸ່ມກຸງສີ ແລະ/ ຫຼື ຂໍ້ພິຈາລະນາອື່ນໆໃນແຕ່ລະກໍລະນີ. ທັ້ງນີ້ ຈຸດປະສົງຕາມທີ່ລະບຸໄວ້ຕໍ່ໄປນີ້ເປັນພຽງກອບການນຳໃຊ້ຂໍ້ມູນຂອງກຸ່ມກຸງສີ ໃນເວລາທີ່ເຮັດປະກາດສະບັບນີ້ຂຶ້ນ ໂດຍຈຸດປະສົງທີ່ກ່ຽວຂ້ອງກັບທ່ານເທົ່ານັ້ນ ທີ່ຈະມີຜົນໃນການນຳໃຊ້ຂໍ້ມູນຂອງທ່ານ.

(1) ຂັ້ນຕອນການຂໍໃຊ້ບໍລິການ (Pre-Enrollment) ແລະ ການຮັບເຂົ້າເປັນລູກຄ້າ/ຄູ່ຄ້າ (Onboarding)

ຈຸດປະສົງ	ລາຍລະອຽດ
ການລະບຸ ແລະຢືນຢັນຕົວຕົນ	ການຢືນຢັນຕົວຕົນ ແລະລາຍເຊັນ ເຊັ່ນ: ເມື່ອທ່ານສະ ໝັກໃຊ້ຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ ຫຼື ບໍລິສັດໃນເຄືອ/ພັນທະມິດຂອງກຸ່ມກຸງສີ ຫຼື ເມື່ອເຮັດສັນຍາ ແລະ ທຸລະກຳ, ການຊ່ວຍໃຫ້ທ່ານສາມາດສະໝັກໃຊ້ ແລະ ຮັບຜະລິດຕະພັນ ແລະບໍລິການ, ຢືນຢັນຂໍ້ມູນຂອງທ່ານທີ່ໃຊ້ເຂົ້າສູ່ລະບົບ, ການຢືນຢັນຕຳແໜ່ງທີ່ທ່ານຢູ່ ເພື່ອໃຫ້ທ່ານສາມາດເຂົ້າເຖິງບັນຊີໃດ ຫຼື ເພື່ອໃຫ້ທ່ານສາມາດເຮັດທຸລະກຳອອນໄລນ໌ໄດ ໂດຍໃຊ້ຊ່ອງທາງທີ່ກຳນົດໃຫ, ການສ້າງລາຍເຊັນເອເລັກໂທຣນິກ, ການຢືນຢັນຕົວຕົນທານ ເມື່ອທ່ານຕິດຕໍ່ກັບກຸ່ມກຸງສີ ເພື່ອຂໍຮັບຜະລິດຕະພັນ ແລະ ບໍລິການສຳລັບລູກຄ້າຜ່ານຊ່ອງທາງ ທີ່ກຳນົດໃຫ້ (ເຊັ່ນ: ສາຂາຂອງກຸ່ມກຸງສີ, ທາງໂທລະສັບ, ອີເມວ ຫຼື ບັນຊີ ແອັບພລິເຄຊັ່ນ LINE, ແອັບພລິເຄຊັ່ນໃນໂທລະສັບມືຖື ແລະເວັບໄຊທ), ການຮວບຮວມຄຳຖາມກ່ຽວກັບຄວາມປອດໄພ ສຳລັບຂັ້ນຕອນການຢືນຢັນ ຕົວຕົນ ແລະການຢືນຢັນຕຳແໜ່ງທີ່ທ່ານຢູ່ ເພື່ອໃຫ້ທ່ານສາມາດເຂົ້າເຖິງບັນຊີໄດ.
ການສະເໜີລາຄາ ແລະການຮັບເຂົ້າເປັນລູກຄ້າ (Onboarding)	ການສະເໜີເບ້ຍປະກັນໄພໃຫ້ທ່ານຈະພິຈາລະນາ, ການກະກຽມໃບສະເໜີລາຄາ ຫຼື ຂໍ້ສະເໜີກ່ຽວກັບຜະລິດ ຕະພັນ ແລະບໍລິການຂອງກຸ່ມກຸງສີທີ່ທ່ານສົນໃຈສະໝັກ ຫຼື ຂໍນຳໃຊ້ ເພື່ອນຳສົ່ງໃຫ້ທ່ານ, ການດຳເນີນຂັ້ນຕອນການສະເໜີລາຄາ, ການລົງທະບຽນດຳເນີນຂັ້ນຕອນກ່ຽວກັບໃບສະໝັກໃຊ້ໃນການຮັບເຂົ້າເປັນລູກຄ້າ, ການຊ່ວຍໃຫ້ທ່ານສາມາດສະໝັກ ແລະໄດ້ຮັບຜະລິດຕະພັນ ແລະບໍລິການ.

ຈຸດປະສົງ	ລາຍລະອຽດ
ການປະເມີນຄວາມເໝາະສົມດ້ານຄຸນສົມບັດ ການອະນຸມັດ ແລະການປະຕິເສດ	• ການປະເມີນໃບສະໝັກ, ຄຳຮ້ອງ ແລະຄວາມເໝາະສົມຂອງທ່ານໃນການຂໍຮັບຜະລິດຕະພັນ ແລະບໍລິການ, ການກວດສອບປະຫວັດຄວາມເປັນມາເບື້ອງຕົ້ນຂອງ ລູກຄ້າ, ການກວດສອບຄຸນສົມບັດຢ່າງເຕັມຮູບແບບ ສຳລັບການຂໍຮັບຜະລິດຕະພັນ ແລະບໍລິການ, ການປະເມີນຄວາມສ່ຽງ ແລະການດຳເນີນຂັ້ນຕອນກ່ຽວກັບ ການພິຈາລະນາຄວາມເໝາະສົມ ໂດຍພິຈາລະນາຈາກປະຫວັດ ເພື່ອໃຊ້ໃນການສະເໜີພິຈາລະນາ ແລະໃຫ ຄຳເຫັນຜະລິດຕະພັນ ແລະບໍລິການທີ່ທ່ານສະໝັກ ຫຼື ຮ້ອງຂໍ, ການກວດສອບເອກະສານຕ່າງໆທີ່ກ່ຽວຂ້ອງທີ່ກຸ່ມກຸ່ງສີໄດ້ຮັບ (ເຊັ່ນ: ຂໍ້ມູນກ່ຽວກັບລູກຄ້າ ແລະແບບ ຟອມການປະເມີນຄວາມສ່ຽງທີ່ຍອມຮັບໄດ ໃບຢັ້ງຢືນ ບໍລິສັດ ແລະບັນຊີລາຍຊື່ຜູ້ຖືຮຸ້ນສະບັບປັບປຸງປະຈຸບັນ). • ການສະເໜີກົນໄກປ້ອງກັນໄພ ຫຼື ເບ້ຍປະກັນທີ່ມີຄວາມເໝາະສົມ, ການຈັດທຳກົນໄກປ້ອງກັນໄພ, ການຮັບປະກັນຕາມໄລຍະເວລາທີ່ຂະຫຍາຍອອກໄປ • ການວິເຄາະຄວາມສ່ຽງດ້ານສິນເຊື່ອ, ການກວດສອບ/ການເຮັດ Credit Scoring/Model, ການສ້າງແບບຈຳລອງສຳລັບການປະເມີນສິນເຊື່ອ ເພື່ອໃຊ້ໃນການປະເມີນຄວາມໜ້າເຊື່ອຖືດ້ານສິນເຊື່ອຂອງທ່ານ, ການກວດສອບສະຖານະສິນເຊື່ອຂອງທ່ານ, ການປະເມີນມູນຄ່າຫຼັກຊັບຄ້ຳປະກັນ ໂດຍຜ່ານການເຂົ້າຢ້ຽມຢາມສະຖານທີ່ ຫຼື ການກວດສອບຂໍ້ແທ້ຈິງກ່ຽວກັບຊັບສິນ ແລະການຍຶດຊັບ. • ການປະເມີນມູນຄ່າຂອງຫຼັກຊັບສຳລັບການກູ້ຢືມເງິນທີ່ມີການຈຳນອງເປັນຫຼັກຊັບຄ້ຳປະກັນ, ການອະນຸ ມັດ ຫຼື ປະຕິເສດຄຳຂໍໃຊ້ບໍລິການຂອງທ່ານ, ການອະນຸມັດຫຼັກຊັບຄ້ຳປະກັນສຳລັບຜະລິດຕະພັນ ແລະບໍລິການ, ການຕິດຕໍ່ທ່ານກ່ຽວກັບຜະລິດຕະພັນ ແລະບໍລິການທີ່ທ່ານຂໍ ຫຼື ສະໝັກ (ເຊັ່ນ: ໃນກໍລະນີທີ່ທ່ານຕິດຕໍ່ສອບຖາມວ່າຄຳຮ້ອງຂໍຮັບບໍລິການຂອງທ່ານໄດ້ຮັບການອະນຸມັດ ຫຼື ຖືກປະຕິເສດ). • ການສ້າງແບບຈຳລອງໃນການວິເຄາະຄວາມສາມາດໃນການຊຳລະຄ່າສິນຄ້າ ຫຼື ບໍລິການ ໂດຍການພັດທະນາຂໍ້ມູນຂອງທ່ານເປັນແບບຈຳລອງທາງຄະນິດສາດ ລວມເຖິງສູດການຄຳນວນທີ່ຈຳເປັນຕໍ່ການວິເຄາະຄວາມສາມາດໃນການຊຳລະຄ່າສິນຄ້າ ຫຼື ບໍລິການ ໂດຍນຳໄປໃຫ ບໍລິການກັບລູກຄ້າ ຫຼື ຄູ່ຄ້າ ເພື່ອໃຫ້ເປັນສ່ວນໜຶ່ງໃນການຕັດສິນໃຈສຳລັບການໃຫ້ບໍລິການຂອງກຸ່ມກຸ່ງສີແກ່ລູກຄ້າ ຫຼື ຄູ່ຄ້າ . • ການອະນຸຍາດໃຫ້ກົມຂົນສົ່ງທາງບົກກວດສອບ ແລະ ຢັ້ງຢືນພາຫະນະ ແລະເພື່ອການກວດສອບສະຖານະພາຫະນະ ແລະໂອນກຳມະສິດຍານພາຫະນະໃຫ້ກຸ່ມ ກຸ່ງສີ ຊຶ່ງເປັນຂັ້ນຕອນໃນການພິຈາລະນາສິນເຊື່ອໃນກໍລະນີທີ່ເປັນການບໍລິການຣີຟາຍແນນຄ໌, ການຈົດທະບຽນຍານພາຫະນະກັບກົມຂົນສົ່ງທາງບົກ (ຄູ່ມືການຈົດທະບຽນ). • ການພິຈາລະນາກຳນົດ ແລະ ທົບທວນວົງເງິນໃຫ້ແກ່ທ່ານໄດ້ຢ່າງເໝາະສົມຕໍ່ຄວາມສາມາດໃນການຊຳລະໜີ້ຂອງທ່ານ
ການກວດສອບຂໍ້ມູນ	• ການດຳເນີນການຕາມຂະບວນການ ແລະຂັ້ນຕອນຕ່າງໆ ກ່ຽວກັບການລະບຸຕົວຕົນຂອງລູກຄ້າ ແລະການກວດສອບຄວາມສ່ຽງດ້ານຄວາມປອດໄພອື່ນໆ, ການກວດສອບຕົວຕົນ ແລະສະຖານະຂອງລູກຄ້າ, ການກວດສອບຂໍ້ມູນ ຫຼື ການກວດສອບຄວາມເປັນມາໃນລັກສະນະອື່ນໃດ ຫຼື ການລະບຸຫາຄວາມສ່ຽງກ່ຽວກັບທ່ານ ແລະ/ຫຼື ລູກຄ້າ ເຊັ່ນ: ການທຳຄວາມຮູ້ຈັກລູກຄ້າ Know Your Customer (KYC), ການກວດສອບເພື່ອຮູ້ຄວາມຈິງກ່ຽວກັບລູກຄ້າ (Customer Due Diligence), ການປ້ອງກັນ ແລະປາບປາມການຟອກເງິນ, ການກວດສອບການເຮັດລາຍການລະຫວ່າງກັນ, ການກວດສອບກ່ຽວກັບ FATCA/CRS, ການກວດສອບຂໍ້ມູນທີ່ທ່ານໃຫ້ກັບກຸ່ມກຸ່ງສີໂດຍປຽບທຽບກັບຖານຂໍ້ມູນ Blacklist, ການຄັດກອງໂດຍປຽບທຽບຂໍ້ມູນຈາກຖານຂໍ້ມູນສາທາລະນະ ຂອງໜ່ວຍງານດ້ານບັງຄັບໃຊ້ກົດໝາຍ ແລະ/ຫຼື ບັນຊີ Sanction ຕາມທີ່ກົດໝາຍກຳນົດໄວ ແລະບັນຊີລາຍຊື່ອື່ນໆທີ່ກ່ຽວຂ້ອງ ລວມທັງການປະຕິບັດຕາມຂໍ້ກຳນົດກ່ຽວກັບການພິສູດຊາບຕົວຕົນ, ການປະຕິບັດຕາມຂັ້ນຕອນ ແລະ ລະບຽບກ່ຽວກັບ Sanction, ການກວດສອບກ່ຽວກັບສາຍພົວພັນຂອງທ່ານ

ຈຸດປະສົງ	ລາຍລະອຽດ
	ກັບນັກການເມືອງ, ການເຮັດທຸລະກຳທາງດ້ານການເງິນ ແລະການບໍລິການກ່ຽວກັບການຊຳລະເງິນ ລວມທັ້ງການກວດສອບການເຮັດທຸລະກຳ. • ການກວດສອບ ແລະຢືນຢັນເອກະສານທີ່ທ່ານສົ່ງໃຫ້ ລວມທັ້ງຄວາມເໝາະສົມ ແລະຄຸນສົມບັດໃນການຮັບຜະລິດຕະພັນ ແລະບໍລິການ, ການກວດສອບຄວາມ ເໝາະສົມຂອງທ່ານ ໃນການສະໝັກຮັບຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ ເຊັ່ນ: ການເປີດບັນຊີ, ຄຳຮ້ອງຂໍສິນເຊື່ອ, ການກວດສອບຂໍ້ມູນສິນເຊື່ອ, ການ ກວດສອບໃບຄູ່ມືໃນການຈົດທະບຽນກ່ອນການເບີກຈ່າຍສິນເຊື່ອ. • ການກວດສອບຄວາມຂັດແຍ່ງດ້ານຜົນປະໂຫຍດ ແລະການກວດສອບລູກຄ້າ ທັ້ງລະຫວ່າງທີ່ພິຈາລະນາຮັບເຂົ້າເປັນລູກຄ້າ ແລະການກວດສອບລູກຄ້າຢ່າງຕໍ່ເນື່ອງ. • ກວດສອບການລາຍງານທາງດ້ານພາສີອາກອນ/ການລາຍງານຕາມຂໍ້ກຳນົດທາງກົດໝາຍ. • ກວດສອບຂໍ້ມູນເພື່ອການປັບປຸງ ແລະບໍລິຫານຈັດການຖານຂໍ້ມູນລູກຄ້າຂອງກຸ່ມກຸງສີໃຫ້ເປັນປະຈຸບັນ. • ການກວດສອບຄວາມຖືກຕ້ອງ ແລະການຍົກເລີກ, ການກວດສອບເອກະສານຂອງທ່ານ ເພື່ອໃຊ້ເປີດບັນຊີ ຫຼື ການສະໜອງຜະລິດຕະພັນ ແລະບໍລິການ (ເຊັ່ນ: ກອງທຶນສ່ວນບຸກຄົນ).
ການປະເມີນ ແລະການບໍລິຫານຄວາມສ່ຽງ	• ການປະເມີນຄວາມສ່ຽງໂດຍພິຈາລະນາຈາກຂໍ້ມູນປະຫວັດ ແລະຂໍ້ມູນຂອງທ່ານທີ່ໄດ້ຮັບ ເພື່ອພິຈາລະນາຄວາມເໝາະສົມໃນການຮັບຜະລິດຕະພັນ ແລະບໍລິການ ການປະເມີນຄຳຂໍ ຫຼື ຄວາມເໝາະສົມຂອງທ່ານໃນການຮັບຜະລິດຕະພັນ ແລະບໍລິການ, ການປະເມີນຄວາມສ່ຽງຢ່າງຕໍ່ເນື່ອງ. • ການຈັດປະເພດຄວາມສ່ຽງຂອງທ່ານ ໂດຍພິຈາລະນາຈາກຫຼັກເກນທີ່ກຳນົດໄວ້ (ເຊັ່ນ: ບັນຊີລາຍຊື່ Sanction List, ປະຫວັດກ່ຽວກັບການລົ້ມລະລາຍ). • ການບໍລິຫານຄວາມສ່ຽງເຊີງລຸກສຳລັບຄວາມສ່ຽງພາຍໃນກຸ່ມ (Intragroup) ໃນແງ່ຂອງຄວາມສ່ຽງດ້ານການຕະຫຼາດ, ຄວາມສ່ຽງດ້ານສິນເຊື່ອ, ຄວາມສ່ຽງໃນການຜິດນັດຊຳລະໜີ້, ຄວາມສ່ຽງຕໍ່ຂະບວນການ, ຄວາມສ່ຽງດ້ານສະພາບຄ່ອງ ແລະຄວາມສ່ຽງທີ່ກ່ຽວຂ້ອງກັບພາບລັກ ຕະຫຼອດຮອດຄວາມສ່ຽງໃນການປະຕິບັດການ ແລະ ຄວາມສ່ຽງທາງດ້ານກົດໝາຍ ເພື່ອໃຫ້ສາມາດກວດຫາຈຳກັດ ແລະຕິດຕາມຄວາມສ່ຽງດັ່ງກ່າວໄດ້. • ການບໍລິຫານຄວາມສ່ຽງຂອງກຸ່ມບໍລິສັດ ເພື່ອໃຫ້ເປັນໄປຕາມກົດ ແລະລະບຽບຂອງ Japanese Financial Service Agency (JFSA) ຊຶ່ງໃຊ້ກັບບໍລິສັດແມ່ຢູ່ຕ່າງ ປະເທດ ແລະເພື່ອໃຫ້ເປັນໄປຕາມກົດເກນຂອງ Basel Committee on Banking Supervision (BCBS).
ການຄັດເລືອກພັນທະມິດທາງທຸລະກິດ ແລະຄູ່ຄ້າ	ການກວດສອບ ແລະພິສູດຕົວຕົນຂອງທ່ານ ແລະສະຖານະຂອງພັນທະມິດທາງທຸລະກິດ ແລະຄູ່ຄ້າ, ການກວດສອບຂໍ້ມູນ, ການກວດສອບເພື່ອຮັບຮູ້ຄວາມຈິງກ່ຽວກັບພັນທະມິດທາງທຸລະກິດ ແລະຄູ່ຄ້າ (Business Partner Due Diligence/Third Party Due Diligence/Know Your Third Party) ການກວດສອບຄວາມສຳພັນທີ່ອາດກໍ່ໃຫ້ເກີດຄວາມຂັດແຍ່ງໃນຜົນປະໂຫຍດ (Conflict of Interest-COI) ແລະ/ຫຼື ການກວດສອບປະຫວັດໃນລັກສະນະອື່ນ ຫຼື ການລະບຸຄວາມສ່ຽງກ່ຽວກັບທ່ານ ພັນທະມິດທາງທຸລະກິດ ແລະຄູ່ຄ້າ ເຊັ່ນ: ການທຳຄວາມຮູ້ຈັກກັບຄູ່ຄ້າ ຫຼື Know Your Third Party (KYTP), ການກວດສອບ

ຈຸດປະສົງ	ລາຍລະອຽດ
	ເພື່ອຮັບຮູ້ຄວາມຈິງກ່ຽວກັບຄູ່ຄ້າ (Third Party Due Diligence), ການປ້ອງກັນ ແລະປາບປາມການຟອກເງິນ, ການຕ້ານການໃຫ້ສິນບົນ ແລະການທຸຈະລິດສໍ້ລາດບັງຫຼວງ ການກວດສອບການເຮັດລາຍການຫວ່າງກັນ ການກວດສອບຂໍ້ມູນກ່ຽວກັບ FATCA/CRS, ການກວດສອບຂໍ້ມູນທີ່ທ່ານໃຫ້ກັບກຸ່ມກຸງສີໂດຍການປຽບທຽບກັບຖານຂໍ້ມູນ Black List, ການຄັດກອງໂດຍການປຽບທຽບຂໍ້ມູນຈາກຖານຂໍ້ມູນສາທາລະນະຂອງໜ່ວຍງານບັງຄັບໃຊ້ກົດໝາຍ ແລະ/ຫຼື ບັນຊີ Sanction ຕາມທີ່ກົດໝາຍກຳນົດໄວ້ ແລະບັນຊີລາຍຊື່ອື່ນໆທີ່ກ່ຽວຂ້ອງ ລວມທັງການປະຕິບັດຕາມຂໍ້ກຳນົດກ່ຽວກັບການພິສູດຕົວຕົນ, ການປະຕິບັດຕາມຂັ້ນຕອນ ແລະກົດລະບຽບກ່ຽວກັບ Sanction, ການກວດສອບສາຍພົວພັນຂອງທ່ານກັບນັກການເມືອງ ການເຮັດທຸລະກຳ ທາງການເງິນ ແລະການບໍລິ ການຊຳລະເງິນ ລວມທັງການກວດສອບການເຮັດທຸລະກຳ, ການປະເມີນຄວາມ ເໝາະສົມ ແລະ ຄຸນສົມບັດຂອງທ່ານ, ພັນທະມິດທາງທຸລະກິດ, ຄູ່ຄ້າ ແລະບຸກຄະລາກອນໃນການເຮັດວຽກໃຫ້ກຸ່ມກຸງສີ, ການຂໍໃບສະເໜີລາຄາ ຫຼື ເຂົ້າຮ່ວມການປະມູນລາຄາ, ກວດສອບເອກະສານຕ່າງໆທີ່ກ່ຽວຂ້ອງທີ່ກຸ່ມກຸງສີໄດ້ຮັບ (ເຊັ່ນ: ໃບຢັ້ງຢືນຂອງບໍລິສັດ, ບັນຊີລາຍຊື່/ບັດປະຈຳຕົວ, ຜູ້ຖືຮຸ້ນ/ກຳມະການ, ຜູ້ທີ່ມີສິດອຳນາດໃນການລົງນາມຂອງບໍລິສັດ ສະບັບເປັນປະຈຸບັນ), ການລົງທະບຽນ, ການເຈລະຈາຕໍ່ລອງ ແລະການເຮັດສັນຍາ ແລະທຸລະກຳກັບທ່ານ, ພັນທະມິດທາງທຸລະກິດ ແລະ/ຫຼື ຄູ່ຄ້າ.

(2) ການສະໜອງ ແລະການບໍລິຫານຈັດການຜະລິດຕະພັນ ແລະບໍລິການ

ຈຸດປະສົງ	ລາຍລະອຽດ
ການສະໜອງ ແລະການບໍລິຫານຈັດການຜະລິດຕະພັນ ແລະບໍລິການ	ການສະໜອງ ແລະການບໍລິຫານຈັດການຜະລິດ ຕະພັນ ແລະບໍລິການ ຕາມຈຸດປະສົງ ດັ່ງຕໍ່ໄປນີ້: • **ການຕິດຕໍ່ສື່ສານເພື່ອໃຫ້ບໍລິການແກ່ທ່ານ** ການສະໜອງຂໍ້ມູນ ຫຼື ບໍລິການຕາມການສອບຖາມຂອງລູກຄ້າ (ເຊັ່ນ: ການລົງນາມໃນສັນຍາກັບທ່ານ, ການອະນຸມັດຂໍ້ມູນກ່ຽວກັບສິນເຊື່ອ ແລະ ແຈ້ງໃຫ້ທ່ານຊາບລາຍລະອຽດສິນເຊື່ອ ແລະເງື່ອນໄຂການຊຳລະສິນເຊື່ອ, ການຕິດຕາມສັນຍາເຊົ່າສິນເຊື່ອ/ເຊົ່າຊື້ ການສະເໜີຜະລິດຕະພັນດ້ານການປະກັນໄພ (ເຊັ່ນ: ການປະກັນໄພລົດຍົນ,ປະກັນໄພລົດຍົນແບບບັງຄັບ (Compulsory Third Party Insurance), ປະກັນໄພຄຸ້ມຄອງການຊຳລະເງິນ (Payment Protection Insurance: PPI)), ການຂໍເອກະ ສານເພີ່ມເຕີມ, ການຕໍ່ອາຍຸກຳມະທັນ ແລະພາສີສຳລັບການນຳໃຊ້ຍານພາຫະນະໃນຖະໜົນຫົນທາງ, ການສະໜອງຂໍ້ມູນກ່ຽວກັບໃບຮຽກເກັບເງິນ, ໃບຮັບເງິນ, ການແຈ້ງຜົນການສະໝັກໃຊ້ບໍລິການ) ການເລີ່ມໃຫ້ບໍລິການ (ເຊັ່ນ: ການແຈ້ງເຕືອນທ່ານ ເມື່ອມີການເປີດບັນຊີ ແລະເລີ່ມໃຊ້ບັນຊີຂອງທ່ານ, ແຈ້ງເຕືອນກ່ຽວກັບການເປີດໃຊ້ບັນຊີ, ການໃຫ້ຄວາມຊ່ວຍເຫຼືອ ແລະໃຫ້ການບໍລິການແກ່ລູກຄ້າ ການຕິດຕໍ່ສື່ສານກັບທ່ານກ່ຽວກັບຜະລິດຕະພັນ ແລະບໍລິການທີ່ຂໍຮັບ (ເຊັ່ນ: ການຕອບຄຳຖາມກ່ຽວກັບຊ່ອງທາງການ ຊຳລະເງິນ) ການຕິດຕໍ່ຜ່ານ SMS, ການດຳເນີນການຕາມຄຳຮ້ອງຂໍໃນເວລາທີ່ທ່ານສະໝັກໃຊ້ຜະລິດຕະພັນ ຫຼື ບໍລິການຈາກບໍລິສັດໃນເຄືອຂອງກຸ່ມກຸງສີ, ບໍລິສັດໃນເຄືອຂອງ MUFG Bank, Ltd. ແລະ/ຫຼື ພັນທະມິດທາງທຸລະກິດ.

ຈຸດປະສົງ	ລາຍລະອຽດ
ການສະໜອງ ແລະການບໍລິຫານຈັດການ ຜະລິດຕະພັນ ແລະບໍລິການ	• **ການອອກ ຫຼື ສົ່ງມອບເອກະສານທີ່ກ່ຽວຂ້ອງ** ການອອກ ແລະສົ່ງມອບ ບັນຊີ,ບັດ,ແຊັກ, ໃບຢັ້ງຢືນ ແລະເອກະສານຕ້ອນຮັບລູກຄ້າໃໝ່ ຫຼື ເອກະ ສານອື່ນໆທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະບໍລິການໃຫ້ທ່ານ ບໍ່ວ່າຈະຢູ່ໃນ ຮູບແບບໃດ ກໍ່ຕາມ ລວມທັງການແຈ້ງໃຫ້ລູກຄ້າຮັບຮູ້ເຖິງ ວັນທີສັນຍາ ປະກັນໄພມີຜົນບັງຄັບໃຊ້ ແລະ/ຫຼື ຂໍ້ມູນອື່ນໆກ່ຽວກັບການປະກັນໄພ, ການຈັດພິມ ແລະສົ່ງ/ນຳສົ່ງເອກະສານ (ເຊັ່ນ: ສັນຍາ, ຈົດ ໝາຍຕ້ອນຮັບລູກຄ້າ, ຈົດໝາຍແຈ້ງເຕືອນຈາກບໍລິສັດ ຂໍ້ມູນສິນເຊື່ອແຫ່ງຊາດ, ແບບຟອມ ການຊຳລະເງິນ, ໃບຮັບເງິນ, ເຄື່ອງໝາຍພາສີລິດ, ກົມມະທັນປະກັນໄພ ແລະ/ຫຼື ເອກະສານອື່ນໆທີ່ກ່ຽວຂ້ອງ) ການອອກ ແລະສົ່ງໜັງສື ຫຼື ເອກະສານຕ່າງໆ ແລະ/ຫຼື ເອກະສານ/ໜັງສືທີ່ກ່ຽວກັບການລົງທຶນ (ເຊັ່ນ: ໃບຢັ້ງຢືນລູກຄ້າ, ໜັງສືແຈ້ງຜົນຂອງການເຮັດແບບທົດສອບຄວາມເໝາະສົມ, ໜັງສືແຈ້ງການກ່ຽວກັບການເຮັດທຸລະກຳ, ຈົດຮັບຮອງ, ຈົດໝາຍຢືນຢັນ, ສັນຍາ ແລະບົດລາຍງານຕ່າງໆ) ການຕິດຕາມການນຳສົ່ງທາງໄປສະນີ, ການໃຫ້ຄວາມຊ່ວຍເຫຼືອ ແລະການແກ້ໄຂບັນຫາດ້ານເຕັກນິກ ການເຮັດ ໜ້າທີ່ຂອງພາກສ່ວນງານດ້ານທຸລະກິດທີ່ກ່ຽວຂ້ອງ (ເຊັ່ນ: ການອອກສັນຍາ, ການເບີກຈ່າຍສິນເຊື່ອ ແລະການຊຳລະສິນເຊື່ອ). • **ການດຳເນີນການກ່ຽວກັບຍານພາຫະນະ ເຊັ່ນ ເຊົ່າສິນເຊື່ອ/ເຊົ່າຊື້ສິນເຊື່ອລິດ** ການກວດສອບ ແລະປະເມີນມູນຄ່າຍານພາຫະນະ, ການດຳເນີນຂະບວນການ Top Up, ການຈົດທະບຽນໂອນກຳມະສິດຍານພາຫະນະ, ການດຳເນີນ ການກວດສອບ ແລະຢັ້ງຢືນພາຫະນະຂອງກົມຂົນສົ່ງທາງ ບົກ, ການສົ່ງຄືນ ເອກະສານທະບຽນຍານພາ ຫະນະເມື່ອສິ້ນສຸດສັນຍາ. • **ການດຳເນີນການກ່ຽວກັບກອງທຶນ** ການຈັດໃຫ້ມີການລົງທະບຽນ, ການ ບໍລິຫານຈັດ ການຜະລິດຕະພັນ ແລະບໍລິການ ລວມທັງກໍລະນີທີ່ກ່ຽວຂ້ອງ ກັບໜ່ວຍງານຈັດຕັ້ງພາກລັດ, ການແຈ້ງເຕືອນທີ່ສົ່ງໄປຫາທ່ານ ເມື່ອມີການ ເປີດບັນຊີ ແລະ ເລີ່ມໃຊ້ງານບັນຊີຂອງທ່ານ ການເຮັດໜ້າທີ່ຕາມສັນຍາ ຂອງກຸ່ມກຸງສີ ຕະຫຼອດຮອດການ ເຮັດທຸລະກຳຕາມທີ່ມີການຮ້ອງໃຫ້ຊື້ ຂາຍ ແລກ ປ່ຽນ ແລະໂອນໜ່ວຍການລົງທຶນ ຕາມຄຳສັ່ງ ຫຼື ກິດຈະກຳທີ່ ກ່ຽວຂ້ອງອື່ນໆ ການເຮັດຕາມຄຳຮ້ອງຂໍຮັບຜະລິດຕະພັນ ແລະບໍລິການ ເຊັ່ນ: ການໃຫ້ບໍລິການກອງທຶນ ລວມ, ການລົງທະບຽນບັນຊີອອນໄລນ໌/ ໃນໂທລະສັບມືຖື, ຄຳຮ້ອງຂໍໜ້າບັນຊີໃນການອະນຸມັດລົງທະບຽນບໍລິການເດບິດ/ ເຄດິດໂດຍກົງ, ການແນະນຳກອງທຶນ, ການຈັດອັນດັບຄວາມສ່ຽງ, ການແຈ້ງເຕືອນ ແລະການແຈ້ງຂໍ້ມູນເພີ່ມເຕີມກ່ຽວກັບຄວາມສ່ຽງຂອງກອງທຶນລວມ ການ ບໍລິຫານຈັດການສາຍພົວພັນ ແລະການດຳເນີນການຕ່າງໆທີ່ຈຳເປັນຕໍ່ການ ນຳສະເໜີຜະລິດ ຕະພັນ ແລະບໍລິການ ລວມທັງການນຳສະເໜີຂໍ້ມູນທີ່ຈຳເປັນ ໃນການຕັດສິນໃຈກ່ຽວກັບການລົງ ທຶນ, ການຕິດຕໍ່ສື່ສານກ່ຽວກັບການ ບໍລິການຕ່າງໆ, ການແຈ້ງໃຫ້ທ່ານຊາບລາຍລະອຽດກ່ຽວກັບການເຮັດທຸລະກຳ (ເຊັ່ນ: ການສ້າງຕັ້ງກອງທຶນສຳເລັດແລ້ວ ການນຳເງິນເຂົ້າກອງທຶນ ການໄຖ່ຖອນ ການຍຸບເລີກ) ລວມທັງຂໍ້ມູນກ່ຽວກັບສະຖານະປະຈຸບັນຂອງການດຳເນີນງານ ຂອງກອງທຶນ ແລະສະພາບຕະຫຼາດປະຈຳເດືອນ/ໄຕມາດ/ປີ ຫຼື ເມື່ອທ່ານ ຮ້ອງຂໍ ການຈັດກອງປະຊຸມໃຫຍ່ປະຈຳປີຕາມລະບຽບການຂອງກອງທຶນ, ກົດໝາຍ ແລະ/ຫຼື ລະບຽບການທີ່ນຳໃຊ້, ການຈັດໃຫ້ການມີສຳມະນາ ແລະ ການຝຶກອົບຮົມກ່ຽວກັບຜະລິດຕະພັນ ແລະບໍລິການດ້ານກອງທຶນ ການປະສານງານ ກັບບຸກ ຄົນພາຍນອກ (ເຊັ່ນ: ຜູ້ຮັບຝາກຊັບສິນ, ຜູ້ດູແລຜົນປະ ໂຫຍດຂອງ ກອງທຶນລວມ (Trustee) ຜູ້ຈັດການກອງທຶນຍ່ອຍ (Sub-Manager),

ຈຸດປະສົງ	ລາຍລະອຽດ
	ການສະໜອງກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະບໍລິການ ຂອງກຸ່ມກຸງສີ (ເຊັ່ນ: ການບໍລິຫານຈັດການກອງທຶນລວມ, ກອງທຶນສວນບຸກຄົນ ແລະກອງທຶນສຸຳຮອງລ້ຽງຊີບ, ການແກ້ໄຂເພີ່ມເຕີມ ແລະການເກັບຮັກສາສັນຍາຕ່າງໆ ທີ່ກ່ຽວ ຂອງຕາມຄຳຮ້ອງຂໍຂອງທ່ານ ແລະ/ຫຼື ອີງຕາມກົດໝາຍ ແລະລະບຽບທີ່ນຳໃຊ້) ການຮັກສາຊື່ຜູ້ໃຊ້ຂອງທ່ານ ແລະກວດສອບຜົນການປະເມີນຄວາມສ່ຽງຂອງທ່ານ ໂດຍນຳໃຊ້ແບບທົດສອບຄວາມເໝາະສົມ, ການແຕ່ງຕັ້ງຜູ້ຈັດການກອງທຶນຍ່ອຍ (Sub-Manager) ໃຫ້ຮັບຜິດຊອບເຮັດວຽກຢູ່ຕ່າງປະເທດ ຫຼື ຜູ້ຮັບຝາກຊັບສິນ, ຜູ້ດູແລຜົນປະໂຫຍດກອງທຶນລວມ (Trustee) ເພື່ອໃຫ້ການສະໜັບສະໜຸນມຸ່ງສູ່ໃນການນຳສະເໜີຜະລິດຕະພັນ ແລະບໍລິການ, ການດຳເນີນການກ່ຽວກັບແຊັກທີ່ຮອດກຳນົດຮຽກເກັບ, ການດຳເນີນການຍຸບເລີກກອງທຶນ ການປິດບັນຊີການອຳນວຍຄວາມສະດວກໃຫ້ທ່ານ ໃນກໍລະນີທີ່ທ່ານຂໍຮັບຜະລິດຕະພັນ ແລະບໍລິການຈາກບຸກຄົນພາຍນອກ, ການໃຫ້ການສະໜັບສະໜຸນ ແລະການເຮັດກິດຈະກຳອື່ນໆ ທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະບໍລິການດັ່ງກ່າວ. • **ການດຳເນີນການກ່ຽວກັບຫຼັກຊັບ ແລະຕາສານອະນຸພັນ** ການໃຫ້ບໍລິການວາງແຜນ/ທີ່ປຶກສາທາງດ້ານການເງິນ, ບໍລິການນາຍໜ້າຊື້ຂາຍຫຼັກຊັບ, ການຄ້ຳຫຼັກຊັບ, ການຮັບປະກັນ/ການບໍ່ຮັບປະກັນການຈຳໜ່າຍຫຼັກຊັບ, ຕົວແທນສະໜັບສະໜຸນການຂາຍ ຫຼື ຮັບຊື້ຄືນໜ່ວຍລົງທຶນ, ການຈັດການກອງທຶນລວມ, ການຈັດການກອງທຶນສ່ວນບຸກຄົນ, ທີ່ປຶກສາການລົງທຶນ, ການໃຫ້ຢືມ ແລະຢືມຫຼັກຊັບ, ການຊື້ຂາຍຕາສານໜີ້, ການຄ້ຳຕາສານອະນຸພັນ, ນາຍໜ້າຊື້ຂາຍຕາສານອະນຸພັນ, ການໃຫ້ ຄຳປຶກສາດ້ານຕາສານອະນຸພັນ ແລະການຈັດການກອງທຶນຕາສານອະນຸພັນ, ການຈັດຫາຜະລິດຕະພັນເພື່ອການລົງທຶນ ແລະການປ້ອງກັນຄວາມສ່ຽງ (ລວມທັງຜະລິດຕະພັນຂອງບຸກຄົນພາຍນອກ), ການວິໄຈ, ການວາງແຜນ ແລະການວິເຄາະສະຖິຕິ ເຊັ່ນ: ຂໍ້ມູນບັນຊີ ຂໍ້ມູນວົງເງິນລົງທຶນ, ຂໍ້ມູນ Credit Limit & Total Exposure ຂໍ້ມູນປະຫວັດການຊຳລະເງິນ ແລະພຶດຕິກຳການລົງທຶນຂອງທ່ານ ເພື່ອຈຸດປະສົງໃນການພັດທະນາຜະລິດຕະພັນ ແລະບໍລິການ ແລະ ເພື່ອວັດຖຸປະສົງໃນການຫຼຸດຄວາມສ່ຽງຂອງການເກີດພຶດຕິກຳການຊື້ຂາຍຫຼັກຊັບທີ່ບໍ່ເໝາະສົມ ແລະຫຼຸດໂອກາດການຜິດນັດຊຳລະລາຄາຄ້ຳຊື້ຂາຍຫຼັກຊັບ. • **ການດຳເນີນການກ່ຽວກັບບັດເຄຣດິດ, ບັດສິນເຊື່ອສ່ວນບຸກຄົນ** ການພິຈາລະນາເພີ່ມ ຫຼື ຫຼຸດວົງເງິນສິນເຊື່ອຊົ່ວຄາວ ຫຼື ຖາວອນ, ການປັບລະດັບ (ເພີ່ມຂຶ້ນ ຫຼື ຫຼຸດລົງ) ບັດເຄຣດິດ, ທົບທວນວົງເງິນ ແລະການສະເໜີປ່ຽນໜ້າບັດໃຫ່ມ. • **ການດຳເນີນກິດຈະກຳກ່ຽວກັບລາງວັນ** ການໃຫ້ບໍລິການແລກແຕ້ມ, ຄະແນນສະສົມ ຫຼື ລາງວັນ ໂດຍບາງກໍລະນີ ຈະພິຈາລະນາຈາກການບໍລິການທາງການເງິນ, ສະຖານະລູກຄ້າ, ບັດບາງປະເພດ ຫຼື ຜະລິດຕະພັນ ແລະບໍລິການທີ່ທ່ານສະໝັກໃຊ້ ການອອກ ແລະປະກາດລາງວັນຜ່ານສື່ຕ່າງໆ ຫຼື ຜ່ານແພັດຟອມເຄືອຂ່າຍສັງຄົມອອນໄລນ. • **ການດຳເນີນການກ່ຽວກັບການຕໍ່ອາຍຸຜະລິດຕະພັນ ແລະບໍລິການ** ການສະເໜີ ການແຈ້ງເຕືອນກ່ຽວກັບການຕໍ່ອາຍຸຜະລິດຕະພັນ ແລະບໍລິການ ການຕໍ່ອາຍຸບັດ ການຮັກສາບັນຊີເງິນຝາ • **ການດຳເນີນການກ່ຽວກັບກົມມະທັນປະກັນໄພ** ການບໍລິການຮັກສາກົມມະທັນປະກັນໄພ ການຕໍ່ອາຍຸກົມມະທັນປະກັນໄພສະບັບປະຈຸບັນ ການພິຈາລະນາຮັບປະກັນໄພສຳລັບກົມມະທັນປະກັນໄພ ຫຼື ການຕໍ່ອາຍຸການຮັບປະກັນ ການເລີ່ມມີຜົນຂອງການຮັບປະກັນທີ່ໄດ້ຕໍ່ອາຍຸ ການດຳເນີນການ ອອກກົມມະທັນປະກັນໄພ ການຮຽກຮ້ອງຄ່າຊົດເຊີຍຕາມກົມມະທັນປະກັນໄພ ການຊ່ວຍຈັດກຽມເອກະສານທີ່ຕ້ອງໃຊ້ໃນການຮຽກຮ້ອງຄ່າຊົດເຊີຍຕາມກົມມະທັນປະກັນໄພ

ຈຸດປະສົງ	ລາຍລະອຽດ
	• **ການດຳເນີນການກ່ຽວກັບການປິດສັນຍາ ຫຼື ການສິ້ນສຸດສາຍພົວພັນພັນ** ການດຳເນີນການກ່ຽວກັບການປິດສັນຍາ ການປິດບັນຊີເງິນຝາກ ການຖອນຊັບຈຳນອງ ລວມທັງການໂອນກຳມະສິດໃນຫຼັກຊັບຄ້ຳປະກັນ ການສະເໜີລາຄາໃຫ້ແກ່ລູກຄ້າ ການປິດບັນຊີຂອງທ່ານ ແລະການດຳເນີນການ ອື່ນໆ ເພື່ອຢຸດການໃຫ້ບໍລິການແກ່ທ່ານ. • **ເພື່ອດຳເນີນການກ່ຽວກັບການໃຫ້ບໍລິການທີ່ປຶກ ສາທາງດ້ານການເງິນ** ການໃຫ້ບໍລິການທີ່ປຶກ ສາທາງດ້ານການເງິນທີ່ກ່ຽວກັບຫຼັກຊັບຕາສານທຶນ ການໃຫ້ບໍລິການທີ່ປຶກສາທາງດ້ານການເງິນທີ່ກ່ຽວກັບຫຼັກຊັບຕາສານໜີ້ ແລະ/ຫຼື ການໃຫ້ການບໍລິການເປັນຜູ້ຈັດຈຳໜ່າຍຮຸ້ນກູ້ ການໃຫ້ບໍລິການທີ່ປຶກສາທາງດ້ານການເງິນໃນການຄວບລວມ ຫຼື ເຂົ້າຊື້ກິດຈະການ ການໃຫ້ບໍລິການທີ່ປຶກສາທາງການເງິນ ທີ່ກ່ຽວກັບການຈັດຫາສິນເຊື່ອໂຄງການ ແລະການໃຫ້ບໍລິການທີ່ປຶກສາທາງການເງິນອື່ນໆ. • **ການດຳເນີນການອື່ນທີ່ຈຳເປັນຕໍ່ການໃຫ້ບໍລິການ** ເຊັ່ນ: ການອຳນວຍຄວາມສະດວກໃນການຍື່ນໃບສະໝັກເພື່ອເຮັດສັນຍາປະກັນໄພ ແລະໃຊ້ບໍລິການຂອງກຸ່ມກຸງສີ.
ການປະມວນຂໍ້ມູນການເຮັດທຸລະກຳ ແລະ/ຫຼື ການຊຳລະເງິນ	• ການໂອນເງິນ ຫຼື ຜັນປະໂຫຍດອື່ນໃດ (ລວມທັງການອຳນວຍຄວາມສະດວກໃນການໂອນເງິນ ຫຼືຜັນປະໂຫຍດດັ່ງກ່າວ) ການນຳສົ່ງເງິນ, ການບໍລິຫານຈັດການ ແລະເກັບຄ່າທຳນຽມ, ຄ່າບໍລິການ, ຄ່າພາສີອາກອນ ແລະ ດອກເບ້ຍສຳລັບບັນຊີ, ການຄິດໄລ່ ແລະໂອນດອກເບ້ຍ ແລະເງິນປັນຜົນ (ລວມທັງການອຳນວຍຄວາມສະດວກໃນການດຳ ເນີນການໂອນດັ່ງກ່າວ). • ການເປີດເຜີຍຂໍ້ມູນແກ່ຜູ້ປະກອບການ ແລະບໍລິສັດບັດເຄຣດິດເພື່ອອະນຸມັດ ແລະຫັກບັນຊີ,ການດຳເນີນການຫັກບັນຊີອັດຕະໂນມັດ ການຫັກ ບັນຊີ ແຊັກລ່ວງໜ້າ. • ການປະຕິບັດຕາມຄຳຂໍແລະຄຳສັ່ງຂອງທ່ານກ່ຽວກັບຜະລິດຕະພັນ ແລະ ບໍລິການ ລວມທັງການເຮັດທຸລະກຳທາງການເງິນ ແລະບໍລິການກ່ຽວກັບ ການຊຳລະເງິນ ການຊຳລະເງິນຕາມງວດ ລວມທັງຂະບວນການຕ່າງໆ ໃນການຊຳລະເບ້ຍປະກັນໄພ, ການໃຫ້ບາຣ໌ໂຄດໃຫ້ແກ່ລູກຄ້າສຳລັບ ການຊຳລະເງິນຄ່າບໍລິການ, ຄ່າສະແຕ໋ມອາກອນ ການກວດສອບທຸລະກຳ ການຊຳລະເງິນ, ການຢືນຢັນການເຮັດທຸລະກຳສຳເລັດ, ການບໍລິການ ກ່ຽວກັບການຊຳລະເງິນທີ່ເກີດຂຶ້ນຕາມຮອບ. • ການຮຽກເກັບເງິນ (ເຊັ່ນ: ການຮຽກເກັບຕາມເຊັກ) ການປັບໂຄງສ້າງ ຫຼື ກະທິບຍອດບັນຊີ (ເຊັ່ນ: ການປັບໂຄງສ້າງໜີ້). • ການດຳເນີນການຕ່າງໆກ່ຽວກັບການບັນທຶກລາຍການທາງການເງິນ, ການຫັກເບ້ຍປະກັນ ຈາກວົງເງິນໄຟແນນຍານພາຫະນະ, ການຍົກເລີກ ລາຍການຊຳລະເງິນ, ການຄືນເງິນໃນກໍລະນີທີ່ກຸ່ມກຸງສີປະຕິເສດທີ່ຈະໃຫ້ ບໍລິການແກ່ທ່ານ, ການສອບສວນການຊຳລະເງິນທີ່ບໍ່ຮູ້ທີ່ມາ. • ການອອກ ແລະນຳສົ່ງໃບແຈ້ງຊຳລະອາກອນ, ໃບຮຽກເກັບເງິນ, ໃບຮັບເງິນ, ໃບສະແດງຂໍ້ມູນການເຄື່ອນໄຫວບັນຊີ. • ການເຄຣດິດບັນຊີຂອງທ່ານ ການເຮັດເຄຣດິດ ດຸນດ່ຽງ ການພິຈາລະນາ ຄຳຮ້ອງຂໍຊຳລະໜີ້ບັດເຄ ດິດຂອງທ່ານ ດ້ວຍວິທີການຫັກບັນຊີເງິນຝາກ (Direct debit) ການລະງັບ ຫຼື ການຍົກເລີກການລະງັບບັນຊີ, ການເຮັດໃຫ້ບັດເຄຣດິດສາມາດກັບມາໃຊ້ໄດ້.

ຈຸດປະສົງ	ລາຍລະອຽດ
	• ການຍົກເລີກ ການຢືນຢັນ ການເກັບກຳ ການຮັບແລະການປະມວນຜົນ ການຊຳລະເງິນເບ້ຍປະກັນໄພ. • ການປະມວນຜົນ ແລະສົ່ງຕໍ່ຄຳຮຽກຮ້ອງ ຫຼື ຄຳຂໍຂອງທ່ານ ຖ້າທ່ານເປັນລູກຄ້າຂອງບໍລິສັດໃນເຄືອຂອງກຸ່ມກຸງສີ ຫຼື ເປັນລູກຄ້າຂອງພັນທະມິດຂອງກຸ່ມກຸງສີ ຫຼື ມີຄວາມສົນໃຈຜະລິດຕະພັນ ແລະ ບໍລິການຂອງບໍລິສັດໃນເຄືອ ຫຼື ພັນທະມິດທາງທຸລະກິດດັ່ງກ່າວ (ເຊັ່ນ: ຜະລິດຕະພັນປະກັນໄພ ກອງທຶນຮວມ ຮຸ້ນກູ້ ແລະຕາສານໜີ້) ການໂອນເງິນ. • ການຈັດສັນເງິນທຶນ, ການເຮັດທຸລະກຳ (ເຊັ່ນ: ການດຳເນີນການກ່ຽວກັບການຈອງຊື້ ແລະການລົງທຶນ, ການໄຖ່ຖອນ ແລະການເຮັດຄຳສັ່ງສັບປ່ຽນໜ່ວຍລົງທຶນ, ການຈ່າຍເງິນປັນຜົນ ແລະ ເງິນຕອບແທນອື່ນໆ).
ການຕິດຕາມໜີ້	• ການແຈ້ງໃຫ້ທ່ານຊາບວັນຄົບກຳນົດຊຳລະໜີ້, ຍອດເງິນຄ້າງຊຳລະ, ດອກເບ້ຍ, ຄ່າທຳນຽມ, ການຕິດຕາມໜີ້ ແລະບັງຄັບໃຊ້ສິດຕາມສັນຍາ, ການທວງໃຫ້ຊຳລະເງິນ, ການຕິດຕາມໜີ້ສິນທີ່ຄ້າງຊຳລະ ຫຼື ການກຳນົດຊຳລະ, ການເຂົ້າພື້ນທີ່ເພື່ອຮຽກເກັບໜີ້, ການດຳເນີນການກັບບັນຊີຂອງທ່ານໃຫ້ເໝາະສົມກັບກໍລະນີຕ່າງໆ (ເຊັ່ນ: ການປັບໂຄງສ້າງໜີ້) ການສືບຊັບ ແລະຍຶດຊັບ, ການກັບເຂົ້າຄອບຄອງຊັບສິນ, ຊັບສິນທີ່ໄດ້ເຊົ່າສິນເຊື່ອ/ເຊົ່າຊື້ ຫຼື ຊັບສິນທີ່ໃຊ້ເປັນຫຼັກຊັບຄ้ຳ ປะกัน ການຂາຍໜີ້ຂອງລູກຄ້າ ແລະການໂອນປะຫວັດຂອງລູກຄ້າໃຫ້ແກ່ຜູ້ຊື້ໜີ້, ການຮຽກເງິນຄືນ. • ການດຳເນີນການປะมูนขาย (ເຊັ່ນ: ການແຈ້ງໃຫ້ທ່ານຊາບກ່ຽວກັບລາຍລะอຽดการปะมูน (ເຊັ່ນ: ວັນທີ ເວລາ ສะถานที่ และบุกคืนพายนอกที่เป็นผู้ดำเนินการปะมูน)) ລวมทั้งเพื่อติดตามຊັบสิ่นที่ท่านได้เช่าสินเชื่อ/เช่าซื้อจากกุ่มกุงสีตามการให้บริการสินเชื่อเพื่อ ยึดคืน, การติดต่ท่านเพื่อไถ่ถอนชับสินที่กุ่มกุงสีได้ยึดคืน, การจัดให้มีการปะมูนขายชับสินที่กุ่มกุงสียึดคืน, การติดต่ท่านเพื่อให้โอกาดในการเข้าร่วมการขายทอดตะหลาดชับสินที่กุ่มกุงสียึดคืน, การเบิก/โอนเงินส่วนที่เกินมูนค่าชับสินที่ขายทอดตะหลาด ຫຼື ການຮຽกเก็บ/เก็บหนี้ค้างชำละ. • ການดำเนินการกับบัญชีของท่านตามความเหมาะสม, การติดต่ท่านเพื่อติดตามหนี้, การบริหานจัดการ/หักลบเงินจูงใจต่างๆ กับกรมธรรม์ประกันไพของท่าน. • ການวิเคาะข้มูนเพื่อเพิ่มประสิดทิพาบในการติดตามหนี้ โดยใช้ในการวิเคาะเชิงพื้นที่ในการติดตามหนี้สิน.
ການปับปุงข้มูนให้เป็นปะจุบัน ແລะการเก็บรักสาข้มูน	• ການปะกอบข้มูนของท่าน, เก็บกำ, บันทึก ແລะการบริหาน จัดการข้มูนของลูกค้า ลวมทั้งบันทึกอื่นๆที่กี่ยวข้อง เพื่อใช้ในการให้บริการของกุ่มกุงสี, การปับปุงข้มูนปะหวัด/ข้มูนของลูกค้าให้เป็นปะจุบัน, ถูกต้อง ແລะครบถ้วน, การสำเนา ຫຼື ເຮັดซ้ำเอกะสารกี่ยวกับแหล่งลายรับ, การบันทึกลายการทางทุละกิด ແລะการดำเนินงาน, บริหานจัดการ ແລะรักสาข้มูนกี่ยวกับการดำเนินทุละกิดของกุ่มกุงสี. • ການดำเนินการอื่นใด เพื่อรักสาข้มูน ซึ่งลวมถึงการยับยั้งการดำเนินการกี่ยวกับข้มูนบางส่วนของท่าน ลวมถึงการเก็บรักสาสันยา ແລะเอกะ สารที่กี่ยวข้องที่อาดมีการกล่าวถึงอ้างถึงท่าน.

ຈຸດປະສົງ	ລາຍລະອຽດ
ການບໍລິການດູແລລູກຄ້າ	• ການໂທເພື່ອຕ້ອນຮັບລູກຄ້າ, ການຮັບເລື່ອງຮ້ອງຮຽນ, ການຕອບຄຳຖາມ ແລະການດຳເນີນການຕາມຄຳຂໍຂອງທ່ານກ່ຽວກັບຜະລິດຕະພັນ ແລະ ບໍລິການຂອງກຸ່ມກຸງສີ, ການຟັງຄຳແນະນຳ, ຄວາມຄິດເຫັນ, ການກວດ ສອບບັນຫາຂອງທ່ານ ແລະສະເໜີແນວທາງແກ້ໄຂ. • ການດູແລບັນຊີ, ການວາງແຜນ, ການດຳເນີນການ ແລະ ການບໍລິຫານ ຈັດການສາຍພົວພັນ (ຕາມສັນຍາ) ກັບທ່ານ. • ການໃຫ້ບໍລິການລູກຄ້າກ່ຽວກັບບັດສູນຫາຍເສຍ ຫາຍ ຫຼື ຖືກລັກ ຫຼື ລູກຄ້າບ່ໄດ້ຮັບບັດ, ການ ລະງັບ ແລະຍົກເລີກບັດ, ການປ່ຽນບັດທົດແທນ ການພິຈາລະນາຄຳຮ້ອງຂອງທ່ານໃນການຍົກເວັ້ນຄ່າທຳນຽມ. • ການຈັດສົ່ງຂອງຂວັນ ຫຼື ລາງວັນ ແລະການເຮັດກິດຈະກຳອື່ນໆ ທີ່ ກ່ຽວຂ້ອງກັບການໃຫ້ບໍລິການລູກຄ້າ.
ການໂຄສະນາ, ການເຮັດການຕະຫຼາດ, ການແຈ້ງຂ່າວສານ, ການປະກາດ ແລະການແຈ້ງຂໍ້ມູນອື່ນໆກ່ຽວກັບຜະລິດຕະພັນ ແລະບໍລິການ	• ການແຈ້ງຂ່າວສານຂອງກຸ່ມກຸງສີໃຫ້ທ່ານຊາບ, ການປະກາດ ແລະການ ສົ່ງຂໍ້ມູນຮູບແບບອື່ນໃດກ່ຽວກັບຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ ທັ້ງທີ່ເປັນຜະລິດຕະພັນ ແລະບໍລິການໃນປະຈຸບັນ ຫຼື ຜະລິດຕະພັນ ແລະ ບໍລິການໃໝ່ ແລະ/ຫຼື ບໍລິສັດໃນເຄືອກຸ່ມທຸລະກິດທາງການເງິນ, ພັນທະມິດ ທາງທຸລະກິດ ແລະບຸກຄົນອື່ນທີ່ກຸ່ມກຸງສີມີສາຍພົວພັນນຳ (ເພື່ອປະໂຫຍດ ໃນການພິຈາລະນາຂໍ້ນີ້ ໃຫ້ເອີ້ນລວມກັນວ່າ **“ຜະລິດ ຕະພັນ ແລະບໍລິການ ທີ່ກ່ຽວຂ້ອງກັບກຸ່ມກຸງສີ”**) ການຕິດຕໍ່ ຫຼື ດຳເນີນການໃດໆ ເພື່ອແຈ້ງ ໃຫ້ ທ່ານຮູ້ເຖິງຂໍ້ມູນກ່ຽວກັບຜະລິດຕະພັນ ແລະບໍລິການທີ່ກ່ຽວຂ້ອງກັບກຸ່ມກຸງສີ ຊຶ່ງກຸ່ມກຸງສີເຊື່ອວ່າທ່ານ ຫຼື ອົງກອນທີ່ທ່ານເຮັດວຽກໃຫ້ນັ້ນຈະສົນໃຈ. ທັ້ງນີ້ ໂດຍຜ່ານຊ່ອງທາງການຕິດຕໍ່ທີ່ເໝາະສົມ (ເຊັ່ນ: ໄປສະນີ, ອີເມວ, ຂໍ້ ຄວາມໃນໂທລະສັບ, ໂທລະສັບ). • ການໃຫ້ຜົນປະໂຫຍດ ແລະຂໍ້ສະເໜີພິເສດສຳລັບຜະລິດຕະພັນ ແລະ ບໍລິການທີ່ກ່ຽວຂ້ອງກັບກຸ່ມກຸງສີ, ການຜະລິດ ແລະນຳສະເໜີໂຄສະນາ ອອນໄລນ໌ສຳລັບຜະລິດຕະພັນ ແລະບໍລິການທີ່ກ່ຽວຂ້ອງກັບກຸ່ມກຸງສີ ໂດຍ ໃຊ້ຊ່ອງທາງຕ່າງໆ (ລວມທັງ ສື່ສັງຄົມອອນໄລນ ແອັບພລິເຄຊັນທີ່ໃຊ້ໃນ ການສົນທະນາ ແລະສິ່ງຂໍ້ຄວາມ ເຊັ່ນ: Facebook, Google, Line ແລະ Instagram ເປັນຕົ້ນ) ການກຳນົດກຸ່ມເປົ້າໝາຍທີ່ຈະເປັນລູກຄ້າ ຂອງຜະລິດຕະພັນ ແລະບໍລິການທີ່ກ່ຽວຂ້ອງກັບກຸ່ມກຸງສີ (Target Advertising) ຫຼື ໂຄງການສົ່ງ ເສີມການຂາຍທີ່ຕົງກັບຄວາມສົນໃຈຂອງ ລູກຄ້າກຸ່ມກຸງສີ. • ການສຳຫຼວດວິເຄາະ ແລະວິໄຈດ້ານການຕະຫຼາດ ການວິເຄາະພຶດຕິກຳ ລູກຄ້າ ແລະການແບ່ງກຸ່ມລູກຄ້າ, ການວິເຄາະ ແລະຄົ້ນຫາກຸ່ມບຸກຄົນ ທີ່ມີລັກສະນະໃກ້ຄຽງກັນ (Lookalike), ການເຮັດໂຄງການເສີມສ້າງ ຄວາມຊື່ສັດຂອງລູກຄ້າ, ໂປຣແກມແນະນຳລູກຄ້າ ແລະ/ຫຼື ແຜນການ ແລະແຄມເປນອື່ນທີ່ມີລັກສະນະດຽວກັນ ລວມທັງແຜນການ ແລະແຄມ ເປນດ້ານການຕະຫຼາດ ແລະການຂາຍອື່ນໆ, ການປະກາດລາງວັນ, ການມອບລາງວັນ ແລະ/ຫຼື ການຈັບລາງວັນ, ການ ປະເມີນ ຫຼື ປັບປຸງ ປະສິດທິພາບໃນການເຮັດການຕະຫຼາດແລະແຄມເປນຕ່າງໆ, ການບໍລິຫານ ຈັດການສາຍພົວພັນກັບລູກຄ້າ ແລະໃຫ້ລູກຄ້າ ມີສ່ວນຮ່ວມ, ການວາງແຜນ ສົ່ງເສີມການຂາຍ ການຈັດງານກອງປະຊຸມສຳມະນາ ແລະການ ຢ້ຽມຊົມ ກຸ່ມກຸງສີ.

(3) ການປັບປຸງຄຸນນະພາບການບໍລິການ

ຈຸດປະສົງ	ລາຍລະອຽດ
ການເຮັດບົດລາຍງານກ່ຽວກັບການໃຫ້ບໍລິການ	ການເຮັດ ແລະເຜີຍແຜ່ບົດລາຍງານ (ທັງພາຍໃນອົງກອນ ແລະພາຍນອກອົງກອນ) ກ່ຽວກັບຜະລິດຕະພັນ ແລະບໍລິການຂອງກຸ່ມກຸງສີ (ໄດ້ແກ່ລາຍງານກ່ຽວກັບຜົນການດຳເນີນງານ, ຜົນການໃຫ້ບໍລິການ, ຍອດຂາຍ, ຜົນການຕິດຕໍ່ກັບລູກຄ້າ, ການຫັກບັນຊີສຳລັບຜູ້ປະກອບການ ແລະບໍລິສັດເຄືອຂ່າຍບັດ, ການປະເມີນມູນຄ່າຫຼັກຊັບຄ້ຳປະກັນ, ການຊຳລະເງິນສຳລັບຜູ້ປະກອບການ ແລະບໍລິສັດເຄືອຂ່າຍບັດ, ການປະເມີນຫຼັກຊັບຄ້ຳປະກັນ), ການເຮັດລາຍງານການວິເຄາະຕ່າງໆ ຕາມຂໍ້ກຳນົດຂອງໜ່ວຍງານທີ່ມີອຳນາດ ລາຍງານການວິເຄາະຕ່າງໆ (ເຊັ່ນ: ການວິເຄາະລູກຄ້າທີ່ບໍ່ມີການເຄື່ອນໄຫວບັນຊີ ເພື່ອເລີ່ມໂຄສະນາສົ່ງເສີມການຂາຍ) ແລະການລາຍງານປະເພດອື່ນໆ ເພື່ອຈຸດປະສົງທາງທຸລະກິດຂອງກຸ່ມກຸງສີ.
ການປັບປຸງຄຸນນະພາບຜະລິດ ຕະພັນ ແລະບໍລິການ	ການປັບປຸງຄຸນນະພາບຂອງຜະລິດຕະພັນ ແລະບໍລິການ ທີ່ມີຢູ່, ການພັດທະນາ ແລະການທົດສອບຜະລິດຕະພັນ ແລະການບໍລິການໃໝ່ຂອງກຸ່ມກຸງສີ ແລະພັນທະມິດທາງທຸລະກິດທີ່ເຂົ້າຮ່ວມໂຄງການກັບກຸ່ມກຸງສີ, ການພັດທະນາວິທີໃຫ້ບໍລິການໃນຮູບແບບໃໝ່ ເພື່ອຕອບສະໜອງຄວາມຕ້ອງການຂອງທ່ານ ແລະເພື່ອເຮັດໃຫ້ທຸລະກິດຂອງກຸ່ມກຸງສີເຕີບໂຕ ລວມທັງການວິເຄາະຂໍ້ມູນເພື່ອປັບປຸງຄຸນນະ ພາບການເຮັດການຕະຫຼາດ ແລະການສະເໜີຂາຍບໍລິການຂອງກຸ່ມກຸງສີ, ການວິເຄາະຂໍ້ມູນເພື່ອປັບປຸງລະບົບ (ເຊັ່ນ: ການພັດທະນາແບບຈຳລອງໃນການແບ່ງປະເພດກຸ່ມລູກຄ້າ ເພື່ອໃຫ້ສາມາດໃຫ້ບໍລິການທີ່ມີປະສິດທິພາບຫຼາຍຍິ່ງຂຶ້ນ) ການສຳຫຼວດຄວາມເພິ່ງພໍໃຈ ແລະຄວາມຄິດເຫັນຂອງລູກຄ້າ ຫຼື ບຸກຄົນອື່ນໃດທີ່ກຸ່ມກຸງສີເກັບກຳຂໍ້ມູນສ່ວນບຸກຄົນ (ເຊັ່ນ: ຜູ້ຕອບແບບສອບຖາມ), ການສຳຫຼວດຜົນການປະຕິບັດງານຂອງພະນັກງານກຸ່ມກຸງສີ, ການວິເຄາະແນວໂນ້ມໃນການນຳໃຊ້ຜະລິດຕະພັນ ແລະບໍລິການ, ການໃຫ້ບໍລິການເພື່ອຕອບສະໜອງຄວາມຕ້ອງການສ່ວນຕົວຂອງທ່ານໃນການນຳໃຊ້ຜະລິດຕະພັນ ແລະບໍລິການຕ່າງໆ ເພື່ອປະສົບການທີ່ດີທີ່ສຸດ (ເຊັ່ນ: ແອັບພລິເຄຊັນເທິ່ງມືຖື ແລະເວັບໄຊທ໌), ການຮັບຮູ້ວ່າທ່ານເຂົ້າໃຊ້ງານໂດຍໃຊ້ບຼາວເຊີ ແລະເຄື່ອງມືຕ່າງໆ, ການຕິດຕາມ ແລະວິເຄາະຜົນການດຳເນີນງານໃນການໃຫ້ບໍລິການ.
ການວິເຄາະຂໍ້ມູນ	• ການວິເຄາະການໃຊ້ບໍລິການອອນໄລນ໌ຂອງກຸ່ມກຸງສີ, ການສຶກສາເພື່ອວິເຄາະຊ່ອງທາງອອນໄລນ໌ຂອງກຸ່ມກຸງສີ (ເຊັ່ນ: ແອັບພລິເຄຊັນໃນມືຖື ແລະເວັບໄຊທ໌) ທີ່ທ່ານເຂົ້າເບິ່ງ ແລະດ່ານໃດໜຶ່ງຂອງຊ່ອງທາງອອນໄລນ໌ທີ່ທ່ານເຫັນວ່າເປັນປະໂຫຍດຫຼາຍທີ່ສຸດ, ການກວດສອບຈຳນວນຜູ້ເຂົ້າໃຊ້ຜະລິດ ຕະພັນ ແລະບໍລິການອອນໄລນ໌ຂອງກຸ່ມກຸງສີ, ການປະເມີນຈຸດເຊື່ອມຕໍ່ (Interface) ແລະປະສົບການຂອງຜູ້ໃຊ້ງານ, ການທົດສອບລັກສະນະຕ່າງໆ ຫຼື ຟັ່ງຊັນການໃຊ້ງານ, ການລະບຸແຫຼ່ງ ທີ່ມາຂອງຂໍ້ມູນຂອງທ່ານ. • ການວິເຄາະຂໍ້ມູນເພື່ອເພີ່ມໂອກາດທາງທຸລະກິດ, ການວິເຄາະການອະນຸມັດສິນເຊື່ອໃນອະນາຄົດ, ການທົບທວນສິນເຊື່ອຂອງລູກຄ້າ, ການກວດສອບແນວໂນ້ມການປະເມີນມູນຄ່າຊັບສິນ, ການທົບທວນການປະເມີນມູນຄ່າ (ສຳລັບຫຼັກຊັບຄ້ຳປະກັນ). • ການລະບຸ ແລະແກ້ໄຂບັນຫາທີ່ເກີດຂຶ້ນກັບຜະລິດຕະພັນ ແລະບໍລິການທີ່ມີຢູ່ໃນປະຈຸບັນ ລວມທັງການພັດທະນາຂໍ້ມູນທີ່ມີຄຸນນະພາບ.

ຈຸດປະສົງ	ລາຍລະອຽດ
ການໃຊ້ງານເວັບໄຊ ແລະແພັດຟອມຂອງກຸ່ມກຸງສີ	ການດູແລ ນຳໃຊ້ ຕິດຕາມກວດສອບ ແລະການບໍລິຫານຈັດການເວັບໄຊທ໌, ແພັດຟອມ ລວມທັງແອັບພລິເຄຊັ່ນໃນໂທລະສັບມືຖື ເພື່ອອຳນວຍຄວາມສະດວກ ແລະ ສາມາດນຳໃຊ້ໄດ້ຢ່າງເໝາະສົມ ມີປະສິດທິພາບປອດໄພ ໄດ້ຮັບຜົນປະໂຫຍດສູງສຸດ ແລະສອດຄ່ອງກັບຄວາມຕ້ອງການຂອງທ່ານ, ປັບປຸງໂຄງຮ່າງ (Layout) ແລະ ເນື້ອໃນທີ່ນຳສະເໜີຢູ່ໃນເວັບໄຊທ໌ ແລະ ແພັດຟອມຂອງກຸ່ມກຸງສີ ຊ່ວຍໃຫ້ທ່ານສາມາດເຂົ້າເຖິງລະບົບຕ່າງໆ ຂອງກຸ່ມກຸງສີ ແລະໃຫ້ຄວາມຊ່ວຍເຫຼືອດ້ານເຕັກນິກແກ່ທ່ານ

(4) ການບໍລິຫານຈັດການລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ປ້ອງກັນການທຸຈະລິດສໍ້ໂກງ ແລະ ການປະຕິບັດຕາມກົດໝາຍ ແລະການຮັກສາຄວາມປອດໄພຂອງຂໍ້ມູນ

ຈຸດປະສົງ	ລາຍລະອຽດ
ການກວດຈັບ ການປ້ອງກັນການທຸຈະລິດສໍ້ໂກງ ແລະການຮັກສາຄວາມປອດໄພຂອງຂໍ້ມູນ	ການຊອກຫາ ກວດຈັບ ການວິເຄາະປ້ອງກັນ ທຸລະກຳທີ່ມີລັກສະນະທຸດຈະລິດ ຄວາມສ່ຽງ ແລະແກ້ໄຂບັນຫາການທຸຈະລິດ, ການສໍ້ໂກງ, ການຫຼອກລວງ ລວມເຖິງທຸລະກຳ ແລະແອັບພລິເຄຊັ່ນທີ່ມີລັກສະນະເປັນການທຸຈະລິດ, ການລະບຸບັນຫາ, ຕິດຕາມກວດສອບ, ການຢືນຢັນຕົວຕົນ ແລະການຄວບຄຸມ ການບັນທຶກລາຍການ (Logs) ໃນການເຮັດກິດຈະກຳເທິງເຄືອຂ່າຍ, ການດຳເນີນການອື່ນໃດ ເພື່ອປ້ອງກັນກິດຈະກຳທີ່ມີເຈດຕະນາສ້າງຄວາມເສຍຫາຍ, ກິດຈະກຳທີ່ຜິດກົດໝາຍ ຫຼື ກິດຈະກຳທີ່ກ່ຽວຂ້ອງກັບການບຳລຸງຮັກສາຂໍ້ມູນໃນກໍລະນີທີ່ສາມາດດຳເນີນການໄດ້, ການກວດສອບກ່ຽວກັບຄວາມປອດໄພຂອງຂໍ້ມູນການຮັກສາຄວາມປອດໄພໃນຊີວິດ, ສຸຂະອານາໄມ, ຊັບສິນ ແລະສິດທິອື່ນໆ ຂອງບຸກຄົນ.
ການບໍລິຫານຈັດການລະບົບເຕັກໂນໂລຊີຂໍ້ມູນຂ່າວສານ	• ການຕິດຕາມກວດສອບລະບົບ, ເຄື່ອງມື ແລະ ອິນເຕີເນັດ ເພື່ອເຮັດໃຫ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານມີຄວາມປອດໄພ, ການທົດສອບການເຂົ້າເຖິງ ແລະການບຳລຸງຮັກສາລະບົບ, ການແກ້ໄຂຈຸດບົກຜ່ອງ (Debugging) ແລະຂໍ້ຜິດພາດ, ການວິເຄາະການນຳໃຊ້ບໍລິການອອນໄລນ໌ຂອງກຸ່ມກຸງສີ, ການດຳເນີນການອື່ນທີ່ກ່ຽວຂ້ອງກັບການ ບຳລຸງຮັກສາຂໍ້ມູນ ແລະວຽກງານດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂອງກຸ່ມກຸງສີ ການພັດທະນາ ແລະ ບໍລິຫານຈັດການລະບົບ ໃຫ້ການສະໜັບສະໜູນດ້ານເທັກໂນໂລຊີຂໍ້ມູນຂ່າວສານ ແລະການຊ່ວຍ ເຫຼືອເມື່ອມີບັນຫາເກີດຂຶ້ນ (Helpdesk). • ການປະຕິບັດຕາມນະໂຍບາຍເຕັກໂນໂລຊີຂໍ້ມູນຂ່າວສານ, ສ້າງ ແລະ ຮັກສາລະຫັດຜ່ານ ແລະຊື່ຜູ້ໃຊ້ງານສຳລັບທ່ານ, ການບໍລິຫານຈັດການ ການເຂົ້າເຖິງລະບົບຕ່າງໆທີ່ກຸ່ມກຸງສີມີສິດໃນການເຂົ້າເຖິງ, ການລຶບບັນຊີທີ່ບໍ່ມີການເຄື່ອນໄຫວ, ການນຳໃຊ້ລະບົບການຄວບຄຸມທຸລະກິດເພື່ອເຮັດໃຫ້ກຸ່ມ ກຸງສີສາມາດດຳເນີນທຸລະກິດ, ການລະບຸ ແລະແກ້ໄຂບັນຫາທີ່ເກີດຂຶ້ນໃນລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງກຸ່ມກຸງສີ ການຮັກສາຄວາມປອດໄພໃຫ້ແກ່ລະບົບຂອງກຸ່ມກຸງສີ
ການປະຕິບັດຕາມກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງ	ການປະຕິບັດຕາມກົດໝາຍທີ່ບັງຄັບໃຊ້ (ລວມເຖິງກົດໝາຍ ອານຸບັນຍັດຕ່າງໆ ແນວທາງປະຕິບັດກົດໝາຍ ຫຼື ໜ່ວຍງານຄຸ້ມຄອງດູແລ ຈັນຍາບັນ ຄຳສັ່ງ ຄວາມຄິດເຫັນ ການຕີຄວາມໝາຍ ຕະຫຼອດຮອດນະໂຍບາຍພາຍໃນຂອງກຸ່ມກຸງສີ ແລະບໍລິສັດໃນເຄືອ) ການຟ້ອງຄະດີ, ຕໍ່ສູ້ຄະດີ,

ຈຸດປະສົງ	ລາຍລະອຽດ
	ເຂົ້າຮ່ວມເປັນຄູ່ຄວາມຄະດີ, ຂັ້ນຕອນການພິຈາລະນາທາງກົດໝາຍ ຫຼື ການດຳເນີນການອື່ນ ເພື່ອຕໍ່ສູ້ໃນຄະດີແພ່ງ, ຄະດີອາຍາ, ການດຳເນີນຄະດີຕາມກົດໝາຍ ຫຼື ກໍລະນີມີໝາຍຮຽກພະຍານ, ຂະບວນການທາງກົດໝາຍ, ຂັ້ນຕອນການດຳເນີນຄະດີ, ຂໍ້ກຳນົດດ້ານການຄຸ້ມຄອງການນຳໃຊ້ກົດໝາຍ, ການໃຊ້ສິດຕາມກົດໝາຍຂອງກຸ່ມກຸງສີ ຫຼື ການຍົກຂໍ້ຕໍ່ສູ້ຮຽກຮ້ອງຕາມກົດໝາຍ ລວມທັງການຕິດຕາມໜີ້ ແລະການຮຽກຮ້ອງໃຫ້ຊຳລະໜີ້ທີ່ຍັງຄ້າງຢູ່, ການກວດສອບ ແລະການມີສາຍພົວພັນໃນຮູບແບບໃດໜຶ່ງກັບໜ່ວຍງານຈັດຕັ້ງພາກລັດ ຫຼື ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ລັດ ຊຶ່ງອາດ ລວມເຖິງຄຳສັ່ງຈາກເຈົ້າໜ້າທີ່ລັດທີ່ຢູ່ນອກປະເທດໄທ ແລະ/ຫຼື ການຮ່ວມມືກັບສານ, ໜ່ວຍງານຄຸ້ມຄອງ, ເຈົ້າໜ້າທີ່ລັດ ແລະໜ່ວຍງານບັງຄັບໃຊ້ກົດໝາຍ ເມື່ອກຸ່ມກຸງສີມີເຫດຜົນອັນສົມຄວນທີ່ຈະເຊື່ອວ່າກຸ່ມກຸງສີມີໜ້າທີ່ຕາມກົດໝາຍທີ່ຈະເຮັດແບບນັ້ນ ແລະ ເມື່ອກຸ່ມກຸງສີຈຳເປັນຢ່າງຍິ່ງທີ່ຈະເປີດເຜີຍຂໍ້ມູນຂອງທ່ານເພື່ອປະຕິບັດໜ້າທີ່ຕາມກົດໝາຍ, ການແກ້ໄຂຄຳຮ້ອງຮຽນລວມທັງຂໍ້ຂັດແຍ່ງ, ການປະຕິ ບັດຕາມເງື່ອນໄຂຄຸ້ມຄອງ, ການລະງັບຂໍ້ຂັດແຍ່ງ, ການວາງຊັບແທນການຊຳລະໜີ້ຢູ່ກົມບັງຄັບຄະດີ.

(5) ການບໍລິຫານຈັດການທຸລະກິດຂອງກຸ່ມກຸງສີ

ຈຸດປະສົງ	ລາຍລະອຽດ
ການບໍລິຫານຈັດການທຸລະກິດ	ການດຳເນີນທຸລະກິດຂອງກຸ່ມກຸງສີ ຊຶ່ງລວມເຖິງ ແຕ່ບໍ່ ຈຳກັດພຽງການວາງກົນລະຍຸດ ແລະການວາງແຜນສຳລັບອີງກອນໃນການດຳເດີນທຸລະກິດ ແລະດ້ານການເງິນຂອງກຸ່ມກຸງສີ, ການເພີ່ມ ແລະການທົດສອບລະບົບ/ຂະບວນການຕ່າງໆ, ການບໍລິຫານຈັດການອົງກອນພາຍໃນກຸ່ມກຸງສີ, ການຕິດຕາມ ແລະການອ້າງອີງ (ເຊັ່ນ: ເມື່ອກຸ່ມກຸງສີໄດ້ຮັບຄຳຮ້ອງຈາກທານ), ການເກັບຮັກສາ (ເຊັ່ນ: ການສຳຮອງຂໍ້ມູນ ແລະການເກັບຮັກສາຂໍ້ມູນໃນຖານຂໍ້ມູນແຍກຕ່າງຫາກ), ການປະຕິບັດຕາມນະໂຍບາຍເຕັກໂນໂລຊີຂໍ້ມູນຂ່າວສານ ແລະຄວາມຕໍ່ເນື່ອງຂອງລະບົບ ແລະການດຳເນີນງານ, ການປະຕິບັດໜ້າທີ່ຕາມສັນຍາທີ່ກຸ່ມກຸງສີເປັນຄູ່ສັນຍາ (ເຊັ່ນ: ສັນຍາກັບພັນທະມິດຂອງກຸ່ມກຸງສີ, ຜູ້ໃຫ້ບໍລິການແກ່ກຸ່ມກຸງສີ ຫຼື ບໍລິສັດຫຼັກຊັບຈັດການກອງທຶນຕ່າງໆ) ສັນຍາທີ່ກຸ່ມກຸງສີເຮັດໜ້າທີ່ເປັນນາຍໜ້າ ຫຼື ຕົວແທນ ບໍລິຫານ ແລະຄວບຄຸມ ປ້ອງກັນຄວາມສ່ຽງ, ການຄຸ້ມຄອງກິດຈະການ, ການບໍລິຫານດ້ານການເງິນ, ການບັນຊີ ແລະພາສີ ຕະຫຼອດຮອດການກວດສອບ, ການບໍລິຫານຈັດການທຸລະກິດ, ການປະຕິ ບັດຕາມກົດລະບຽບ, ການຄວບຄຸມພາຍໃນ, ການກວດສອບພາຍໃນ ຕະຫຼອດຮອດການປະຕິບັດຕາມນະໂຍບາຍ ແລະຂະບວນການຕ່າງໆ ອີງຕາມຫຼັກການຄຸ້ມຄອງກິດຈະການພາຍໃນ ແລະແນວທາງປະຕິບັດການຄຸ້ມຄອງທີ່ດີ.
ການເຮັດທຸລະກຳຂອງອົງກອນ	ໃນເວລາທີ່ມີການຂາຍ, ການໂອນ, ຄວບລວມ, ການປັບໂຄງສ້າງ ຫຼື ການດຳເນີນການອື່ນໆທີ່ມີລັກສະນະຄ້າຍຄືກັບທີ່ລະບຸໄວ້ຂ້າງເທິງ ກຸ່ມກຸງສີຕ້ອງເປີດເຜີຍ ແລະໂອນຂໍ້ມູນຂອງທ່ານໃຫ້ບຸກຄົນໃດໜຶ່ງພາຍນອກ ຫຼື ຫຼາຍກວ່ານັ້ນຕາມຂໍ້ກຳນົດໃນການເຮັດທຸລະກຳດັ່ງກ່າວ.

ຈຸດປະສົງ	ລາຍລະອຽດ
ການຈັດຫາຜະລິດຕະພັນ ແລະ ບໍລິການ ແລະການສື່ສານກ່ຽວກັບການດຳເນີນທຸລະກິດ (ຈຸດປະສົງຂໍ້ນີ້ນຳໃຊ້ໃນກໍລະນີທີ່ກຸ່ມກຸງສີເກັບກຳຂໍ້ມູນຂອງທ່ານໃນຖານະບຸກຄົນທີ່ພົວພັນກັນກັບພັນທະມິດທາງທຸລະກິດ)	• ການຊື້ຜະລິດຕະພັນ ຫຼື ບໍລິການຈາກພັນທະມິດຂອງກຸ່ມກຸງສີ (ເຊັ່ນ: ການສ້າງ ແລະສົ່ງຄຳສັ່ງຊື້ໃຫ້ແກ່ທ່ານ ຫຼື ພັນທະມິດທາງທຸລະກິດ) ການຕິດຕໍ່ກັບທ່ານໃນເວລາທີ່ທ່ານ ຫຼື ພັນທະມິດທາງທຸລະກິດຂາຍຜະລິດ ຕະພັນ ຫຼື ບໍລິການໃຫ້ກັບກຸ່ມກຸງສີ, ການດຳເນີນການກ່ຽວກັບການຊຳລະເງິນ, ການວາງແຜນ, ການດຳເນີນການ ແລະການບໍລິຫານຈັດການສາຍພົວພັນ (ຕາມສັນຍາ) ກັບທ່ານ ຫຼື ພັນທະມິດທາງທຸລະກິດ, ການຄວບຄຸມດຸແລ ການປະຕິບັດຕາມສັນຍາ ແລະນະໂຍ ບາຍຂອງກຸ່ມກຸງສີຂອງທ່ານ ຫຼື ພັນທະມິດທາງທຸລະກິດ ຕະຫຼອດຮອດການປະຕິບັດຕາມຂໍ້ກຳນົດພາຍໃນ ກຸ່ມກຸງສີ ຕະຫຼອດຈົນຂໍ້ກຳນົດຂອງບໍລິສັດໃນເຄືອຂອງກຸ່ມກຸງສີ (ລວມທັງ ການສຶບສວນ ແລະດຳເນີນການແກ້ໄຂການບໍ່ປະຕິບັດຕາມຂໍ້ກຳນົດ ຫຼື ນະໂຍບາຍດັ່ງກ່າວ) • ການຈັດສັນເງິນທຶນ, ການເຮັດທຸລະກຳ (ເຊັ່ນ: ການດຳເນີນການຈອງຊື້ ແລະການລົງທຶນໃນທຸລະກິດຂອງທ່ານ ຫຼື ພັນທະມິດທາງທຸລະກິດຂອງທ່ານ) • ການຕິດຕໍ່ສື່ສານກັບທ່ານ ຫຼື ພັນທະມິດທາງທຸລະກິດກ່ຽວກັບການດຳເນີນ ທຸລະກິດ (ເຊັ່ນ: ການສື່ສານກັບພັນທະມິດທາງທຸລະກິດກ່ຽວກັບໂຄງການ ຂອງກຸ່ມກຸງສີ ຫຼື ໂຄງການຂອງພັນທະມິດທາງທຸລະກິດ) ຫຼື ກ່ຽວກັບໂອກາດ ທາງທຸລະກິດອື່ນໆ (ເຊັ່ນ: ການຕອບຄຳຖາມ ຫຼື ຄຳຂໍ ແຈ້ງຂາວລວມທັງສິ່ງ ພິມຕ່າງໆ ທີ່ທ່ານອາດສົນໃຈ) ການໃຫ້ຄວາມຊ່ວຍເຫຼືອ ແລະ ອຳນວຍ ຄວາມສະດວກແກ່ທ່ານ ຫຼື ພັນທະມິດທາງທຸລະກິດຂອງທ່ານ ໃນຂະນະທີ່ ເຂົ້າຮ່ວມໂຄງການກັບກຸ່ມກຸງສີ ຊຶ່ງລວມເຖິງການຈັດງານ ແລະ ກອງປະຊຸມ ທີ່ກ່ຽວຂ້ອງ • ການປະກອບຂໍ້ມູນຂອງທ່ານ ຫຼື ພັນທະມິດທາງທຸລະກິດ ເກັບກຳ ບັນທຶກ ແລະ ການບໍລິຫານຈັດການຖານຂໍ້ມູນຂອງທ່ານ ຫຼື ພັນທະມິດທາງທຸລະກິດ ລວມທັງບັນທຶກອື່ນໆ ທີ່ກ່ຽວຂ້ອງເພື່ອໃຊ້ໃນການໃຫ້ບໍລິການຂອງກຸ່ມກຸງສີ ການປັບປຸງຂໍ້ມູນປະຫວັດ/ຂໍ້ມູນຂອງທ່ານ ຫຼື ພັນທະມິດທາງທຸລະກິດໃຫ້ ທັນສະໄໝ ຖືກຕ້ອງ ແລະ ຄົບຖ້ວນ ສຳເນົາ ຫຼື ເຮັດຊ້ຳເອກະສານກ່ຽວກັບ ແຫຼ່ງລາຍຮັບ ການບັນທຶກທຸລະກຳທາງທຸລະກິດ ແລະ ການດຳເນີນງານ ການບໍລິຫານຈັດການ ແລະ ເກັບຮັກສາຂໍ້ມູນກ່ຽວກັບການດຳເນີນທຸລະກິດ ຂອງກຸ່ມກຸງສີ • ການດຳເນີນການກ່ຽວກັບການປິດສັນຍາ ແລະ/ຫຼື ການດຳເນີນການອື່ນໆ ເພື່ອສິ້ນສຸດສາຍພົວພັນກັບທ່ານ ຫຼື ພັນທະມິດທາງທຸລະກິດ

(6) ພົວພັນກັບຜູ້ຖືຮຸ້ນຂອງບໍລິສັດໃນກຸ່ມກຸງສີ

ຈຸດປະສົງ	ລາຍລະອຽດ
ການບໍລະຫານຈັດການກ່ຽວຜູ້ຖືຮຸ້ນ ຂອງບໍລິສັດໃນກຸ່ມກຸງສີ	ການລະບຸຕົວຕົນ ແລະລາຍເຊັນ ເຊັ່ນ: ໃນເວລາທີ່ທ່ານຕິດຕໍ່ເຮັດທຸລະກຳ, ໃຊ້ສິດຕາມກົດໝາຍຂອງທ່ານໃນຖານະຜູ້ຖືຮຸ້ນກັບບໍລິສັດໃນກຸ່ມກຸງສີທີ່ ທ່ານເປັນຜູ້ຖືຮຸ້ນ ຫຼື ດຳເນີນການໃດໜຶ່ງໃນນາມຂອງຜູ້ຖືຮຸ້ນ, ການບໍລິຫານ ຈັດການກອງປະຊຸມຜູ້ຖືຮຸ້ນ, ການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ, ການອອກສຽງ, ການງົດອອກສຽງ ການອອກ/ໂອນໃບຢັ້ງຢືນຊື້ຮຸ້ນ/ຈຳໜ່າຍຮຸ້ນທະບຽນ ຜູ້ຖືຮຸ້ນ ຫຼື ເອກະສານອື່ນໆທີ່ກ່ຽວຂ້ອງ.

2.3. ຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ

ກຸ່ມກຸ້ງສີອາດເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນເມື່ອກຸ່ມກຸ້ງສີໄດ້ຮັບຄວາມຍິນຍອມຈາກທ່ານຢ່າງ ຈະແຈ້ງເທົ່ານັ້ນ ຍົກເວັ້ນໃນກໍລະນີທີ່ມີຈຸດປະສົງເພື່ອສ້າງສິດຮຽກຮ້ອງຕາມກົດໝາຍຍົກຂຶ້ນມາເພື່ອຕໍ່ສູ້ກັບການຮຽກຮ້ອງສິດຕາມ ກົດໝາຍ ປະຕິບັດຕາມ ຫຼື ໃຊ້ສິດຮຽກຮ້ອງທາງຕາມກົດຫມາຍ ຕະຫຼອດຮອດການປະຕິບັດໜ້າທີ່ຕາມກົດໝາຍ ເພື່ອຜົນປະໂຫຍດ ສາທາລະນະທີ່ສຳຄັນ ຫຼື ໃນກໍລະນີອື່ນໆທີ່ກົດໝາຍກຳນົດ ແລະອະນຸຍາດໄວ້ ໃນກໍລະນີທີ່ກຸ່ມກຸ້ງສີຕ້ອງໄດ້ຮັບຄວາມຍິນຍອມ ຈາກທ່ານ ກຸ່ມກຸ້ງສີຈະຂໍຄວາມຍິນຍອມຈາກທ່ານໂດຍໃຊ້ວິທີທີ່ເໝາະສົມ ທັງນີ້ປະເພດຂອງຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ ຊຶ່ງກຸ່ມກຸ້ງສີຈະເກັບກຳຈາກທ່ານນັ້ນ ຈະຂຶ້ນກັບປັດໃຈຕ່າງໆ ຊຶ່ງ ລວມເຖິງການພິຈາລະນາວ່າບໍລິສັດໃດໃນກຸ່ມກຸ້ງສີທີ່ທ່ານຕິດຕໍ່ນຳ.

ປະເພດຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ	ຈຸດປະສົງ
ບັນທຶກປະຫວັດຄະດີອາຍາ	ການເກັບກຳ ແລະນຳໃຊ້ບັນທຶກຄະດີອາຍາຂອງທ່ານເພື່ອຊອກຫາ ແລະ ປ້ອງກັນການກະທຳຜິດກົດໝາຍ ແລະການທຸຈະລິດສໍ້ໂກງ, ການດຳເນີນ ຄະດີເມື່ອມີເຫດການດັ່ງກ່າວ ລວມທັງໃນກໍລະນີທີ່ຕ້ອງປະຕິບັດຕາມ ຂໍ້ກຳນົດກົດຫມາຍ ແລະກົດລະບຽບທີ່ນຳໃຊ້.
ຂໍ້ມູນຊີວະພາບ	ກຸ່ມກຸ້ງສີຕ້ອງເກັບກຳ ແລະໃຊ້ຂໍ້ມູນຊີວະພາບຂອງທ່ານ (ເຊັ່ນ: ຂໍ້ມູນຮູບພາບ ຈຳລອງໃບໜ້າ, ຂໍ້ມູນຈຳລອງລາຍນິ້ວມື) ເພື່ອກວດສອບຕົວຕົນຂອງລູກຄ້າ ໃນຂະບວນການພິຈາລະນາເພື່ອອອກບັດເຄຣດິດ, ເພື່ອອະນຸມັດສິນເຊື່ອ ສ່ວນບຸກຄົນ ແລະ/ຫຼື ພິຈາລະນາອະນຸມັດສິນເຊື່ອເຊົ່າສິນເຊື່ອ ແລະສັນຍາ ກູ້ຢືມເງິນ ເພື່ອຢືນຢັນຕົວຕົນ, ສະໝັກໃຊ້, ເຂົ້າເຖິງ ແລະ/ຫຼື ດຳເນີນການອື່ນ ເພື່ອນຳໃຊ້ຜະລິດຕະພັນ ແລະບໍລິການຂອງກຸ່ມກຸ້ງສີ (ເຊັ່ນ: ການເປີດ ຫຼື ເຂົ້າເຖິງບັນຊີໂດຍໃຊ້ແອັບພລິເຄຊັນໂທລະສັບມືຖື, ການເປີດບັນຊີຜ່ານສາຂາ). ນອກຈາກນີ້, ກຸ່ມກຸ້ງສີອາດເກັບກຳຂໍ້ມູນສຽງຂອງທ່ານເພື່ອກວດສອບຕົວຕົນ ຂອງລູກຄ້າໃນການແກ້ໄຂບັນຫາທີ່ທ່ານໄດ້ແຈ້ງ ລວມທັງເປີດເຜີຍຂໍ້ມູນສຽງ ຂອງທ່ານກັບຜູ້ໃຫ້ບໍລິການຮັບຮູ້ສຽງເພື່ອປັບ ແລະວິເຄາະຂໍ້ມູນສຽງຂອງທ່ານ.
ຂໍ້ມູນສາສະໜາ	ໂດຍທົ່ວໄປແລ້ວ ການສະເໜີຜະລິດຕະພັນ ແລະບໍລິການໃຫ້ແກ່ທ່ານນັ້ນ ກຸ່ມກຸ້ງສີຈະບໍ່ຂໍຂໍ້ມູນກ່ຽວກັບສາສະໜາຂອງທ່ານ. ເຖິງຢ່າງໃດກໍ່ຕາມ ໃນທາງ ປະຕິບັດ ກຸ່ມກຸ້ງສີອາດໄດ້ຮັບຂໍ້ມູນກ່ຽວກັບສາສະໜາຈາກທ່ານທີ່ບໍ່ສາມາດ ຫຼີກລ້ຽງໄດ (ເຊັ່ນ: ເມື່ອກຸ່ງກຸ້ງສີສະແກນບັດປະຈຳຕົວຂອງທ່ານເພື່ອໃຊ້ ເປັນເອກະສານປະກອບໃນການເຮັດສັນຍາ/ສະໝັກໃຊ້ຜະລິດຕະພັນ ແລະ ບໍລິການ ຫຼື ເພື່ອກວດສອບຕົວຕົນຂອງຄູ່ຄ້າ, ບຸກຄົນທົ່ວໄປ, ກຳມະການ, ຜູ້ຖືຮຸ້ນ, ຜູ້ມີສິດລົງນາມຂອງບໍລິສັດ) ໃນກໍລະນີດັ່ງກ່າວ ກຸ່ມກຸ້ງສີຈະຮັກສາ ຄວາມປອດໄພຂອງຂໍ້ມູນຂ່າວກ່ຽວກັບສາສະໜາຂອງທ່ານຕາມກົດໝາຍ ທີ່ບັງຄັບໃຊ້.
ຂໍ້ມູນຄວາມພິການ	ຖ້າທ່ານມີຄວາມພິການ ກຸ່ມກຸ້ງສີອາດຈະຈຳເປັນຕ້ອງເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນກ່ຽວກັບຄວາມພິການຂອງທ່ານ ລວມທັງລາຍນິ້ວມືຂອງທ່ານ ເພື່ອເຮັດສັນຍາລະຫວ່າງທ່ານກັບກຸ່ມກຸ້ງສີ (ເຊັ່ນ: ຫາກທ່ານມີຄວາມພິການ ແລະບໍ່ສາມາດເຊັນສັນຍາກັບກຸ່ມກຸ້ງສີໄດ້ ກຸ່ມກຸ້ງສີຈະໃຫ້ທ່ານໃຊ້ລາຍ ນິ້ວມືຂອງທ່ານແທນ) ເພື່ອປະຕິບັດໜ້າທີ່ດ້ານກົດໝາຍໃຫ້ບັນລຸຈຸດປະສົງ ກ່ຽວກັບຜົນປະໂຫຍດສາທາລະນະທີ່ສຳຄັນ, ປົກປ້ອງສິດພື້ນຖານ ແລະ ຜົນປະໂຫຍດເຈົ້າຂອງຂໍ້ມູນສ່ວນບຸກຄົນ (ເຊັ່ນ: ໃນກໍລະນີຂາຍຄືນໜ່ວຍ ລົງທຶນໃນກອງທຶນປະເພດລົດຍ່ອນພາສີກ່ອນວັນຄົບກຳນົດ ຫຼື ລະເມີດ ເງື່ອນໄຂການຫັກພາສີ ຈຳເປັນຕ້ອງສະແດງຫຼັກຖານສະແດງຄວາມພິການ ເພື່ອໄດ້ຮັບການຍົກເວັ້ນພາສີໃນຕອນຈ່າຍ).

ປະເພດຂໍ້ມູນສ່ວນບຸກຄົນທີ່ມີຄວາມລະອຽດອ່ອນ	ຈຸດປະສົງ
ຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນ ໃນກໍລະນີຂອງລູກຄ້າກຸ່ມບອບບາງ	ໃນກໍລະນີທ່ານເປັນລູກຄ້າທີ່ກຸ່ມກຸງສີເຫັນວ່າຕ້ອງໃຊ້ຄວາມລະມັດລະວັງເປັນພິເສດໃນການຕິດຕໍ່ ແລະໃຫ້ບໍລິການ ເຊັ່ນ: ມີຄວາມບົກຜ່ອງທາງຫູ ຫຼື ສາຍຕາ, ມີຄວາມບົກຜ່ອງດ້ານສຸຂະພາບ ຫຼື ມີລັກສະນະຜິດປົກກະຕິອື່ນໆ ອີງຕາມປະກາດຂອງທະນາຄານແຫ່ງປະເທດໄທ ແລະສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະຕະຫຼາດຫຼັກຊັບ ກຸ່ມກຸງສີຈຳເປັນຕ້ອງເກັບກຳຂໍ້ມູນສ່ວນບຸກຄົນທີ່ລະອຽດອ່ອນຕາມທີ່ກົດໝາຍກຳນົດໄວ້ (ເຊັ່ນ: ຂໍ້ມູນສຸຂະພາບ, ຂໍ້ມູນຄວາມພິການ) ເພື່ອຈັດກຸ່ມ ແລະວິເຄາະລູກຄ້າເພື່ອນຳສະເໜີຜະລິດຕະພັນທີ່ສອດຄ່ອງກັບປະເພດຂອງກຸ່ມລູກຄ້າ. ທັ້ງນີ້ ເພື່ອໃຫ້ໄດ້ຮັບຂໍ້ມູນ ແລະຜະລິດຕະພັນ ແລະບໍລິການຢ່າງເປັນທຳ.

3. ບຸກຄົນທີ່ກຸ່ມກຸງສີອາດຈະເປີດເຜີຍຂໍ້ມູນຂອງທ່ານ

ກຸ່ມກຸງສີອາດຈະເປີດເຜີຍຂໍ້ມູນຂອງທ່ານແກ່ບຸກຄົນຕໍ່ໄປນີ້ ເພື່ອຈຸດປະສົງທີ່ລະບຸໄວ້ໃນຂໍ້ 2 ຂ້າງເທິງ. ທັ້ງນີ້ ຂຶ້ນກັບລັກສະນະສາຍພົວພັນຂອງທ່ານກັບກຸ່ມກຸງສີ, ບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ ຕະຫຼອດຮອດລັກສະນະຂອງຜະລິດຕະພັນ ແລະບໍລິການທີ່ທ່ານໄດ້ຮັບຈາກ ກຸ່ມກຸງສີ.

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
ບໍລິສັດໃນເຄືອ	ກຸ່ມກຸງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃຫ້ບໍລິສັດອື່ນໃນກຸ່ມກຸງສີ, ບໍລິສັດໃນເຄືອຂອງກຸ່ມກຸງສີ ແລະ ບໍລິສັດອື່ນພາຍໃຕ້ກຸ່ມກຸງສີ ແລະປະກອບມີ MUFG Bank, Ltd. ແລະບໍລິສັດໃນກຸ່ມຂອງ MUFG ທີ່ຕັ້ງຢູ່ໃນປະເທດໄທ ແລະປະເທດອື່ນໆ ຊຶ່ງລວມມີແຕ່ບໍ່ຈຳກັດພຽງຍີ່ປຸ່ນ, ສິງກະໂປ, ສະຫະລັດອາເມລິກາ ແລະ ອັງກິດ. ນອກຈາກນີ້ ກຸ່ມກຸງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃນລະບົບການເກັບຮັກສາຂໍ້ມູນທີ່ເປັນສູນກາງ ຫຼື ນຳໄປປະມວນຜົນຢູ່ສູນປະມວນຜົນຂໍ້ມູນພາຍໃນກຸ່ມກຸງສີ, ບໍລິສັດໃນເຄືອຂອງກຸ່ມກຸງສີ ແລະບໍລິສັດອື່ນພາຍໃຕ້ກຸ່ມກຸງສີ ເພື່ອໃຫ້ເກີດປະສິດທິພາບ.
ຜູ້ໃຫ້ບໍລິການ	ກຸ່ມກຸງສີອາດຈະຈ້າງບໍລິສັດອື່ນເພື່ອໃຫ້ບໍລິການແທນກຸ່ມກຸງສີ ແລະສະໜັບສະໜູນການປະກອບທຸລະກິດຂອງກຸ່ມກຸງສີ (ເຊັ່ນ: ຜູ້ໃຫ້ບໍລິການພາຍນອກ, ຕົວແທນ, ຜູ້ຮັບເໝົາຍ່ອຍ) ໂດຍກຸ່ມກຸງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃຫ້ແກ່ຜູ້ໃຫ້ບໍລິການເຫຼົ່ານີ້ ຫຼື ຜູ້ໃຫ້ບໍລິການດັ່ງກ່າວ ອາດຈະເກັບກຳຂໍ້ມູນຂອງທ່ານແທນໃນນາມຂອງກຸ່ມກຸງສີ ເພື່ອນຳໃຊ້ໃນຈຸດປະສົງທາງທຸລະກິດຕ່າງໆ ລວມທັງການໃຫ້ບໍລິ ການແກ່ລູກຄ້າ ເຊັ່ນ: ກຸ່ມກຸງສີວ່າຈ້າງ ແລະມອບວຽກບາງສ່ວນໃຫ້ຜູ້ບໍລິການດ້ານພື້ນຖານໂຄງລ່າງ, ເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ/ຫຼື ຊອບແວຣ໌ ລວມທັງຜູ້ໃຫ້ບໍລິການດ້ານການເກັບຮັກສາຂໍ້ມູນ ແລະ/ຫຼື ເອກະສານ, ຜູ້ໃຫ້ບໍລິການ Cloud, ຜູ້ໃຫ້ບໍລິການຊອບແວຣ, ແພັດຟອມ, ເຄືອຂ່າຍ, ຜູ້ພັດທະນາເວັບໄຊທ໌, ຜູ້ໃຫ້ບໍລິການດ້ານການຈັດສົ່ງທາງໄປ ສະນີ, ຜູ້ໃຫ້ບໍລິການດ້ານການຂົນສົ່ງ, ຜູ້ໃຫ້ບໍລິການທຳລາຍ ຜູ້ໃຫ້ບໍລິການນຳສົ່ງເອກະສານ, ຜູ້ໃຫ້ບໍລິການດ້ານການບໍລິ ຫານ ແລະການສະໜັບສະໜູນການດຳເນີນທຸລະກິດ, ຜູ້ໃຫ້ບໍລິການຊຳລະເງິນ, ຜູ້ໃຫ້ບໍລິການພິມບັດ, ຜູ້ໃຫ້ບໍລິການພິມເອກະສານ ເພື່ອໃຊ້ເປັນໃບບິນຮຽກເກັບເງິນ ຈົດໝາຍ ແລະ/ຫຼື ເອກະສານອື່ນໆ ຄ້ຳສິນຄ້ຳ, ຜູ້ຕິດຕາມໜີ້, ຜູ້ໃຫ້ບໍລິການແລກຄະແນນສະສົມ, ຜູ້ໃຫ້ບໍລິການດ້ານການຈັດການ ເພື່ອເສີມສ້າງຄວາມສັດຊື່ຂອງລູກຄ້ຳ, ບໍລິສັດຜູ້ໃຫ້ບໍລິການດ້ານການວິໄຈ ການວິເຄາະ,

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
	ຜູ້ໃຫ້ບໍລິການດ້ານພື້ນຖານໂຄງລ່າງ ບໍລິສັດຜູ້ໃຫ້ບໍລິການດ້ານການຕະຫຼາດ, ຜູ້ໃຫ້ບໍລິການສົ່ງ ອີເມລ, ຜູ້ໃຫ້ບໍລິການສົ່ງ SMS, ຜູ້ໃຫ້ບໍລິການປ່ອນຂໍ້ມູນ, ຜູ້ໃຫ້ບໍລິການດານ Credit Scoring, ຕົວແທນຜູ້ໃຫ້ບໍລິ ການການຂາຍ ທາງໂທລະສັບ, ຜູ້ໃຫ້ບໍລິການດ້ານເກັບຮັກສາຂໍ້ມູນ, ຜູ້ໃຫ້ບໍລິການຍຶດຊັບ, ຜູ້ໃຫ້ບໍລິການໂອນກຳມະສິດ, ຜູ້ໃຫ້ບໍລິການດານໂທລະຄົມມະນາຄົມ ແລະການສື່ສານ, ຜູ້ໃຫ້ບໍລິການດານ Crowd Funding, ຜູ້ໃຫ້ບໍລິການອິນເຕີເນັດ, ຜູ້ໃຫ້ບໍລິການໂທລະສັບມືຖື, ຜູ້ໃຫ້ບໍລິການ Digital ID, ຜູ້ໃຫ້ບໍລິການດ້ານການໂຄສະນາ, ຜູ້ໃຫ້ບໍລິການສື່ສັງ ຄົມອອນໄລນ, ບໍລິສັດໃຫ້ຂໍ້ມູນອ້າງອີງກ່ຽວກັບສິນເຊື່ອ, ຜູ້ໃຫ້ບໍລິການດ້ານການບໍລິຫານຄວາມສ່ຽງ, ນັກຂາວ, ຜູ້ໃຫ້ບໍລິການດ້ານປະຊາສຳພັນ ແລະ/ຫຼື Dispatcher, ຜູ້ໃຫ້ບໍລິ ການດ້ານ ເຄືອຂ່າຍການຊຳລະເງິນ, ຜູ້ໃຫ້ບໍລິການດ້ານການເກັບຮັກສາເອກະສານ ແລະການທຳລາຍເອກະສານ, ຜູ້ໃຫ້ບໍລິການດ້ານການສຳຮອງຂໍ້ມູນຂໍ້ມູນ, ຕົວແທນຜູ້ໃຫ້ບໍລິ ການການຂາຍລະບົບທາງໄກ, ຜູ້ໃຫ້ບໍລິການກ່ຽວກັບ ການຈົດທະບຽນຊັບສິນ, ຜູ້ໃຫ້ບໍລິການປະເມີນມູນຄ່າຊັບສິນ ກວດກາຊັບສິນ, ຜູ້ໃຫ້ບໍລິການປະມູນຂາຍ, ຜູ້ໃຫ້ບໍລິການຢືນຢັນຕົວຕົນ. ນອກຈາກນີ້ ກຸ່ມກຸ່ງສີອາດຕ້ອງເປີດເຜີຍ ແລະ/ຫຼື ໂອນຂໍ້ມູນຂອງທ່ານໃຫ້ກັບຜູ້ໃຫ້ບໍລິການຂອງບໍລິສັດປະກັນໄພ (ເຊັ່ນ: ຜູ້ສຳຫຼວດຄວາມເສຍຫາຍ, ຜູ້ເຈລະຈາຕົກລົງຄ່າຊົດເຊີຍ, ໂຮງໝໍ, ອູ່ສ້ອມແປງລົດ ແລະບໍລິສັດປະກັນໄພຂອງຄູ່ກໍລະນີ). ໃນກໍລະນີທີ່ກຸ່ມກຸ່ງສີໄດ້ເກັບກຳຂໍ້ມູນຂອງທ່ານໃນຖານະບຸກຄົນທີ່ພົວພັນກັນກັບພັນທະມິດທາງທຸລະກິດ ກຸ່ມກຸ່ງສີຈະເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບພັນທະມິດທາງທຸລະກິດດ້ານຜະລິດຕະພັນ ແລະບໍລິການອື່ນໆຂອງກຸ່ມກຸ່ງສີ.
ທີ່ປຶກສາວິຊາຊີບ	ກຸ່ມກຸ່ງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ ທີ່ປຶກສາວິຊາຊີບດ້ານການກວດສອບ ກົດໝາຍ ບັນຊີ ແລະການບໍລິການພາສີທີ່ເປັນຜູ້ຊ່ວຍເຫຼືອໃນການດຳເນີນທຸລະກິດຂອງກຸ່ມກຸ່ງສີ ແລະຊ່ວຍກຸ່ມ ກຸ່ງສີໃນການຕໍ່ສູ້ຄະດີ ຫຼື ຮ້ອງຟ້ອງດຳເນີນຄະດີຕາມກົດໝາຍ ເລີ່ມ ແລະຈັດການປະມູນຂາຍ ຫຼື ດຳເນີນ ການດ້ານກົດໝາຍທີ່ກ່ຽວຂ້ອງ ໄດ້ແກ່: ການວາງຊັບສິນແທນການປະຕິບັດການຊຳລະໜີ້. ໃນກໍລະນີທີ່ກຸ່ມກຸ່ງສີໄດ້ເກັບກຳຂໍ້ມູນຂອງທ່ານໃນຖານະເປັນບຸກຄົນທີ່ພົວພັນກັນກັບພັນທະມິດທາງທຸລະກິດທີ່ເປັນທີ່ປຶກສາດ້ານວິຊາຊີບຂອງກຸ່ມກຸ່ງສີ ກຸ່ມກຸ່ງສີຈະເປີດເຜີຍຂໍ້ມູນຂອງທ່ານໃຫ້ແກ່ພັນທະມິດທາງທຸລະກິດທີ່ເປັນທີ່ປຶກສາດ້ານວິຊາຊີບອື່ນໆຂອງກຸ່ມກຸ່ງສີ.
ພັນທະມິດທາງທຸລະກິດ	ກຸ່ມກຸ່ງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບບໍລິສັດຕ່າງໆ ທີ່ກຸ່ມກຸ່ງສີເຮັດວຽກຮ່ວມ ເພື່ອສະເໜີ ຫຼື ປັບປຸງການໃຫ້ບໍລິການແກ່ລູກຄ້າຂອງກຸ່ມກຸ່ງສີໃນປັດຈຸບັນ ຫຼື ອະນາຄົດ ເຊັ່ນ ສາຍການບິນ ໂຮງແຮມສູນອອກກຳລັງກາຍ, ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ແລະການສື່ສານ, ບໍລິສັດໃຫ້ບໍລິການກ່ຽວກັບການບໍລິຫານຈັດການ ແລະການປັບໂຄງສ້າງໜີ້, ຜູ້ປະກອບການທີ່ທ່ານຊື້ຜະລິດຕະພັນ ແລະບໍລິການ ເພື່ອໃຊ້ສຳລັບຈຸດປະສົງຕ່າງໆ (ເຊັ່ນ: ເພື່ອດຳເນີນການຕາມຄຳສັ່ງຊື້, ກະກຽມ ແລະຈັດສົ່ງຜະລິດຕະພັນ ແລະບໍລິການທີ່ທ່ານສັ່ງຊື້) ພັນທະມິດທາງທຸລະກິດທີ່ສ້າງໂຄງການຮ່ວມກັນ, ພັນທະມິດທາງທຸລະກິດທີ່ມີຄວາມສົນໃຈໃນການລົງທຶນ, ພັນທະມິດທາງທຸລະກິດທີ່ມີການຮ່ວມມືກັນ (Co-Branding) ບໍລິສັດຜູ້ຮັບປະກັນໄພ ແລະ ຜູ້ຮັບປະກັນໄພຕໍ່ (ເຊັ່ນ: ປະກັນໄພລົດ, ປະກັນໄພສຸຂະພາບ,

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
	ປະກັນໄພຊັບສິນ, ປະກັນໄພການເດີນ ທາງ, ປະກັນໄພອຸປະຕິເຫດສ່ວນ ບຸກຄົນ) ຕົວແທນ ແລະຜູ້ຄ້ຳ, ຜູ້ຂາຍທີ່ສົ່ງຄຳຂໍຮັບໄຟແນມຂອງລູກຄ້ຳໃຫ້ ແກ່ກຸ່ມກຸງສີ, ບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ແລະການສື່ສານ, ຜູ້ໃຫ້ບໍລິການແພັດ ຟອມການຊຳລະເງິນ ແລະເຄົ້າເຕີເຊີວິດ, ຜູ້ໃຫ້ບໍລິ ການດ້ານການສຳຫຼວດ, ຜູ້ໃຫ້ບໍລິການດ້ານການຕະ ຫຼາດ, ການເຮັດສື່ ໂຄສະນາ ແລະການຈັດກິດຈະກຳສົ່ງເສີມການຂາຍ, ທະນາຄານ ແລະ ສະຖາບັນການເງິນອື່ນ, ບໍລິສັດຫຼັກຊັບຈັດການກອງທຶນ, ບໍລິສັດຫຼັກຊັບ, ບໍລິສັດຫຼັກຊັບນາຍໜ້ຳຊື້ຂາຍໜ່ວຍລົງທຶນ ບໍລິສັດຫຼັກຊັບທີ່ປຶກສາການລົງທຶນ, ບໍລິສັດດ້ານການຕະຫຼາດ ຕົວແທນສະຖາບັນການເງິນ ບໍລິສັດຜູ້ໃຫ້ບໍລິການ ເບີໂທລະສັບ ຜູ້ໃຫ້ບໍລິການແພັດຟອມການຕະຫຼາດສຳລັບຜະລິດຕະພັນ ແລະບໍລິການທາງດ້ານການເງິນ, ຜູ້ດຳເນີນທຸລະກິດພັດທະນາອະສັງຫາ ລິມະຊັບທີ່ຍື່ນຄຳຮ້ອງຂໍສິນເຊື່ອຂອງທ່ານ ໃຫ້ແກ່ກຸ່ມກຸງສີ, ຕົວແທນຂາຍ ຂອງຜູ້ພັດທະນາອະສັງຫາລິມະສັບ ໃນກໍລະນີທີ່ກຸ່ມກຸງສີໄດ້ເກັບກຳຂໍ້ມູນຂອງທ່ານໃນຖານະທີ່ເປັນບຸກຄົນທີ່ ພົວພັນກັນກັບພັນທະມິດທາງທຸລະກິດ ກຸ່ມກຸງສີຈະເປີດເຜີຍຂໍ້ມູນຂອງ ທ່ານໃຫ້ກັບພັນທະມິດທາງທຸລະກິດອື່ນໆຂອງກຸ່ມກຸງສີ.
ສະຖາບັນການເງິນ ອົງການ ໜ່ວຍງານ ຫຼື ຜູ້ໃຫ້ ບໍລິການດ້ານການເງິນ ຂໍ້ມູນສິນເຊື່ອ ຫຼື ປະກັນໄພ	ອົງການ ໜ່ວຍງານ ຫຼືຜູ້ໃຫ້ບໍລິການດ້ານການເງິນທີ່ໃຫ້ຄວາມຊ່ວຍຫຼື ດຳເນີນງານຮ່ວມກັບ ກຸ່ມກຸງສີໃນການໃຫ້ບໍລິການທາງດ້ານການເງິນ ການກວດສອບຫຼືການແລກປ່ຽນຂໍ້ມູນລູກຄ້ຳ (ເຊັ່ນ: ທະນາຄານອື່ນ, ບໍລິສັດຫຼັກຊັບອື່ນ ສະຖາບັນການເງິນອື່ນ, ບໍລິສັດທີ່ດຳເນີນທຸລະກິດທາງ ດ້ານການເງິນອື່ນ, ບໍລິສັດຂໍ້ມູນສິນເຊື່ອ, ຜູ້ຕິດຕາມໜີ້, ອົງກອນບໍລິຫານ ຈັດການໜີ້, ຜູ້ໃຫ້ບໍລິການດ້ານການຊຳລະເງິນ, ຜູ້ໃຫ້ບໍລິການສົ່ງ ຂໍ້ຄວາມກ່ຽວກັບທຸລະກຳທາງການເງິນທີ່ມີຄວາມປອດໄພ) ການເຮັດ ທຸລະກຳການຊຳລະເງິນ ແລະສິນເຊື່ອທົ່ວໂລກ ການປະມວນຜົນທຸລະກຳ ເອເລັກໂທຣນິກທົ່ວໂລກ ຕະຫຼອດຮອດການເຮັດທຸລະກຳຫຼັກຊັບທັ້ງ ພາຍໃນ ແລະຕ່າງປະເທດ ແລະທຸລະກຳການຊຳລະເງິນ ລວມທັ້ງ ທຸລະກິດທີ່ໃຫ້ບໍລິການຂໍ້ມູນອ້າງອີງກ່ຽວກັບສິນເຊື່ອ, ໜ່ວຍງານທີ່ຮັບຜິດ ຊອບສຳລັບການຢັ້ງຢືນຄຸນນະພາບ, ບັນດາໜ່ວຍງານທີ່ໃຫ້ບໍລິການທີ່ ກ່ຽວຂ້ອງກັບການປາບປາມການທຸຈະລິດສໍ້ໂກງ, ໜ່ວຍງານທີ່ໃຫ້ບໍລິການ ຕິດຕາມໜີ້ ແລະກວດສອບຊັບສິນ ລວມທັ້ງຜູ້ຮັບຝາກຊັບສິນ, ຜູ້ດູແລ ຜົນປະໂຫຍດຂອງກອງທຶນລວມ (Trustee), ຜູ້ຈັດການກອງທຶນຍ່ອຍ (Sub-Manager), ບໍລິສັດຫຼັກຊັບທີ່ໃຫ້ບໍລິການນາຍ ໜ້ຳຊື້ຂາຍຫຼັກຊັບ, ບໍລິສັດຫຼັກຊັບຈັດການກອງທຶນ ການບໍລິການເປັນນາຍທະບຽນ, ຜູ້ຮັບຜົນປະໂຫຍດ, ຄູ່ສັນຍາ, ທະນາຄານ, ສະຖາບັນການເງິນ ແລະ ບໍລິສັດ ບັດເຄຣດິດ. ນອກຈາກນີ້ ກຸ່ມກຸງສີໃນຖານະນາຍໜ້ຳປະກັນໄພ ອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບພັນທະມິດຂອງກຸ່ມກຸງສີທີ່ເປັນ ບໍລິສັດປະກັນໄພ (ເຊັ່ນ: ບໍລິສັດປະກັນໄພລົດ, ປະກັນໄພຊັບສິນ ຫຼື ການປະກັນໄພຊີວິດ).
ບຸກຄົນພາຍນອກທີ່ທ່ານມອບສິດ ຫຼື ກຳນົດໃຫ້ກຸ່ມກຸງສີສາມາດເປີດເຜີຍຂໍ້ມູນ ຂອງທ່ານໄດ້	ກຸ່ມກຸງສີອາດຕ້ອງເປີດເຜີຍຂໍ້ມູນຂອງທ່ານຕາມທີ່ທ່ານໄດ້ໃຫ້ຄວາມຍິນຍອມ ຫຼື ຕາມທີ່ທ່ານກຳນົດໄວ້ ເຊັ່ນ: ພັນທະມິດຂອງກຸ່ມກຸງສີ.

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
ບຸກຄົນພາຍນອກທີ່ເປັນຜູ້ຮັບສິດ ຜູ້ຮັບໂອນ ຫຼື ຜູ້ຮັບໂອນພາຍໃຕ້ສັນຍາແປງໜີ້ໃໝ່	ກຸ່ມກຽງສີອາດຈະໂອນສິດ ໂອນ ຫຼື ເຮັດສັນຍາການແປງໜີ້ ໃໝ່ເພື່ອໂອນສິດ ແລະໜ້າທີ່ຂອງກຸ່ມກຽງສີໄປໃຫ້ບຸກຄົນພາຍນອກຕາມທີ່ລະບຸໄວ້ໃນສັນຍາ ລະຫວ່າງທ່ານກັບກຸ່ມກຽງສີ ກຸ່ມກຽງສີອາດເປີດເຜີຍ ຫຼື ໂອນຂໍ້ມູນຂອງທ່ານໃຫ້ຜູ້ຮັບໂອນສິດ ຜູ້ຮັບໂອນ ຫຼື ຜູ້ຮັບໂອນພາຍໃຕ້ສັນຍາແປງໜີ້ໃໝ່ ຕະຫຼອດຮອດຜູ້ທີ່ຈະເປັນຜູ້ຮັບໂອນສິດ ຜູ້ທີ່ຈະເປັນຜູ້ຮັບໂອນ ຫຼື ຜູ້ທີ່ຈະເປັນຜູ້ຮັບໂອນຕາມສັນຍາແປງໜີ້ໃໝ.
ບຸກຄົນພາຍນອກທີ່ເຮັດໜ້າທີ່ແທນທ່ານ ຫຼື ໃຫ້ບໍລິການແກ່ທ່ານ	ກຸ່ມກຽງສີອາດເປີດເຜີຍ ຫຼື ໂອນຂໍ້ມູນຂອງທ່ານໃຫ້ຕົວແທນ/ນາຍຈ້າງຂອງທ່ານ ສະປອນເຊີ ແລະບຸກຄົນພາຍນອກທີ່ມີບົດບາດໃນການໃຫ້ບໍລິການແກ່ທ່ານ ຫຼື ບຸກຄົນທີ່ເຮັດໜ້າທີ່ແທນທ່ານອາດໃຫ້ຂໍ້ມູນກ່ຽວກັບທ່ານກັບກຸ່ມກຽງສີ (ເຊັ່ນ: ໂຮງໝໍ, ອູ່ສອມແປງລົດ).
ບຸກຄົນພາຍນອກທີ່ກ່ຽວຂ້ອງໃນການເຮັດທຸລະກຳຂອງນິຕິບຸກຄົນ	ກຸ່ມກຽງສີອາດເປີດເຜີຍ ຫຼື ໂອນຂໍ້ມູນຂອງທ່ານໃຫ້ກັບພັນທະມິດທາງທຸລະກິດ, ນັກລົງທຶນ, ຜູ້ຖືຮຸ້ນທີ່ສຳຄັນ, ຜູ້ຮັບໂອນສິດ, ບຸກຄົນທີ່ຈະໄດ້ຮັບການໂອນສິດ, ຜູ້ຮັບໂອນ ຫຼື ບຸກຄົນຜູ້ທີ່ຈະເປັນຜູ້ຮັບໂອນຖ້າມີການປັບໂຄງສ້າງຂອງອົງກອນການຄວບລວມກິດຈະການ ການໄດ້ມາຈາກກິດຈະການ ການຈຳໜ່າຍ ການຊື້ ການຮ່ວມທຶນ ການໂອນສິດ ການຍຸບເລີກກິດຈະການ ຫຼື ເຫດການອື່ນໆທີ່ມີລັກສະນະຄ້າຍຄືກັນ ແລະມີການໂອນ ຫຼື ຂາຍທຸລະກິດ ຊັບສິນ ຫຼື ຮຸ້ນຂອງກຸ່ມກຽງສີ ບໍ່ວ່າຈະເປັນສ່ວນໜຶ່ງ ຫຼື ທັງໝົດ.
ໜ່ວຍງານຫຼືອົງການພາກລັດ ແລະໜ່ວຍງານອື່ນຫຼືອົງການ ທີ່ກຸ່ມກຽງສີຕ້ອງເປີດເຜີຍຂໍ້ມູນສ່ວນບຸກຄົນເພື່ອຈຸດປະສົງທາງກົດໝາຍ ຫຼື ຈຸດປະສົງທີ່ສຳຄັນອື່ນໆ	ກຸ່ມກຽງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ແກ່ • ໜ່ວຍງານພາກລັດ, ໜ່ວຍງານບັງຄັບໃຊ້ກົດໝາຍ, ໜ່ວຍງານທີ່ມີອຳນາດຄວບຄຸມ ແລະຄຸ້ມຄອງດູແລ (ເຊັ່ນ: ທະນາຄານແຫ່ງປະເທດໄທ, ຄະນະກຳມະຄຸ້ມຄອງຫຼັກຊັບ ແລະຕະຫຼາດຫຼັກຊັບ, ກົມອາກອນ, ສຳນັກງານປ້ອງກັນ ແລະປາບປາມການຟອກເງິນ, ບໍລິສັດ ສູນຮັບຝາກຫຼັກຊັບ (ປະເທດໄທ) ຈຳກັດ, ກົມການປົກຄອງ, ເຈົ້າໜ້າທີ່ຕຳຫຼວດ, ສານ, ກົມບັງຄັບຄະດີ, ກົມການຂົນສົ່ງທາງບົກ, ສຳນັກງານຄະນະກຳມະການຄຸ້ມຄອງຜູ້ບໍລິໂພກ, ໜ່ວຍງານທີ່ຮັບຜິດຊອບຈົດທະບຽນຫຼັກຊັບຄ້ຳປະກັນ, ໜ່ວຍງານທີ່ຮັບຜິດຊອບຈົດທະບຽນຫຼັກຊັບແບບບໍ່ມີໃບຢັ້ງຢືນຫຼັກຊັບ ການຈົດທະບຽນຈຳນຳຮຸ້ນ ການຈົດທະບຽນລົດ (ໃນກໍລະນີທີ່ທ່ານຊື້ປະກັນໄພແບບບັງຄັບ), ສຳນັກງານຄະນະກຳມະການຄຸ້ມຄອງ ແລະ ສິ່ງເສີມການດຳເນີນທຸລະກິດປະກັນໄພ (ເພື່ອເກັບກຳ ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ສຳນັກງານຄະນະກຳມະການຄຸ້ມຄອງ ແລະສິ່ງເສີມການດຳເນີນທຸລະກິດປະກັນໄພ ເພື່ອຜົນປະໂຫຍດໃນການຄຸ້ມຄອງ ແລະສິ່ງເສີມທຸລະກິດປະກັນໄພ ອີງຕາມກົດໝາຍວ່າດ້ວຍຄະນະກຳມະການຄຸ້ມຄອງ ແລະສິ່ງເສີມການດຳເນີນທຸລະກິດປະກັນໄພຊີວິດ, ກົດໝາຍວ່າດ້ວຍການປະກັນໄພທົ່ວໄປ, ກົດໝາຍວ່າດ້ວຍການປະກັນໄພຊີວິດ ແລະອີງຕາມນະໂຍບາຍການຄຸ້ມຄອງ ຂໍ້ມູນສ່ວນບຸກຄົນຂອງສຳນັກງານຄະນະກຳມະການ ຄຸ້ມຄອງ ແລະສິ່ງເສີມການດຳເນີນທຸລະກິດປະກັນໄພທີ່ເວັບໄຊທ໌ https://www.oic.or.th/) • ໜ່ວຍງານອື່ນຫຼືອົງການເພື່ອຈຸດປະສົງທາງກົດໝາຍ ການຄຸ້ມຄອງ ແລະຈຸດປະສົງອື່ນທີ່ສຳຄັນ ເຊັ່ນ: ຜູ້ປະກອບທຸລະກິດຫຼັກຊັບປະເພດນາຍໜ້າຊື້ຂາຍຫຼັກຊັບ ແລະປະເພດການໃຫ້ສິນເຊື່ອເພື່ອທຸລະກິດຫຼັກຊັບ ອາດເປີດ ເຜີຍຂໍ້ມູນສ່ວນບຸກຄົນ ໃນກໍລະນີທີ່ມີການຮ້ອງຂໍຈາກໜ່ວຍງານຄຸ້ມຄອງ ຫຼື ໜ່ວຍງານພາກລັດເພື່ອໃຊ້ຕາມກົດໝາຍ ການປະຕິບັດຕາມຄຳສັ່ງທາງກົດໝາຍ ການກວດສອບ ຫຼື ຂະບວນການດ້ານກົດໝາຍ/ການຮ້ອງຟ້ອງ.

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
ຜູ້ໃຫ້ບໍລິການຂອງບໍລິສັດປະກັນໄພ	ກຸ່ມກຸງສີອາດເປີດເຜີຍ ແລະ/ຫຼື ໂອນຂໍ້ມູນຂອງທ່ານໃຫ້ກັບຜູ້ໃຫ້ບໍລິການຂອງບໍລິສັດປະກັນໄພ (ເຊັ່ນ: ຜູ້ສຳຫຼວດຄວາມເສຍຫາຍ ຜູ້ເຈລະຈາຕົກລົງຄ່າຊົດເຊີຍ ໂຮງໝໍ ອູ່ສ້ອມແປງລົດ ແລະບໍລິສັດປະກັນໄພຂອງຄູ່ກໍລະນີ).
ຜູ້ໃຫ້ບໍລິການແພັດຟອມອອນໄລນ์	ກຸ່ມກຸງສີອາດເປີດເຜີຍ ແລະ/ຫຼື ໂອນຂໍ້ມູນຂອງທ່ານໃຫ້ແກ່ຜູ້ໃຫ້ບໍລິການແພັດຟອມອອນໄລນ์ທີ່ທ່ານໄດ້ສະໝັກໃຊ້ບໍລິການ
ຜູ້ຮັບຂໍ້ມູນປະເພດອື່ນ	ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບຜູ້ຮັບຂໍ້ມູນປະເພດອື່ນ ລວມທັ້ງສະມາຊິກ National Digital ID (NDID) ບໍລິສັດປະກັນໄພ ຜູ້ຕິດຕໍ່ ແລະ/ຫຼື ສະມາຊິກພາຍໃນຄອບຄົວ ນາຍຈ້າງຂອງທ່ານ ອົງກອນ/ມູນນິທິ ບໍ່ສະແຫວງຜົນກຳໄລ ໂຮງໝໍ ຫຼື ອົງກອນອື່ນໆ ທີ່ກ່ຽວຂ້ອງກັບຜະລິດຕະພັນ ແລະບໍລິການ ແລະ/ຫຼື ການບໍລິຈາກຂອງລາງວັນ/ການແລກຂອງລາງວັນ. ຕົວຢ່າງຂອງຜູ້ຮັບຂໍ້ມູນປະເພດອື່ນ ໄດ້ແກ່: • ເມື່ອທ່ານຂໍຮັບສິນເຊື່ອ ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້**ບຸກຄົນພາຍນອກເພື່ອອະນຸມັດການໃຫ້ຫຼັກຊັບຄ້ຳປະກັນສິນເຊື່ອ** ຫຼື ບ່ຽງຄັບຫຼັກຊັບຄ້ຳປະກັນສິນເຊື່ອດັ່ງກ່າວ ຫາກທ່ານຜິດນັດຊຳລະໜີ້ (ເຊັ່ນ: ບໍລິສັດຄ້ຳປະກັນສິນເຊື່ອອຸດສາຫະກຳຂະໜາດນ້ອຍ (ບສນ)) • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານພ້ອມທັງຂໍ້ມູນທີ່ຈຳເປັນອື່ນໆ ກ່ຽວກັບຫຼັກຊັບຄ້ຳປະກັນທີ່ທ່ານໃຫ້ກັບ**ສະມາຄົມຜູ້ປະເມີນມູນຄ່າຊັບສິນແຫ່ງປະເທດໄທ ແລະ/ຫຼື ສະມາຄົມນັກປະເມີນລາຄາອິດສະຫຼະໄທ** ເພື່ອປະເມີນມູນຄ່າຂອງຫຼັກຊັບຄ້ຳປະກັນຂອງທ່ານ. • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ໜ່ວຍງານອື່ນທີ່ເປັນສະມາຊິກຂອງຜູ້ໃຫ້ບໍລິການດ້ານການກວດສອບຢືນຢັນຕົວຕົນດິຈິຕອລ** ເພື່ອກວດສອບ ແລະ ຢືນຢັນຕົວຕົນຂອງທ່ານໃນເວລາທີ່ທ່ານສະໝັກໃຊ້ຜະລິດຕະພັນ ແລະບໍລິການ (ເຊັ່ນ: ສະມາຊິກຂອງ NDID). • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ຜູ້ອອກບັດເຄຣດິດ**ທີ່ອອກບັດເຄຣດິດໃຫ້ກັບທ່ານ ແລະ ທ່ານໄດ້ນຳໃຊ້ບັດເຄຣດິດດັ່ງກ່າວເພື່ອຊື້ຜະລິດຕະພັນ ແລະ ບໍລິການຈາກຜູ້ປະກອບການທີ່ເປັນພັນທະມິດຂອງກຸ່ມກຸງສີ ເພື່ອປະມວນຜົນ ແລະ ເຮັດທຸລະກຳການຊຳເງິນໃຫ້ສຳເລັດ. • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ຕົວແທນຈຳໜ່າຍລົດ** ເພື່ອແຈ້ງໃຫ້ທ່ານຊາບກ່ຽວກັບຜົນການໃຫ້ສິນເຊື່ອລົດ ແລະ ລາຍລະອຽດຕ່າງໆ ໃນເວລາທີ່ທ່ານເປັນລູກຄ້າຂອງຜະລິດຕະພັນສິນເຊື່ອລົດ. • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ບຸກຄົນຜູ້ທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ ດຳເນີນການຕ່າງໆກ່ຽວກັບການປະມູນຂາຍ**ຍານພາຫະນະທີ່ກຸ່ມກຸງສີເຂົ້າຄອບຄອງ ທັງນີ້ ເພື່ອເຜີຍແຜ່ຂໍ້ມູນກ່ຽວກັບການປະມູນຂາຍ ຖ້າທ່ານເປັນລູກຄ້າຜະລິດຕະພັນສິນເຊື່ອລົດ ຂອງກຸ່ມກຸງສີ ແລະຜິດນັດຊຳລະໜີ້ໃຫ້ແກ່ກຸ່ມກຸງສີ. • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ບຸກຄົນທີ່ພົວພັນກັນກັບຜະລິດຕະພັນ ແລະບໍລິການທີ່ທ່ານເປັນລູກຄ້າ** (ເຊັ່ນ: ຜູ້ຕິດຕໍ່ທີ່ທ່ານກຳນົດໃຫ້ກຸ່ມກຸງສີຕິດຕໍ່ໃນກໍລະນີທີ່ມີການຕິດຕາມໜີ້ ຜູ້ຄ້ຳປະກັນ ສະມາຊິກພາຍໃນຄອບຄົວຂອງທ່ານ ຜູ້ທີ່ມີການຄອບຄອງຊັບສິນທີ່ໃຫ້ເຊົ່າສິນເຊື່ອ/ເຊົ່າຊື້). • ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບຜູ້ຕາງໜ້າ ນາຍຈ້າງ ຜູ້ສະປອນເຊີຂອງທ່ານ ແລະບຸກຄົນພາຍນອກທີ່ມີໜ້າທີ່ຮັບຜິດຊອບໃນການໃຫ້ບໍລິການແກ່ທ່ານ.

ປະເພດຜູ້ຮັບຂໍ້ມູນສ່ວນບຸກຄົນ	ລາຍລະອຽດ
	• ກຸ່ມກຸງສີອາດເປີດເຜີຍຂໍ້ມູນຂອງທ່ານໃຫ້ກັບ**ບຸກຄົນທີ່ພົວພັນກັນໃນການໃຫ້ບໍລິການທີ່ທ່ານໄດ້ຮັບຈາກກຸ່ມກຸງສີ** ເຊັ່ນ: ຕົວແທນຈຳໜ່າຍຍານພາຫະນະທີ່ສົ່ງ ຄຳຮ້ອງຂໍຮັບສິນເຊື່ອໃຫ້ກັບກຸ່ມກຸງສີ ນາຍຫນ້າ ຕົວແທນຜູ້ຊື້ໜີ້ ບຸກຄົນທີ່ພົວພັນກັນກັບການບໍລິ ການທີ່ທ່ານເປັນລູກຄ້າ (ເຊັ່ນ: ຜູ້ຕິດຕໍ່ທີ່ທ່ານລະບຸໃຫ້ກຸ່ມກຸງສີຕິດຕໍ່ເພື່ອຈຸດປະສົງໃນການຕິດຕາມໜີ້ ຜູ້ຄ້ຳປະກັນ ສະມາຊິກໃນຄອບຄົວຂອງທ່ານ ຜູ້ທີ່ມີການຄອບຄອງຂອງຍານພາຫະນະທີ່ເຊົ່າຊື້) ການດຳເນີນການຂອງທະນາຄານ ທີ່ກຸ່ມກຸງສີໃຊ້ເພື່ອບໍລິ ຫານຈັດການການຊຳລະເງິນຂອງທ່ານ ແລະຜູ້ໃຫ້ບໍລິການຊຳລະເງິນດ້ວຍບັດ ຜູ້ດຳເນີນການກ່ຽວກັບ ຂໍ້ຮຽກຮ້ອງຄ່າຊົດເຊີຍ ແລະປະເມີນມູນຄ່າຊັບສິນຂອງກຸ່ມກຸງສີ ຕົວແທນການກວດສອບຊັບ ແລະຍຶດຊັບ ລວມທັ້ງບຸກຄົນທີ່ເປັນລູກຄ້າຮ່ວມໃນບັນຊີຂອງທ່ານ ຕົວແທນທີ່ສົ່ງໃບສະໜັກຂອງທ່ານໄປໃຫ້ກຸ່ມກຸງສີ ບໍລິສັດປະກັນໄພ ຜູ້ວາງແຜນການລົງທຶນທີ່ສົ່ງໃບສະໜັກຂອງທ່ານໄປໃຫ້ກຸ່ມກຸງສີ ຜູ້ຮັບໂອນສິດ ແລະ/ຫຼື ໜ້າທີ່ສະມາຊິກຂອງຜູ້ໃຫ້ບໍລິການແພັດ ຟອມລະບົບການກວດສອບຢືນຢັນຕົວຕົນແບບດິຈິຕອລ (ລວມທັງ Identity Provider (IdP) Relying Parties (RP) ແລະ Authoritative Sources (AS)) ຜູ້ຕາງໜ້າ ນາຍຈ້າງຂອງທ່ານ ຜູ້ສະປອນເຊີ ແລະບຸກຄົນພາຍນອກຂອງທ່ານທີ່ມີບົດບາດໃນການໃຫ້ບໍລິການໃຫ້ທ່ານ ແພັດຟອມ FundConnext ຫຼືແພລດຟອມທີ່ກ່ຽວຂ້ອງກັບການລົງທຶນໃນກອງທຶນລວມ, ຜູ້ໃຫ້ບໍລິການລະບົບຊຳລະເງິນ (ເຊັ່ນ FinNet) ຜູ້ໃຫ້ບໍລິການຮັບຝາກຫຼັກຊັບ/ຜູ້ຮັບຝາກຫຼັກຊັບ (ເຊັ່ນ: ບໍລິສັດຮັບຝາກຫຼັກຊັບ (ປະເທດໄທ) ຈຳກັດ, ສະມາຄົມບໍລິສັດຈັດການການລົງທຶນ, ຜູ້ຮັບຫຼັກຊັບຄ້ຳປະກັນ/ຈຳນຳ).

4. ການໂອນຂໍ້ມູນຂອງທ່ານໄປຕ່າງປະເທດ

ກຸ່ມກຸງສີອາດຕ້ອງໂອນຂໍ້ມູນຂອງທ່ານໄປຫາບໍລິສັດໃນເຄືອ, ບຸກຄົນພາຍນອກທີ່ອາໄສຢູ່ຕ່າງປະເທດ (ເຊັ່ນ: ທີ່ເຮັດວຽກຢູ່ນອກປະເທດໄທເພື່ອເຮັດ Credit Scoring ຊຶ່ງເປັນສ່ວນໜຶ່ງໃນຂະບວນການພິຈາລະນາສິນຍີ່ປຸ່ນ, ສິງກະໂປ, ໄຕ້ຫວັນ, ຟິລິບປິນ, ອິນໂດເນເຊຍ, ໄທ, ກຳປູເຈຍ, ມຽນມາ, ຫວຽດນາມ, ອິດສະຣາແອນ, ອິນເດຍ, ອິດສະຕາລີ, ສະຫະລັດ, ອັງກິດ ແລະບັນດາປະເທດໃນສະຫະພາບເອີຣົບ) ລວມທັງແພັດຟອມຂອງຄລາວ (Cloud). ທັ້ງນີ້ ເພື່ອບັນລຸຈຸດປະສົງທາງທຸລະກິດ ຫຼື ເພື່ອຜົນປະໂຫຍດຂອງທ່ານ ໂດຍຂຶ້ນກັບບໍລິສັດໃນກຸ່ມກຸງສີທີ່ທ່ານໄດ້ຕິດຕໍ່ ເຊັ່ນ: ໃນກໍລະນີທີ່ກຸ່ມກຸງສີໃຊ້ລະບົບ ແລະ ການບໍລິການ ໂອນຂໍ້ມູນຂອງທ່ານໃຫ້ຜູ້ໃຫ້ບໍລິການເຊື່ອ ຫຼື ເມື່ອກຸ່ມກຸງສີໃຫ້ບໍລິການສົ່ງເງິນ ກຸ່ມກຸງສີອາດຈະຕ້ອງສົ່ງຕໍ່ ແລະໂອນຂໍ້ມູນຂອງທ່ານໃຫ້ແກ່ທະນາຄານຕົວແທນຕ່າງປະເທດເພື່ອເຮັດທຸລະກຳໃຫ້ສຳເລັດ ຫຼື ກໍລະນີໂອນໃຫ້ແກ່ພັນທະມິດທາງທຸລະກິດຕ່າງປະເທດເພື່ອແນະນຳໂຄງການຮ່ວມທຶນຕ່າງໆ ທີ່ໜ້າສົນໃຈ ແລະເພື່ອຈຸດປະສົງອື່ນໆ ທີ່ກ່ຽວຂ້ອງກັບການເຮັດໂຄງການ ຫຼື ການດຳເນີນການເມື່ອທ່ານສະໝັກຜະລິດຕະພັນ ຫຼື ບໍລິການຂອງບໍລິສັດໃນກຸ່ມກຸງສີ ຫຼື ພັນທະມິດທາງທຸລະກິດ ນອກຈາກນີ້ ກຸ່ມກຸງສີ ອາດຈະຕ້ອງໂອນຂໍ້ມູນຂອງທ່ານໄປຕ່າງປະເທດຜ່ານຜູ້ໃຫ້ບໍລິການເຄືອຂ່າຍການຊຳລະເງິນເພື່ອໃຫ້ເຫັນດີ ແລະເຮັດທຸລະກຳຕາມທີ່ທ່ານຮ້ອງຂໍ ຂອງກຸ່ມກຸງສີອາດຈະໂອນຂໍ້ມູນໄປຍັງ Master Fund ໃນຕ່າງປະເທດ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດຂອງກອງທຶນ Master Fund ຕະຫຼອດຮອດກົດໝາຍ ແລະກົດລະບຽບການທີ່ນຳໃຊ້ ເຊັ່ນດຽວກັນອາດຕ້ອງເປີດເຜີຍຂໍ້ມູນໃຫ້ກັບຜູ້ຈັດການກອງທຶນຍ່ອຍ (Sub-Manager) ທີ່ອາໄສຢູ່ຕ່າງປະເທດເພື່ອຜົນປະໂຫຍດໃນການບໍລິຫານຈັດການກອງທຶນ ນອກຈາກນີ້ ກຸ່ມກຸງສີຍັງຕ້ອງເກັບຂໍ້ມູນຂອງທ່ານໃນເຄື່ອງແມ່ຂ່າຍ (Server) (ເຊັ່ນ: ສິງກະໂປ) ເພື່ອສະໜັບສະໜູນລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ຕັ້ງຢູ່ນອກ ສປປ ລາວ ແລະອາດຈະຕ້ອງເປີດເຜີຍ ຫຼື ໂອນຂໍ້ມູນຂອງທ່ານໃຫ້ກັບບໍລິສັດແມ່, ບໍລິສັດໃນເຄືອ, ໜ່ວຍງານຄຸ້ມຄອງ ແລະໜ່ວຍງານພາກລັດທີ່ກ່ຽວຂ້ອງຂອງປະເທດອື່ນໆ ເຊິ່ງຄະນະກຳມະການຕາມກົດໝາຍຍັງບໍ່ໄດ້ປະກາດວ່າມັນເປັນປະເທດປາຍທາງທີ່ມີມາດຕະຖານການຄຸ້ມຄອງຂໍ້ມູນສ່ວນບຸກຄົນທີ່ພຽງພໍໃນເວລາທີ່ເຮັດປະກາດສະບັບນີ້ຂຶ້ນ.

ເມື່ອມີຄວາມຈຳເປັນທີ່ກຸ່ມກຸງສີຕ້ອງໂອນຂໍ້ມູນຂອງທ່ານໄປຍັງປະເທດອື່ນ ເຊິ່ງມີມາດຕະຖານການຄຸ້ມຄອງຂໍ້ມູນສ່ວນບຸກຄົນບໍ່ທຽບເທົ່າກັບປະເທດໄທ ກຸ່ມກຸງສີຈະດຳເນີນການເພື່ອສະໜອງມາດຕະການຄຸ້ມຄອງຂໍ້ມູນສ່ວນບຸກຄົນທີ່ພຽງພໍສຳລັບຂໍ້ມູນທີ່ຖືກໂອນ ຫຼື ເພື່ອໃຫ້ການໂອນສາມາດດຳເນີນໄປຕາມກົດ ໝາຍການຄຸ້ມຄອງຂໍ້ມູນສ່ວນບຸກຄົນທີ່ນຳໃຊ້ ເຊັ່ນ: ກຸ່ມກຸງສີອາດຈະຕ້ອງຂໍໃຫ້ບຸກຄົນພາຍນອກທີ່ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງຂໍ້ມູນທີ່ໄດ້ຮັບໂອນໄປນັ້ນຕົກລົງ ແລະໃຫ້ຄຳຢືນຢັນກັບກຸ່ມກຸງສີວ່າ ຂໍ້ມູນເຫຼົ່ານັ້ນຈະໄດ້ຮັບການປົກປ້ອງຕາມມາດຕະຖານການຄຸ້ມຄອງຂໍ້ມູນສ່ວນບຸກຄົນ ທຽບເທົ່າກັບຂໍ້ກຳນົດໃນປະເທດໄທ.

5. ໄລຍະເວລາໃນການເກັບກຳຂໍ້ມູນສ່ວນບຸກຄົນຂອງທ່ານ

ກຸ່ມກຸງສີຈະເກັບກຳຂໍ້ມູນຂອງທ່ານໄວ້ເທົ່າທີ່ຈຳເປັນ ເພື່ອໃຊ້ຕາມຈຸດປະສົງໃນການເກັບກຳຂໍ້ມູນສ່ວນບຸກຄົນເທົ່ານັ້ນ ອີງຕາມລາຍລະອຽດທີ່ກຳນົດໄວ້ໃນປະກາດ ແລະກົດໝາຍທີ່ບັງຄັບໃຊ້ ແນວໃດກໍ່ຕາມ ກຸ່ມກຸງສີອາດຈຳເປັນຕ້ອງເກັບຮັກສາຂໍ້ມູນຂອງທ່ານໄວ້ໃຫ້ດົນກວ່າໄລຍະເວລາດັ່ງກ່າວ ເພື່ອປະຕິບັດຕາມກົດໝາຍ ແລະລະບຽບທີ່ບັງຄັບໃຊ້ ຕະຫຼອດຮອດນະໂຍບາຍພາຍໃນຂອງກຸ່ມກຸງສີ ຫຼື ເພື່ອໃຫ້ເປັນໄປຕາມຂໍ້ກຳນົດດ້ານການດຳເນີນງານຂອງກຸ່ມກຸງສີ (ເຊັ່ນ: ຂໍ້ກຳນົດ ເລື່ອງ ການເກັບກຳຂໍ້ມູນທາງດ້ານບັນຊີທີ່ເໝາະສົມ, ການອຳນວຍຄວາມສະດວກໃນການບໍລິຫານຈັດການສາຍພົວພັນກັບລູກຄ້າ/ຄູ່ຄ້າ) ແລະເພື່ອດຳເນີນການຕາມຂໍ້ຮຽກຮ້ອງທາງກົດໝາຍ ຫຼື ກໍລະນີທີ່ໜ່ວຍງານຄຸ້ມຄອງຮ້ອງຂໍ.

6. ສິດຂອງທ່ານ

ພາຍໃຕ້ບົດບັນຍັດຂອງກົດໝາຍວ່າດ້ວຍການຄຸ້ມຄອງຂໍ້ມູນສ່ວນບຸກຄົນ ທ່ານມີສິດໃນຫຼາຍດ້ານກ່ຽວກັບການເກັບກຳ ນຳໃຊ້ ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນສ່ວນຕົວຂອງທ່ານ ດັ່ງນີ້:

(1) **ສິດໃນການເຂົ້າເຖິງຂໍ້ມູນສ່ວນບຸກຄົນ** ທ່ານມີສິດທີ່ຈະຮ້ອງຂໍການເຂົ້າເຖິງຂໍ້ມູນສ່ວນບຸກຄົນຂອງທ່ານ ແລະຂໍຮັບສຳເນົາຂໍ້ມູນທີ່ກ່ຽວກັບການເກັບກຳ ນຳໃຊ້ ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນສ່ວນບຸກຄົນຂອງທ່ານ ແລະຂໍ້ມູນກ່ຽວກັບສະພາບຂອງຂໍ້ມູນສ່ວນບຸກຄົນຂອງທ່ານ ລວມທັງຂໍໃຫ້ເປີດເຜີຍເຖິງການໄດ້ຮັບຂໍ້ມູນສ່ວນບຸກຄົນທີ່ທ່ານບໍ່ໄດ້ໃຫ້ຄວາມຍິນຍອມ;

(2) **ສິດໃນການແກ້ໄຂຂໍ້ມູນສ່ວນບຸກຄົນໃຫ້ຖືກຕ້ອງ ເປັນປະຈຸບັນ ຄົບຖ້ວນ ແລະບໍ່ກໍ່ໃຫ້ເກີດຄວາມເຂົ້າໃຈຜິດ** ຖ້າທ່ານເຫັນວ່າຂໍ້ມູນສ່ວນບຸກຄົນຂອງທ່ານບໍ່ຖືກຕ້ອງ ບໍ່ເປັນປະຈຸບັນ ຫຼື ບໍ່ຄົບຖ້ວນ ທ່ານມີສິດຮ້ອງຂໍໃຫ້ແກ້ໄຂຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ຖືກຕ້ອງ ເປັນປະຈຸບັນ ແລະຄົບຖ້ວນ;

(3) **ສິດໃນການລຶບ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນ** ທ່ານມີສິດຮ້ອງຂໍໃຫ້ລຶບ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນຂອງທ່ານ ຕະຫຼອດຮອດການເຮັດໃຫ້ຂໍ້ມູນສ່ວນບຸກຄົນຂອງທ່ານຢູ່ໃນລັກສະນະຂອງຂໍ້ມູນທີ່ບໍ່ສາມາດລະບຸຜູ້ທີ່ເປັນເຈົ້າຂອງຂໍ້ມູນສ່ວນບຸກຄົນໄດ້ ການໃຊ້ສິດໃນການລຶບ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນດ້ວຍວິທີນີ້ຕ້ອງຢູ່ພາຍໃຕ້ເງື່ອນໄຂທີ່ກົດໝາຍກຳນົດໄວ້;

(4) **ສິດໃນການລະງັບການນຳໃຊ້ຂໍ້ມູນສ່ວນບຸກຄົນ** ທ່ານມີສິດຂໍໃຫ້ລະງັບການນຳໃຊ້ຂໍ້ມູນສ່ວນບຸກຄົນຂອງທ່ານ ໃນກໍລະນີທີ່ທ່ານພົບວ່າຂໍ້ມູນສ່ວນບຸກຄົນຂອງທ່ານບໍ່ຖືກຕ້ອງ ທ່ານອາດຈະໃຊ້ສິດລະງັບການນຳໃຊ້ຂໍ້ມູນສ່ວນບຸກຄົນດັ່ງກ່າວຈົນກວ່າຈະມີການແກ້ໄຂໃຫ້ຖືກຕ້ອງ;

(5) **ສິດໃນການຄັດຄ້ານການເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ** ທ່ານມີສິດທີ່ຈະຄັດຄ້ານການເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນທີ່ກ່ຽວກັບທ່ານ ລວມທັງກໍລະນີທີ່ມີຈຸດປະສົງກ່ຽວກັບການຕະຫຼາດໂດຍກົງ ແລະການເຮັດບັນຊີປະຫວັດ ທີ່ກ່ຽວຂ້ອງກັບການຕະຫຼາດໂດຍກົງດັ່ງກ່າວ;

(6) **ສິດໃນການຖອນການຄວາມຍິນຍອມການເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ** ໃນກໍລະນີທີ່ທ່ານເຄີຍໃຫ້ຄວາມຍິນຍອມໃນການເກັບກຳ ນຳໃຊ້ ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ທ່ານມີສິດທີ່ຈະຂໍຖອນຄວາມຍິນຍອມຕອນໃດກໍ່ໄດ້;

(7) **ສິດໃນການຂໍຮັບ ສົ່ງ ຫຼື ໂອນຂໍ້ມູນສ່ວນບຸກຄົນ** ໃນກໍລະນີທີ່ກົດໝາຍໄດ້ໃຫ້ສິດ ທ່ານມີສິດໃນການຂໍຮັບຂໍ້ມູນສ່ວນບຸກຄົນຂອງທ່ານຈາກກຸ່ມກຸງສີໃນຮູບແບບທີ່ສາມາດອ່ານ ຫຼື ໃຊ້ງານທົ່ວໄປໄດ້ໂດຍເຄື່ອງມື ຫຼື ອຸປະກອນທີ່ສາມາດໃຊ້ໄດ້ອັດຕະໂນມັດ ແລະສາມາດນຳໃຊ້ ຫຼື ເປີດເຜີຍໄດ້ດ້ວຍວິທີການອັດຕະໂນມັດ ລວມທັງການສົ່ງ ຫຼື ໂອນຂໍ້ມູນໃນຮູບແບບດັ່ງກ່າວໄປຍັງອົງກອນອື່ນໆ;

(8) **ສິດໃນການຮ້ອງຮຽນໃນກໍລະນີທີ່ທ່ານພົບວ່າກຸ່ມກຸງສີບໍ່ໄດ້ປະຕິບັດຕາມກົດໝາຍກ່ຽວກັບການຄຸ້ມຄອງຂໍ້ມູນສ່ວນບຸກຄົນ** ທ່ານມີສິດຮ້ອງຮຽນໄປຍັງໜ່ວຍງານທີ່ມີອຳນາດຄຸ້ມຄອງເກັບກຳ ນຳໃຊ້ ເປີດເຜີຍ ແລະ/ຫຼື ໂອນຂໍ້ມູນສ່ວນບຸກຄົນຂອງທ່ານ ໃນກໍລະນີທີ່ກຸ່ມກຸງສີໄດ້ດຳເນີນການໃດໜຶ່ງ ທີ່ກ່ຽວຂ້ອງກັບຂໍ້ມູນສ່ວນບຸກຄົນຂອງທ່ານ ດ້ວຍຕົວເອງ ຫຼື ມອບໝາຍໃຫ້ບຸກຄົນອື່ນເຮັດແທນ ທັ້ງນີ້ ກ່ອນການໃຊ້ສິດໃນຮ້ອງຮຽນຕໍ່ໜ່ວຍງານທີ່ກ່ຽວຂ້ອງ ກຸ່ມກຸງສີ ຂໍໃຫ້ທ່ານ ຕິດຕໍ່ມາຍັງກຸ່ມກຸງສີກ່ອນເພື່ອໃຫ້ກຸ່ມກຸງສີໄດ້ມີໂອກາດຮັບຮູ້ເຖິງຄວາມຈິງ ແລະຊີ້ແຈງບັນຫາຕ່າງໆ ຕະຫຼອດຮອດການແກ້ໄຂຄວາມກັງວົນຂອງທ່ານເປັນຄັ້ງທຳອິດກ່ອນ.

ທ່ານສາມາດແຈ້ງຄວາມຕ້ອງການທີ່ຈະໃຊ້ສິດທິດັ່ງກ່າວ ຜ່ານຊ່ອງທາງທີ່ລະບຸໄວ້ ດັ່ງນີ້:

ປະເພດເຈົ້າຂອງຂໍ້ມູນສ່ວນບຸກຄົນ	ລູກຄ້າ(Customer)			ຄູ່ຄ້າ ຫຼື ພັນທະມິດທາງທຸລະກິດ (Vendor / Business Partner)	ຜູ້ມາຕິດຕໍ່ (Visitor) / ກ້ອງວົງຈອນປິດ
ຊ່ອງທາງການໃຊ້ສິດ	Call Center 1572	ສາຂາຂອງ ທະນາຄານ	ຊ່ອງທາງ ອີເລັກໂທຣນິກ	DPO.Procurement @krungsri.com	DPO.CentralAdmin @krungsri.com / Security.center @krungsri.com
ສິດໃນການຖອນຄວາມຍິນຍອມ	-	✓	✓		
ສິດອື່ນໆ	✓	✓	-		

ທ່ານສາມາດແຈ້ງຈຸດປະສົງໃນການນຳໃຊ້ສິດດັ່ງກ່າວກັບ ບໍລິສັດຫຼັກຊັບ ກຸງສີ ພັດທະນະສິນ ຈຳກັດ (ມະຫາຊົນ) ໂດຍຜ່ານຊ່ອງທາງທີ່ລະບຸໄວ້ດັ່ງນີ້:

ປະເພດເຈົ້າຂອງຂໍ້ມູນສ່ວນບຸກຄົນ	ລູກຄ້າ(Customer)		ຄູ່ຄ້າ ຫຼື ພັນທະມິດທາງທຸລະກິດ (Vendor / Business Partner)	ຜູ້ມາຕິດຕໍ່ (Visitor) / ກ້ອງວົງຈອນປິດ
ຊ່ອງທາງການໃຊ້ສິດ	ສາຂາຂອງKCS	ຊ່ອງທາງອີເລັກໂທນິກ	dpc@krungsricapital.com	dpc@krungsricapital.com
ສິດໃນການຖອນຄວາມ	✓	✓		
ສິດອື່ນໆ	✓	✓		

ທັ້ງນີ້ ການຂໍໃຊ້ສິດຂອງທ່ານ ໃນຖານະເປັນເຈົ້າຂອງຂໍ້ມູນສ່ວນບຸກຄົນຕາມທີ່ລະບຸໄວ້ຂ້າງເທິງນັ້ນ ອາດມີຂໍ້ຈຳກັດສິດຕາມກົດໝາຍ ແລະໃນບາງກໍລະນີ ກຸ່ມກຸງສີອາດຈະປະຕິເສດຄຳຂໍຂອງທ່ານ ເມື່ອມີເຫດຜົນທີ່ສົມຄວນ ແລະຖືກຕ້ອງຕາມກົດໝາຍ ເຊັ່ນ: ໃນກໍລະນີທີ່ກຸ່ມກຸງສີຕ້ອງປະຕິບັດໜ້າທີ່ຕາມກົດໝາຍ ຫຼື ຕາມຄຳສັ່ງຂອງສານ.

7. ມາດຕະການໃນການຮັກສາຄວາມປອດໄພຂອງຂໍ້ມູນ

ກຸ່ມກຸງສີມີນະໂຍບາຍ ແລະມາດຕະຖານໃນການຄຸ້ມຄອງຂໍ້ມູນ ແລະຄວາມປອດໄພ ບໍ່ວ່າຈະເປັນມາດຕະການໃນການບໍລິຫານຈັດການ ການປ້ອງກັນດ້ານເທັກນິກ ແລະການປ້ອງກັນທາງກາຍະພາບ ກ່ຽວກັບການເຂົ້າເຖິງ ຫຼື ຄວບຄຸມການນຳໃຊ້ຂໍ້ມູນຂ່າວສານຕາມປະກາດສະບັບນີ້ ລວມທັ້ງມີນະໂຍບາຍໃຫ້ບຸກຄະລາກອນທັ້ງພາຍໃນ ແລະພາຍນອກອົງກອນທີ່ກ່ຽວຂ້ອງໄດ້ຄຳນຶງເຖິງຄວາມສຳຄັນຂອງການຮັກສາຄວາມປອດໄພດ້ານຂໍ້ມູນຂ່າວສານຢ່າງເຂັ້ມງວດ. ນອກຈາກນີ້ ກຸ່ມກຸງສີຍັງຄວບຄຸມໃຫ້ຄູ່ສັນຍາທີ່ຢູ່ຕ່າງປະເທດທີ່ກຸ່ມກຸງສີຕ້ອງສົ່ງ ຫຼື ໂອນຂໍ້ມູນສ່ວນບຸກຄົນຕ້ອງມີມາດຕະຖານໃນການຄຸ້ມຄອງຂໍ້ມູນສ່ວນບຸກຄົນທີ່ພຽງພໍ.

8. ລິ້ງເຊື່ອມຕໍ່ກັບເວັບໄຊທ໌ຂອງບຸກຄົນພາຍນອກ

ສຳລັບຜູ້ໃຊ້ງານເວັບໄຊທ໌ ບໍລິການຂອງກຸ່ມກຸງສີອາດມີການເຊື່ອມຕໍ່ໄປຍັງເຄືອຂ່າຍສັງຄົມອອນໄລນ໌ ແພັດຟອມ ແລະເວັບໄຊທ໌ອື່ນ ທີ່ມີບຸກຄົນພາຍນອກເປັນຜູ້ດຳເນີນການ ກຸ່ມກຸງສີພະຍາຍາມທີ່ຈະເຊື່ອມຕໍ່ໄປຍັງເວັບໄຊທ໌ທີ່ມີມາດຕະຖານໃນການຄຸ້ມຄອງຂໍ້ມູນສ່ວນບຸກຄົນເທົ່ານັ້ນ. ແນວໃດກໍຕາມ ກຸ່ມກຸງສີບໍ່ສາມາດຮັບຜິດຊອບດ້ານເນື້ອໃນ ຫຼື ມາດຕະຖານການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງເວັບໄຊທ໌ອື່ນເຫຼົ່ານັ້ນ ເວັ້ນເສຍແຕ່ຈະກຳນົດໄວ້ເປັນປະການອື່ນ ຂໍ້ມູນສ່ວນບຸກຄົນຕ່າງໆທີ່ທ່ານໃຫ້ແກ່ເວັບໄຊທ໌ຂອງບຸກຄົນພາຍນອກນັ້ນ ຈະຖືກເກັບກຳໂດຍບຸກຄົນດັ່ງກ່າວ ແລະຢູ່ພາຍໃຕ້ປະກາດ/ນະໂຍບາຍກ່ຽວກັບການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງບຸກຄົນພາຍນອກດັ່ງກ່າວ (ຖ້າມີ) ໃນກໍລະນີທີ່ກຸ່ມກຸງສີບໍ່ສາມາດຄວບຄຸມ ແລະບໍ່ສາມາດຮັບຜິດຊອບໃນການໃຊ້ຂໍ້ມູນສ່ວນບຸກຄົນຂອງທ່ານ ໂດຍບຸກຄົນພາຍນອກດັ່ງກ່າວ.

9. ຕິດຕໍ່ກຸ່ມກຸງສີ

ຖ້າທ່ານມີຄຳຖາມທີ່ຕ້ອງການສະເໜີ ຫຼື ທ່ານມີຄວາມກັງວົນກ່ຽວກັບແນວທາງການປະຕິບັດຂອງກຸ່ມກຸງສີກ່ຽວກັບການຄຸ້ມຄອງຂໍ້ມູນສ່ວນບຸກຄົນ ກະລຸນາຕິດຕໍ່ກຸ່ມກຸງສີຕາມທີ່ຢູ່ຂ້າງລຸ່ມນີ້ ກຸ່ມກຸງສີຈະໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບການຄຸ້ມຄອງຂໍ້ມູນສ່ວນບຸກຄົນ.

ອີເມວ: dpo.compliance@krungsri.com

ທີ່ຢູ່:
- ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ອາຄານສຳນັກງານໃຫຍ່ ເລກທີ 1222 ຖະໜົນພະຣາມທີ 3 ແຂວງ ບາງໂພງພາງ ເຂດຍານນາວາ ກຸງເທບມະຫານະຄອນ 10120
  ໂທລະສັບ: 0-2296-2000
- ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ ບ້ານຫັດສະດີ 084/1-2, ຖະໜົນລ້ານຊ້າງ, ຕູ້ ປນ 5072 ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
  ໂທລະສັບ: 021 218777
  (ສະເພາະຜູ້ທີ່ອາໄສຢູ່ໃນປະເທດລາວ ສາມາດຕິດຕໍ່ໄດ້ຜ່ານສາຂານະຄອນຫຼວງວຽງຈັນ)

ຂໍ້ມູນເພີ່ມເຕີມໃນການຕິດຕໍ່ເຈົ້າໜ້າທີ່ປົກປ້ອງຂໍ້ມູນສ່ວນບຸກຄົນຂອງກຸ່ມກຸງສີ ຕາມລາຍລະອຽດຢູ່ໃນເອກະສານຊ້ອນທ້າຍທີ່ຕິດຄັດມາກັບປະກາດສະບັບນີ້.

ເອກະສານຊ້ອນທ້າຍ
ລາຍຊື່ຂອງກຸ່ມທຸລະກິດການເງິນຂອງ ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ)

ຊື່ບໍລິສັດ	ຂໍ້ມູນສະຖານທີ່ຕິດຕໍ່ ແລະ ວິທີການຕິດຕໍ່
(1) ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) (BAY)	ອີເມວ: dpo.compliance@krungsri.com ທີ່ຢູ່: • ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສຳນັກງານໃຫຍ່ ເລກທີ 1222 ຖະໜົນພະຣາມທີ 3 ແຂວງ ບາງໂພງພາງ ເຂດຍານນາວາ ກຸງເທບມະຫານະຄອນ 10120 ໂທລະສັບ: 0-2296-2000 • ທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ, ບ້ານທັດສະດີ 084/1-2, ຖະໜົນລ້ານຊ້າງ, ຕູ້ ປນ 5072 ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໂທລະສັບ: 021 218777 (ສະເພາະຜູ້ທີ່ອາໄສຢູ່ໃນປະເທດລາວ ສາມາດຕິດຕໍ່ໄດ້ຜ່ານສາຂານະຄອນຫຼວງວຽງຈັນ)
(2) ບໍລິສັດໃນກຸ່ມກຸງສີ ຄອນຊູເມີ (KSC) ປະກອບດ້ວຍ • ບໍລິສັດ ອະຍຸດທະຍາ ແຄပປິຕອລ ເຊີວິດເຊສ ຈຳກັດ (AYCAP) • ບໍລິສັດ ບັດກຸງສີອະຍຸດທະຍາ ຈຳກັດ (KCC) • ບໍລິສັດ ເຈເນີຣັລ ຄາຣ໌ດ ເຊີວິດເຊສ ຈຳກັດ (GCS) • ບໍລິສັດ ກຸງສີ ເຈເນີຣັດ ອິນຊິວຣັນສ໌ ໂບຣກເກີ ຈຳກັດ (KGIB) • ບໍລິສັດກຸງສີ ເຈເນຊິສ ຈຳກັດ (KGS)* *ຊື່ເດີມ ຊື່ບໍລິສັດກຸງສີ ໄລຟ໌ ແອສຊິວຣັນສ໌ ໂບຣກເກີ ຈຳກັດ (KLAB)	ອີເມວ: dpo.ksconsumer@krungsri.com ທີ່ຢູ່: ອາຄານກຸງສີເພລີນຈິດທາວເວີ ເລກທີ 550 ຖະໜົນ ເພລີນຈິດ ແຂວງ ລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330 ໂທລະສັບ: 0-2627-8000
(3) ບໍລິສັດ ອະຍຸດທະຍາ ແຄပປິຕອລ ອໍໂຕ້ ລິສ ຈຳກັດ (ມະຫາຊົນ) (AYCAL)	ອີເມວ: dpo.ksauto@krungsri.com ທີ່ຢູ່ : ອາຄານກຸງສີເພລີນຈິດທາວເວີ ຊັ້ນ16 ເລກທີ 550 ຖະໜົນ ເພລີນຈິດ ແຂວງ ລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330 ໂທລະສັບ: 0-2627-6010, 0-2740-7400
(4) ບໍລິສັດ ອະຍຸດທະຍາ ດີເວລລອບເມັ້ນທ໌ ລິສຊິ່ງ ຈຳກັດ (ADLC)	ອີເມວ: dpo-adlc@krungsrileasing.com ທີ່ຢູ່ : ອາຄານກຸງສີເພລີນຈິດທາວເວີ ຊັ້ນ 14 ເລກທີ 550 ຖະໜົນ ເພລີນຈິດ ແຂວງ ລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330 ໂທລະສັບ: 0-2208-2300
(5) ບໍລິສັດ ຫຼັກຊັບຈັດການກອງທຶນ ຈຳກັດ (KSAM)	ອີເມວ: dpo.ksam@krungsri.com ທີ່ຢູ່ : ອາຄານກຸງສີເພລີນຈິດທາວເວີ ຊັ້ນ 1-2 ໂຊນເອຊັ້ນ 12 ແລະ ຊັ້ນ 18 ໂຊນບີ ເລກທີ 898 ຖະໜົນ ເພລີນຈິດ ແຂວງ ລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330 ໂທລະສັບ: 0-2657-5757
(6) ບໍລິສັດ ຫຼັກຊັບ ກຸງສີ ຈຳກັດ (ມະຫາຊົນ) (KSS)	ອີເມວ: dpo.kss@krungsrisecurities.com ທີ່ຢູ່ : ອາຄານເພີນຈິດທາວເວີ ຊັ້ນ 3 ເລກທີ 898 ຖະໜົນເພີນຈິດແຂວງລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330 ໂທລະສັບ: 0-2659-7000
(7) ບໍລິສັດ ກຸງສີ ຟິນໂນເວດ ຈຳກັດ (KFIN)	ອີເມວ: dpo.kfin@krungsri.com ທີ່ຢູ່ : ອາຄານກຸງສີເພລີນຈິດທາວເວີ ຊັ້ນ 17 ແລະ ຊັ້ນ 20 ເລກທີ 550 ຖະໜົນ ເພລີນຈິດ ແຂວງ ລຸມພີນີ ເຂດ ປະທຸມວັນ ກຸງເທບມະຫານະຄອນ 10330
(8) ບໍລິສັດ ກຸງສີ ນິມເບິລ ຈຳກັດ (KSN)	ອີເມວ: dpo.center@krungsrinimble.com ທີ່ຢູ່ : ອາຄາທະນາຄານກຸງສີອະຍຸດທະຍາ ຈຳກັດ (ມະຫາຊົນ) ສຳນັກງານໃຫຍ່ ຊັ້ນ 21 ເລກທີ 1222 ຖະໜົນພະຣາມທີ 3 ແຂວງ ບາງໂພງພາງ ເຂດຍານນາວາ ກຸງເທບມະຫານະຄອນ 10120 ໂທລະສັບ: 0-2208-2849